# ບົດນໍາ

ປື້ມຄູ່ມືສະບັບນີ້ ຖືກປະກອບຂຶ້ນເພື່ອເປັນເອກະສານອ້າງອີງໃຫ້ແກ່ແກ່ຊຸມຊົນທີ່ໄດ້ຮັບການສະໜັບສະໜູນໂຄງການຍ່ອຍດ້ານພື້ນຖານໂຄງລ່າງຈາກ ທລຍ , ໂດຍສະເພາະແມ່ນໂຄງການຍ່ອຍດ້ານວິສະວະກໍາ. ເນື້ອໃນຕ່າງໆໃນປື້ມຄູ່ມືເຫລັ້ມນີ້ສ່ວນໜຶ່ງແມ່ນໄດ້ມາຈາກປະສົບການຕົວຈິງຂອງທີມງານ ທລຍ ທີ່ຈັດຕັ້ງປະຕິບັດ ວຽກງານຮ່ວມກັບຊຸມຊົນຢູ່ໃນພື້ນທີ່ເປົ້າໝາຍຂອງໂຄງການ ໄລຍະທີ I (2003-2011), ສ່ວນໜຶ່ງແມ່ນອີງໃສ່ເນື້ອໃນຈາກປື້ມຄູ່ມືເພື່ອການກໍ່ສ້າງພື້ນຖານໂຄງລ່າງຂະໜາດນ້ອຍ (ກອງທຶນຫລຸດຜ່ອນຄວາມທຸກຍາກ) ແລະ ປື້ມຫົວອື່ນໆທີ່ກ່ຽວຂ້ອງ.

ປື້ມຄູ່ມືເຫລັ້ມນີ້ ມີຈຸດປະສົງເພື່ອສະໜອງຄວາມຮູ້ພື້ນຖານດ້ານການ ຕິດຕາມການກໍ່ສ້າງພື້ນຖານໂຄງລ່າງຂະໜາດນ້ອຍໃຫ້ແກ່ຊຸມຊົນຢູ່ໃນພື້ນທີ່ເປົ້າໝາຍຂອງ ທລຍ. ເພື່ອໃຫ້ມີຄວາມສະດວກ ປື້ມເຫລັ້ມນີ້ໄດ້ແບ່ງອອກເປັນ 3 ພາກ ຄື: ພາກທີ I: ພາກທົ່ວໄປ; ພາກທີ II:ພາກເຕັກນິກການກໍ່ສ້າງ ແລະ ພາກທີ III: ພາກການບັນທຶກ ແລະ ການລາຍງານ, ພ້ອມນັ້ນກໍ່ຍັງມີເອກະສານຊ້ອນທ້າຍຈໍານວນໜຶ່ງ ທີ່ມີຄວາມສໍາຄັນ ແລະ ຈໍາເປັນຕໍ່ວຽກງານດັ່ງກ່າວ ຕື່ມອີກ. ເຖິງຢ່າງໃດກໍ່ຕາມ ປື້ມຄູ່ມືດັ່ງກ່າວນີ້ເປັນສະບັບທໍາອິດທີ່ໄດ້ຮັບການຮິບໂຮມ ແລະ ປັບປຸງຂຶ້ນມາ ໂດຍການມີສ່ວນຮ່ວມຂອງທີມງານວິສະວະກໍາທຸກໆຂັ້ນ ຊຶ່ງມີເປົ້າໝາຍນໍາໃຊ້ສະເພາະຂົງເຂດວຽກງານຂອງ ທລຍ ໂດຍສະເພາະແມ່ນເນັ້ນໃສ່ຊຸມຊົນຜູ້ໄດ້ຮັບຜົນປະໂຫຍດເປັນຫລັກ, ສະນັ້ນ ຈຶ່ງບໍ່ໄດ້ນໍາສະເໜີບັນດາເຕັກນິກ, ວິທີການ ແລະ ເຄື່ອງມືທີ່ທັນສະໃໝສໍາລັບການກໍ່ສ້າງໄວ້ໃນປື້ມເຫລັ້ມນີ້, ແຕ່ໄດ້ນໍາສະເໜີພື້ນຖານການກໍ່ສ້າງແບບປະຖົມປະຖານທີ່ເຄີຍນໍາໃຊ້ກັນມາ ສົມທົບກັບເຕັກນິກທີ່ຈໍາເປັນຈໍານວນໜຶ່ງ ເພື່ອໃຫ້ເໝາະສົມກັບລະດັບຄວາມຮູ້ຂອງຊຸມຊົນເທົ່ານັ້ນ.

ດັ່ງນັ້ນ ໃນພາກປະຕິບັດຕົວຈິງ ຖ້າຫາກມີຂໍ້ຂາດຕົກບົກພ່ອງກ່ຽວກັບເຕັກນິກ ແລະ ວິທີການກໍ່ສ້າງ, ເນື້ອໃນ, ຄໍາສັບ ຫລື ຂໍ້ມູນຕ່າງໆ ທີ່ຈໍາເປັນ ແລະ ເປັນປະໂຫຍດຕໍ່ຜູ້ຊົມໃຊ້ ທີມງານ ທລຍ ກໍ່ຂໍອະໄພມາໃນທີ່ນີ້ດ້ວຍ ແລະ ພວກເຮົາພ້ອມທີ່ຈະຮັບເອົາຄໍາຕໍານິຕິຊົມ, ບົດຮຽນ ແລະ ປະສົບການຈາກບັນດາທ່ານທີ່ມີປະສົບການໃນວຽກງານດັ່ງກ່າວນີ້ດ້ວຍຄວາມຈິງໃຈ, ເພື່ອນໍາມາປັບປຸງ ແລະ ແກ້ໄຂໃຫ້ສົມບູນຂຶ້ນ , ພ້ອມດຽວກັນພວກເຮົາກໍ່ຫວັງຢ່າງຍິ່ງວ່າ ປື້ມຄູ່ມືເຫລັ້ມນີ້ຄົງເປັນປະໂຫຍດໃຫ້ແກ່ບັນດາທ່ານທີ່ນໍາໄປໝູນໃຊ້ເຂົ້າໃນວຽກງານບໍ່ຫລາຍກໍ່ໜ້ອຍ.

ນະຄອນຫລວງວຽງຈັນ, ວັນທີ 24 ມັງກອນ 2014

ຜູ້ອໍານວຍການບໍລິຫານ ທລຍ

ບຸນກວ້າງ ສຸວັນນະພັນ

## ສາລະບານ


ພາກທີ I: ພາກທົ່ວໄປ……………………………………………………………………….1

ບົດທີ 1……………………………………………………………………………1

ຈຸດປະສົງ…………………………………………………………………………1

ເປົ້າໝາຍ…………………………………………………………………………1

ກົງຈັກການຈັດຕັ້ງ………………………………………………………………1

ເງື່ອນໄຂໃນການກຳນົດຈຸຮັບນ້ຳ…………………………………………………1

ໜ້າທີ່ຮັບຜິດຊອບ…………………………………………………………………2

ໂຄງຮ່າງການຈັດຕັ້ງ………………………………………………………………3

ບົດທີ 2……………………………………………………………………………5

ຈຸດປະສົງ…………………………………………………………………………5

ແຫລ່ງທີ່ມາ ແລະ ຂອບເຂດໃນການນຳໃຊ້ເງິນກອງທຶນ……………………………5

ການເກັບຮັກສາເງິນກອງທຶນບົວລະບັດຮັກສາໂຄງການຍ່ອຍ………………………6

ພາກທີ II: ເຕັກນິກພື້ນຖານໃນການຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາໂຄງການຍ່ອຍ……………7

ບົດທີ 3……………………………………………………………………………7

ສ່ວນປະກອບ ແລະ ໜ້າທີ່ຂອງລະບົບຊົນລະປະທານ………………………………7

ບົດທີ 4……………………………………………………………………………11

ສຳຫລວດ ແລະ ເກັບກຳຂໍ້ມູນລະບົບຊົນລະປະທານ………………………………11

ເປີດກອງປະຊຸມເພື່ອວາງແຜນ……………………………………………………11

ຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນ………………………………………12

ເປີດກອງປະຊຸມປະເມີນຜົນ, ຖອດຖອນບົດຮຽນ ແລະ ວາງແຜນໃນລະດູຕໍ່ໄປ………12

ການສົ່ງ ແລະ ແຈກຢາຍນ້ຳໃຫ້ແກ່ເນື້ອທີ່ການຜະລິດ……………………………12

ບົດທີ 5……………………………………………………………………………14

ພາກທີ III: ເອກະສານຊ້ອນທ້າຍ………………………………………………………25

# ພາກທີ I: ພາກທົ່ວໄປ

# ບົດທີ 1

# ຈຸດປະສົງ, ເປົ້າໝາຍ ແລະ ກົງຈັກການຈັດຕັ້ງ

**1. ຈຸດປະສົງ**

ເພື່ອສະໜອງຄວາມຮູ້ພື້ນຖານດ້ານການຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາໂຄງການຍ່ອຍໃຫ້ແກ່ຊຸມຊົນຢູ່ໃນພື້ນທີ່ເປົ້າໝາຍຂອງ ທລຍ.

**2. ເປົ້າໝາຍ**

ເຮັດໃຫ້ຊຸມຊົນສາມາດນຳໃຊ້ຄວາມຮູ້ຈາກການຝຶກອົບຮົມດັ່ງກ່າວເຂົ້າໃນການຄຸ້ມຄອງນຳໃຊ້ ແລະ ບົວລະ ບັດຮັກສາໂຄງການຍ່ອຍ ຂອງເຂົາເຈົ້າໃຫ້ມີປະສິດທິຜົນສູງ ແລະ ນຳໃຊ້ໄດ້ຍາວນານ.

**3. ກົງຈັກການຈັດຕັ້ງ**

**3.1 ທີ່ປຶກສາ**

ແມ່ນອົງການຈັດຕັ້ງທີ່ປະກອບດ້ວຍຕາງໜ້າອຳນາດການປົກຄອງບ້ານ, ເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂອງເມືອງ, ເຊິ່ງມີພາລະບົດບາດໃນການຊີ້ນຳ-ນຳພາ ການພັດທະນາກຸ່ມຜູ້ນຳໃຊ້ນ້ຳໃຫ້ຖືກຕ້ອງ ແລະ ແທດເໝາະກັບແຜນການພັດທະນາເສດຖະກິດ -ສັງຄົມຂອງເມືອງ ເຊັ່ນ: ການຜະລິດ , ອຸດສາກະກຳ, ການຄ້າ, ການບໍລິຫານ ແລະ ອື່ນອື່ນ ແນໃສ່ຊຸກຍູ້ການນຳໃຊ້ ແລະ ບົວລະບັດໂຄງການຍ່ອຍ ທີ່ມອບໃຫ້ຊຸມຊົນເປັນຜູ້ປົກປັກຮັກສາຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະ ລັດຖະບານວາງອອກ.

**3.2 ກຸ່ມຜູ້ນຳໃຊ້ນ້ຳ:**

ແມ່ນອົງການຈັດຕັ້ງ ທີ່ຖືກສ້າງຕັ້ງຂຶ້ນຕາມທິດທາງນະໂຍບາຍຂອງພັກ ແລະ ລັດຖະບານ , ມີໜ້າທີ່ບໍລິຫານການໃຊ້ນ້ຳ ແລະ ປະຕິບັດກິດຈະກຳຕ່າງໆຢູ່ໃນໂຄງການຍ່ອຍ ເພື່ອແນໃສ່ເຮັດໃຫ້ໂຄງການຍ່ອຍມີຄວາມຍືນຍົງ ແລະ ສ້າງຄວາມເຂັ້ມແຂງຕາມນະໂຍບາຍແບ່ງຂັ້ນຄຸ້ມຄອງ. ຊຶ່ງມີໂຄງຮ່າງການຈັດຕັ້ງ, ພາລະບົດບາດ, ກົດລະບຽບ, ມີຄວາມສະເໝີພາບພາຍໃນກຸ່ມ, ມີແບບແຜນວິທີເຮັດວຽກຢ່າງຈະແຈ້ງ, ມີການລາຍງານ, ມີຄວາມໂປ່ງໃສສາມາດກວດສອບໄດ້ ພາຍໃຕ້ການຊີ້ນຳ-ນຳພາຂອງຄະນະກຸ່ມຜູ້ນຳໃຊ້ນ້ຳ.

**3.3 ຈຸຜູ້ນຳໃຊ້ນ້ຳ**

ຈຸຜູ້ນຳໃຊ້ນ້ຳແມ່ນຖືກສ້າງຕັ້ງຂຶ້ນໂດຍຄະນະກຸ່ມພາຍໃຕ້ການເຫັນດີເປັນເອກະພາບຂອງສະມາຊິກຜູ້ນຳໃຊ້ນ້ຳ, ເພື່ອເປັນຫົວໜ່ວຍຈັດຕັ້ງປະຕິບັດຂອງກຸ່ມໃນການບໍລິຫານງານຕາມຄອງເໝືອງ ທີ່ໄດ້ຮັບນ້ຳຮ່ວມກັນ ເຊິ່ງມີຮູບແບບການບໍລິຫານງານແບບງ່າຍດາຍໂດຍປະກອບດ້ວຍຫົວໜ້າຈຸ ແລະ ຮອງຈຸ.

**4. ເງື່ອນໄຂໃນການກຳນົດຈຸຮັບນ້ຳ**

- ໃນຈຸຮັບນ້ຳໜຶ່ງໆ ຕ້ອງມີສະມາຊິກໜ້ອຍສຸດ 5 ຄອບຄົວ.
- ລະບົບຊົນລະປະທານຂະໜາດນ້ອຍບໍ່ຄວນເກີນ 15 ຈຸ (ນອກຈາກກໍລະນີທີ່ມີຄວາມຈຳເປັນ).
- ສະມາຊິກພາຍໃນຈຸຕ້ອງແມ່ນຜູ້ທີ່ມີເນື້ອທີ່ຢູ່ໃກ້ກັນເພື່ອສະດວກໃນການສົ່ງນ້ຳ.
- ສະມາຊິກຂອງຈຸຕ້ອງຢູ່ໃນຄອງຊອຍ, ອາຄານຍົກນ້ຳ, ຄອງລະບາຍນ້ຳ ແລະ ອື່ນໆໃນບໍລິເວນດຽວກັນ.

5. ໜ້າທີ່ຮັບຜິດຊອບ

**ກ. ໜ້າທີ່ຂອງປະທານ**

- ກຳນົດຫົວຂໍ້ປະຊຸມ, ຮຽກປະຊຸມ, ເປັນປະທານກອງປະຊຸມຕ່າງໆ ທີ່ກ່ຽວຂ້ອງກັບກຸ່ມ , ແຈ້ງການປະຊຸມໃຫ້ແຕ່ລະຈຸຮັບນໍ້າເພື່ອນຳໄປເຜີຍແຜ່ໃຫ້ສະມາຊິກຊາບ ແລະ ເຂົ້າຮ່ວມທ່ອງທັນຕາມເວລາທີ່ກຳນົດໄວ້.
- ອະນຸມັດແຜນການໃຊ້ຈ່າຍຕ່າງໆ ຂອງກຸ່ມທີ່ໄດ້ເອກະພາບກັບສະມາຊິກທັງໝົດແລ້ວ.
- ກວດກາທຸກໆການໃຊ້ຈ່າຍຂອງກຸ່ມ.
- ຊອກຫາແຫລ່ງທຶນມາສົມທົບໃສ່ກອງທຶນບົວລະບັດຮັກສາລະບົບຊົນລະປະ ທານຂອງຕົນ.
- ສ້າງຄວາມສາມັກຄີ ແລະ ຄວາມເປັນເອກະພາບພາຍໃນກຸ່ມ.

**ຂ. ໜ້າທີ່ຂອງຮອງປະທານ**

- ເຮັດໜ້າທີ່ແທນປະທານ ກໍລະນີປະທານບໍ່ຢູ່ ຫລື ຄາວຽກອັນຈຳເປັນ.
- ຊີ້ນຳວຽກບັນຊີ ລາຍຮັບ-ລາຍຈ່າຍ ແລະ ກວດກາຄວາມຖືກຕ້ອງກ່ຽວກັບວຽກການເງິນຂອງກຸ່ມ.
- ຕິດຕາມແຜນການເຮັດວຽກຂອງກຸ່ມຢ່າງໃກ້ຊິດເພື່ອຮັບປະກັນໃຫ້ວຽກງານທີ່ກຳນົດໄວ້ຖືກຈັດຕັ້ງປະຕິບັດ.
- ລະດົມໃຫ້ມີການບົວລະບັດຮັກສາໂຄງການຍ່ອຍຢ່າງຕໍ່ເນື່ອງ.

**ຄ. ໜ້າທີ່ຂອງຜູ້ຮັບຜິດຊອບບັນຊີ - ການເງິນ**

- ຮັກສາປື້ມການເຄື່ອນໄຫວເງິນສົດ ແລະ ປື້ມບັນຊີທະນາຄານ.
- ສະຫລຸບລາຍງານ ລາຍຮັບ-ລາຍຈ່າຍ ປະຈຳເດືອນ, ໄຕມາດ ແລະ ປະຈຳປີ, ພ້ອມທັງເຮັດເສດຖະກິດເປີດເຜີຍຕໍ່ກອງປະຊຸມກຸ່ມຢ່າງເປັນປົກກະຕິ.
- ທວງໜີ້ສິນຕ່າງໆຈາກສະມາຊິກເຊັ່ນ: ຄ່ານໍ້າຊົນລະປະທານປະຈຳລະດູການຜະລິດ ແລະ ອື່ນໆ.
- ຂຶ້ນແຜນງົບປະມານໃຊ້ຈ່າຍ ແລະ ເຊັນຢັ້ງຢືນເບື້ອງຕົ້ນກ່ອນສົ່ງໃຫ້ປະທານກຸ່ມກວດກາອະນຸມັດ.
- ຮ່າງລະບຽບ ແລະ ຫລັກການການໃຊ້ເງິນຂອງກຸ່ມ ເພື່ອຕົກລົງຮັບຮອງເອົາຢູ່ກອງປະຊຸມ.

**ງ. ໜ້າທີ່ຂອງຜູ້ຮັບຜິດຊອບຄັງເງິນສົດ**

- ຮັກສາເງິນສົດຂອງກຸ່ມໃຫ້ມີຄວາມປອດໄພ.
- ຮັກສາເອກະສານຢັ້ງຢືນການໃຊ້ຈ່າຍຕ່າງໆ ຂອງກຸ່ມເພື່ອສະດວກໃນການກວດກາ.
- ບັນທຶກບັນຊີເງິນສົດທີ່ສະມາຊິກມາເສຍພັນທະເຂົ້າກອງທຶນບົວລະບັດຮັກສາໂຄງການຍ່ອຍຂອງແຕ່ລະຈຸ.
- ຮັບຜິດຊອບ ການຝາກ - ຖອນເງິນສົດຂອງກຸ່ມ ຈາກທະນາຄານ.
- ເບີກຈ່າຍເງິນສົດຕາມທີ່ຄະນະກຸ່ມໄດ້ຕົກລົງເຫັນດີ.
- ເຮັດໜ້າທີ່ແທນຜູ້ຮັບຜິດຊອບບັນຊີ - ການເງິນ ກໍລະນີທີ່ຜູ້ກ່ຽວບໍ່ຢູ່ ຫລື ມີວຽກອັນຈຳເປັນ.

**ຈ. ໜ້າທີ່ຂອງຜູ້ຮັບຜິດຊອບວິຊາການ**

- ຮັກສາອຸປະກອນການບົວລະບັດຮັກສາໂຄງການຍ່ອຍບໍ່ໃຫ້ເສຍຫາຍ ຫລື ເສື່ອມຄຸນນະພາບ.
- ຂຶ້ນແຜນການເຄື່ອນໄຫວວຽກງານທີ່ຫາກ່ຽວຂ້ອງດ້ານວິຊາການພາຍໃນກຸ່ມ.
- ຕິດຕາມ ແລະ ກວດກາໂຄງການຍ່ອຍ ຢ່າງເປັນປົກກະຕິ ເພື່ອລາຍງານ ແລະ ສະເໜີແຜນບົວລະບັດຮັກສາໃນກໍລະນີທີ່ເຫັນວ່າມີຄວາມເສຍຫາຍເກີດຂຶ້ນ.

- ນຳພາສະມາຊິກສ້ອມແປງໂຄງການຍ່ອຍ ເມື່ອມີການເປ່ເພເກີດຂຶ້ນ.
- ປະສານງານກັບຫ້ອງການທີ່ກ່ຽວຂ້ອງ ເພື່ອຂໍຄຳປຶກສາທາງດ້ານວິຊາການ.
- ບັນທຶກລາຍລະອຽດຂອງໜ້າວຽກ ແລະ ຜູ້ເຂົ້າຮ່ວມ ເມືອມີການບູລະນະສ້ອມແປງໂຄງການຍ່ອຍ.
- ຮ່າງແຜນການດຳເນີນງານຂອງກຸ່ມ ເພື່ອສະເໜີຕໍ່ກອງປະຊຸມໃຫຍ່.

**ສ. ໜ້າທີ່ຂອງຈຸຮັບນໍ້າ**

- ສະເໜີແຜນການຜະລິດປະຈຳລະດູການ.
- ປະຕິບັດແຜນການບົວລະບັດຮັກລະບົບຊົນລະປະທານ.
- ເປີດ-ປິດອາຄານຕ່າງໆຕາມຄອງເໝືອງໃນຂອບເຂດຈຸຂອງຕົນເອງ.
- ຕິດຕາມກວດກາການນຳໃຊ້ນໍ້າຂອງສະມາຊິກພາຍໃນຈຸຂອງຕົນ.
- ກວດກາ ແລະ ລາຍງານສະພາບລະບົບຊົນລະປະທານໃນຂອບເຂດຮັບຜິດຊອບຂອງຕົນ.
- ຮັບແຈ້ງຄວາມເສຍຫາຍຈາກສະມາຊິກ.
- ເກັບເງິນເຂົ້າກອງທຶນບົວລະບັດຮັກສາໂຄງການຍ່ອຍ.

**ຊ. ສະມາຊິກ**

- ແຈ້ງເນື້ອທີ່ທຳການຜະລິດ.
- ປະຕິບັດແຜນການບົວລະບັດຮັກລະບົບຊົນລະປະທານ.
- ເຂົ້າຮ່ວມການສຳຫລວດກວດກາ ແລະ ວາງແຜນການຜະລິດປະຈຳລະດູການ.
- ແຈ້ງຄວາມເສຍຫາຍໃຫ້ຈຸຮັບນໍ້າ.
- ເສຍເງິນເຂົ້າກອງທຶນບົວລະບັດຮັກສາໂຄງການຍ່ອຍ.
- ເຂົ້າຮ່ວມກອງປະຊຸມຕ່າງໆຂອງກຸ່ມ.

**6. ໂຄງຮ່າງການຈັດຕັ້ງຂອງກຸ່ມ**

ປະກອບດ້ວຍ: ທີ່ປຶກສາ, ຄະນະກຸ່ມ, ຈຸຮັບນໍ້າ ແລະ ສະມາຊິກ ທີ່ໄດ້ຮັບຜົນປະໂຫຍດຈາກການໃຊ້ນໍ້າ. ຊຶ່ງແມ່ນຖືກຄັດເລືອກໂດຍຊາວບ້ານດ້ວຍຄວາມເຫັນເປັນເອກະພາບ.

# ໂຄງຮ່າງການຈັດຕັ້ງຂອງກຸ່ມຜູ້ນຳໃຊ້ນ້ຳ



# ບົດທີ່ 2
# ກອງທຶນບົວລະບັດໂຄງການຍ່ອຍ ແລະ ການຄຸ້ມຄອງບໍລິຫານດ້ານການເງິນ

1. **ຈຸດປະສົງ**

- ເພື່ອສ້າງຄວາມເຂັ້ມທາງດ້ານການຄຸ້ມຄອງບໍລິຫານດ້ານການເງິນໃຫ້ກັບຊຸມຊົນ.
- ເພື່ອເຮັດໃຫ້ການນຳໃຊ້ເງິນຂອງເຂົາເຈົ້າຖືກຕ້ອງຕາມລະບຽບ, ຫລັກການ, ມີຄວາມໂປ່ງ ແລະ ສາມາດກວດສອບໄດ້.
- ເພື່ອຮັບປະກັນໃຫ້ມີກອງທຶນບູລະນະສ້ອມແປງ ແລະ ເຮັດໃຫ້ໂຄງການຍ່ອຍມີຄວາມຍືນຍົງ.
- ເພື່ອເຮັດໃຫ້ເງິນກອງທຶນຂອງເຂົາເຈົ້າມີການເຕີບໃຫຍ່ຂະຫຍາຍໂຕ.

**2. ແຫລ່ງທີ່ມາ ແລະ ຂອບເຂດໃນການນຳໃຊ້ເງິນກອງທຶນ**

**2.1 ແຫລ່ງທີ່ມາຂອງເງິນກອງທຶນ**

- ເງິນກອງທຶນບົວລະບັດຮັກສາໂຄງການຍ່ອຍ ແມ່ນໄດ້ມາຈາກສະມາຊິກຜູ້ນຳໃຊ້ນ້ຳແຕ່ລະຄອບຄົວທີ່ໄດ້ຮັບຜົນປະໂຫຍດຈາກໂຄງການຍ່ອຍເຊິ່ງເປັນພັນທະທີ່ຕ້ອງໄດ້ຈ່າຍ ເພື່ອເປັນເອົາມານຳໃຊ້ກໍລະນີຈຳເປັນ.
- ສຳລັບການກຳນົດຄ່ານ້ຳຊົນລະປະທານ ຈະອີງຕາມຄວາມເໝາະສົມ ແລະ ຄວາມສາມາດຂອງແຕ່ລະຄອບຄົວ, ພາຍໃຕ້ການຕົກລົງເຫັນດີເປັນເອກະພາບຂອງຊຸມຊົນໃນທ້ອງຖິ່ນ.

**2.2 ຂອບເຂດໃນການນຳໃຊ້ເງິນກອງທຶນ**

- ເປັນຄ່າຕອບແທນໃຫ້ແກ່ຄະນະຮັບຜິດຊອບຄຸ້ມຄອງໂຄງການຍ່ອຍ ແລະ ຄ່າບໍລິຫານຕ່າງໆ.
- ເປັນຄ່າໃຊ້ຈ່າຍໃນການບົວລະບັດຮັກສາ, ສ້ອມແປງລະບົບຊົນລະປະທານ.
- ເປັນຄ່າໃຊ້ຈ່າຍໃນການຂະຫຍາຍກິດຈະການຊົນລະປະທານ (ຖ້າມີ), ລາຍລະອຽດຢູ່ໃນຕາຕະລາງລຸ່ມນີ້:

| ລ/ດ | ເປີເຊັນ (%) | ລາຍລະອຽດຂອງຄ່າໃຊ້ຈ່າຍ |
|---|---|---|
| 1 | 70 % | ສຳລັບເປັນທຶນຮອນໄວ້ບູລະນະສ້ອມແປງໂຄງກາຍ່ອຍເມື່ອມີຄວາມຈຳເປັນ |
| 2 | 20 % | ສຳລັບເປັນຄ່າຕອບແທນໃຫ້ແກ່ຄະນະຮັບຜິດຊອບຄຸ້ມຄອງໂຄງການຍ່ອຍ |
| 3 | 10 % | ສຳລັບເປັນເງິນບໍລິຫານເຊັ່ນ: ຊື້ອຸປະກອນຂີດຂຽນ , ຄ່າເດີນທາງໄປພົວພັນວຽກງານ ແລະ ເປັນຄ່າໃຊ້ຈ່າຍອື່ນໆ... |

***ໝາຍເຫດ:***

***- ສຳລັບການຄຸ້ມຄອງບໍລິຫານດ້ານການເງິນຂອງກຸ່ມ ສະເໜີໃຫ້ປະຕິບັດຕາມການຝຶກອົບຮົມກ່ຽວ ກັບການ ບໍລິຫານການເງິນທຸກຂັ້ນຕອນ. (ລາຍລະອຽດຂອງເອກະສານບໍລິຫານດ້ານການເງິນຢູ່ໃນເອກະສານແນບທ້າຍ).***

***- ຄະນະຮັບຜິດຊອບໂຄງການຍ່ອຍຕ້ອງໄດ້ເຂົ້າຮ່ວມຝຶກອົບຮົມວຽກງານຄຸ້ມຄອງບໍລິຫານດ້ານການເງິນພ້ອມກັບການຝຶກອົບຮົມການເງິນຕື່ມອີກ***

### 3. ການເກັບຮັກສາເງິນກອງທຶນບົວລະບັດຮັກສາໂຄງການຍ່ອຍ

ກໍລະນີທີ່ເງິນສົດຂອງກຸ່ມຫລາຍຂຶ້ນຕ້ອງໄປຝາກໄວ້ຢູ່ທະນາຄານ, ບໍ່ໃຫ້ເອົາໄວ້ນຳບຸກຄົນ ບໍ່ວ່າຈະດ້ວຍວິທີໃດກໍ່ຕາມ, ອີກດ້ານໜຶ່ງເມື່ອຝາກເງິນຢູ່ທະນາຄານ ກໍ່ຈະໄດ້ຮັບດອກເບ້ຍນຳອີກ. ການເປີດບັນຊີຕ້ອງໃສ່ຊື່ຄະນະຮັບຜິດຊອບກຸ່ມຜູ້ນຳໃຊ້ນໍ້າໂຄງການຍ່ອຍທີ່ກ່ຽວຂ້ອງ, ບໍ່ໃຫ້ໃສ່ຊື່ເປັນບຸກຄົນ ແລະ ເວລາໄປຖອນເງິນຕ້ອງມີລາຍເຊັນຢ່າງໜ້ອຍ 4 ຄົນຈຶ່ງຖອນໄດ້ ເພື່ອຄວາມປອດໄພ, ໂປ່ງໃສ ແລະ ກວດສອບໄດ້.

*ຕົວຢ່າງ: ປື້ມບັນຊີ ທະນາຄານຂອງກຸ່ມຜູ້ນຳໃຊ້ນໍ້າຊົນລະປະທານ ຂອງບ້ານຫລັກ 25, ເມືອງປະ ທຸມພອນ, ແຂວງຈຳປາສັກ. ຜູ້ທີ່ສາມາດຖອນເງິນຢູ່ທະນາຄານໄດ້ມີ4 ຄົນຄື: ນາງ ສິດໃສ ຜູ້ຮັບຜິດຊອບບັນຊີ-ການເງິນກຸ່ມ, ນາງ ບົວຄຳ ຜູ້ຮັບຜິດຊອບຄັງເງິນສົດຂອງກຸ່ມ ທ້າວ ຕຸ້ມ ຜູ້ຮັບ ຜິດຊອບວິຊາການຂອງກຸ່ມ ແລະ ທ້າວ ບົວພັນ ປະທານກຸ່ມ.*

# ພາກທີ່ II: ເຕັກນິກພື້ນຖານໃນການຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາໂຄງການຍອຍ

## ບົດທີ່ 3
## ຄວາມຮູ້ພື້ນຖານກ່ຽວກັບລະບົບຊົນລະປະທານ

### 1. ສ່ວນປະກອບ ແລະ ໜ້າທີ່ຂອງລະບົບຊົນະລະປະທານ

ລະບົບຊົນລະປະທານປະກອບດ້ວຍ 4 ໂຄງສ້າງທີ່ອານມອຍດັ່ງນີ້: (1) ຫົວງານ (ອາດຈະແມ່ນ: ເຂື່ອນ, ຝາຍນ້ຳລົ້ນ, ຈັກສູບນ້ຳ, ປະຕູນ້ຳ ແລະ ອື່ນໆ); (2) ຄອງເໝືອງ; (3) ອາຄານຕາມຄອງເໝືອງ; (4) ຄອງລະບາຍນ້ຳ.

**ຕາຕະລາງສ່ວນປະກອບ ແລະ ໜ້າທີ່ຂອງລະບົບຊົນະລະປະທານ**

| ລ/ດ | ຊື່ຂອງສ່ວນປະກອບ | ໜ້າທີ່ | ຮູບປະກອບ |
|---|---|---|---|
| 1 | ຫົວງານ (ເວົ້າສະເພາະແຕ່ຝາຍນ້ຳລົ້ນ) | ເກັບກັກ, ຄວບຄຸມ ແລະ ບັງຄັບນ້ຳໃນແຫລ່ງນ້ຳ ເພື່ອເຮັດໃຫ້ລະດັບ ແລະ ບໍລິມາດຂອງນ້ຳມີຄວາມສົມດູນຕາມແຕ່ລະລະດູການ (ໂດຍສະເພາະແມ່ນລະດູແລ້ງທີ່ມີນ້ຳໜ້ອຍ) ເພື່ອສະໜອງນ້ຳໃຫ້ຄອງເໝືອງລຳລຽງໄປຫົດເນື້ອທີ່ການຜະລິດກະສິກຳຢ່າງພຽງພໍກັບຄວາມຕ້ອງການແຕ່ລະຊ່ວງເວລາການຈະເລີນເຕີບໂຕຂອງພືດທີ່ປູກ. |  |
| 2 | ອ່າງຜ່ອນກຳລັງນ້ຳ | ປ້ອງກັນແຮງນ້ຳທີ່ໄຫລຜ່ານປະຕູເອົານ້ຳເຂົ້າຄອງໝືອງ, ທ້າຍອາຄານຕ່າງໆ ເຊັ່ນ: ທ້າຍອາຄານຕາດໂຕນ, ທ້າຍອາຄານທໍ່ລົດລະດັບນ້ຳ, ທ້າຍອາຄານທໍ່ລອດ ແລະ ທ້າຍອາຄານທ້າຍຄອງເໝືອງ ເພື່ອບໍ່ໃຫ້ເກີດຄວາມເສຍຕໍ່ໂຄງສ້າງຂອງອາຄານດັ່ງກ່າວ. |  |
| 3 | ພາກສ່ວນປ້ອງກັນການກັດເຊາະດ້ານໜ້າ ແລະ ຫລັງຝາຍ | ປ້ອງກັນການກັດເຊາະຈາກແຮງນ້ຳທີ່ໄຫລຜ່ານໃນຊ່ອງຕໍ່ລະຫວ່າງດິນ ແລະ ໂຕຝາຍ ທັງດ້ານໜ້າ ແລະ ດ້ານຫລັງໃຫ້ມີຄວາມປອດໄພ. |  |

| | | | |
|---|---|---|---|
| 4 | ປະຕູເອົານ້ຳເຂົ້າຄອງເໝືອງ | ຄວບຄຸມ ແລະ ບັງຄັບນ້ຳໃຫ້ໄຫລເຂົ້າຄອງເໝືອງໃນປະລິມານທີ່ເໝາະສົມກັບຄວາມຕ້ອງການຂອງເນື້ອທີ່ທຳການຜະລິດ, ປ້ອງກັນບໍ່ໃຫ້ນ້ຳໄຫລລົ້ນສັນຄອງເໝືອງຊຶ່ງຈະເຮັດໃຫ້ຄອງເໝືອງເປ່ເພ. |  |
| 3 | ປະຕູລະບາຍຊາຍ | ຄວບຄຸມ ແລະ ບັງຄັບນ້ຳໃຫ້ໄຫລເຂົ້າຄອງເໝືອງໃນປະລິມານທີ່ເໝາະສົມກັບຄວາມຕ້ອງການຂອງເນື້ອທີ່ທຳການຜະລິດ, ລະບາຍຕະກອນທີ່ໄຫລມາຕາມນ້ຳອອກຈາກໜ້າຝາຍ ແລະ ລະບາຍນ້ຳອອກຈາກໜ້າຝາຍເພື່ອບໍ່ໃຫ້ຝາຍຮັບນ້ຳໜັກຫລາຍເກີນຄວາມສາມາດ. |  |
| 4 | ຄອງເໝືອງ | ລຳລຽງ ແລະ ສະໜອງນ້ຳໃຫ້ເນື້ອທີ່ການຜະລິດໂດຍທີ່ດຳເນີນໄປຕາມແຜນການສົ່ງ ແລະ ແຈກຢາຍນ້ຳຕາມກຳນົດເວລາ ແລະ ຄວາມຕ້ອງການຂອງການປູກພືດຕະຫລອດລະດູການຜະລິດ. |  |
| 5 | ອາຄານຕາມຄອງເໝືອງ | | |
| 5.2 | ອາຄານແບ່ງນ້ຳ | ແບ່ງນ້ຳທີ່ລຳລຽງມາຈາກຄອງເໝືອງແມ່ (ຄອງເໝືອງໃຫຍ່) ໃຫ້ເຂົ້າໄປຫາຄອງເໝືອງສາຍຕ່າງໆຕາມແຜນການສົ່ງ ແລະ ແຈກຢາຍນ້ຳ ເພື່ອຮັບປະກັນໃຫ້ເນື້ອທີ່ການຜະລິດໄດ້ຮັບນ້ຳພຽງພໍກັບຄວາມຕ້ອງການ ໂດຍການເປີດ ຫລື ປິດປະຕູນ້ຳຂອງຄອງເໝືອງເສັ້ນໃດນຶ່ງ ເພື່ອໝູນວຽນນ້ຳໃຫ້ໄປອີກຄອງນຶ່ງ. |  |
| 5.3 | ອາຄານຍົກນ້ຳ | ຍົກລະດັບນ້ຳໃນຄອງເໝືອງໃຫ້ສູງຂຶ້ນ ເພື່ອສະດວກໃນການສົ່ງນ້ຳໃຫ້ເນື້ອທີ່ການຜະລິດ ພ້ອມນັ້ນກໍ່ເພື່ອເຮັດໃຫ້ການຄວບຄຸມຮອບວຽນການສົ່ງ ແລະ ແຈກຢາຍນ້ຳສະດວກຂຶ້ນ. |  |

| | | | |
|---|---|---|---|
| 5.4 | ອາຄານເອົານ້ຳເຂົ້ານາ | ຮັບນ້ຳຈາກຄອງເໝືອງເພື່ອສົ່ງຕໍ່ໃຫ້ຄອງຄູນາ ຫລື ສົ່ງເຂົ້າຫາເນື້ອທີ່ການຜະລິດໂດຍກົງ ໂດຍການເປີດ ຫລື ປິດປະຕູນ້ຳ. |  |
| 5.5 | ອາຄານທໍ່ລອດທາງ | ລຳລຽງນ້ຳໃນຄອງເໝືອງລອດທາງເບື້ອງນຶ່ງໄປອີກເບື້ອງນຶ່ງ ໂດຍທີ່ບໍ່ເຮັດໃຫ້ເສັ້ນທາງມີຄວາມເສຍຫາຍ ຫລື ກີດຂວາງການສັນຈອນ. |  |
| 5.6 | ອາຄານຂົວຂ້າມຄອງເໝືອງ | ອຳນວຍຄວາມສະດວກໃນການເດີນທາງໄປ-ມາຂອງຊຸມຊົນ ທີ່ນຳໃຊ້ສັນຄອງເໝືອງເພື່ອໄປຫາເນື້ອທີ່ການຜະລິດ, ພ້ອມນັ້ນກໍ່ຍັງປ້ອງກັນບໍ່ໃຫ້ຄອງເໝືອງເປ່ເພຍ້ອນການຂຶ້ນລົງຄອງເໝືອງຂອງສັດລ້ຽງ. |  |
| 5.7 | ອາຄານລະບາຍນ້ຳຂ້າງຄອງເໝືອງ | ລະບາຍນ້ຳອອກຈາກຄອງເໝືອງໃນກໍລະນີທີ່ມີຝົນຕົກໜັກ ຫລື ເວລາທີ່ປະລິມານນ້ຳໃນຄອງເໝືອງຫລາຍເກີນຄວາມຕ້ອງການເນື່ອງຈາກການສົ່ງນ້ຳທີ່ຜິດພາດ. |  |
| 5.8 | ອາຄານທໍ່ລອດເໝືອງ | ລະບາຍນ້ຳອອກຈາກເນື້ອທີ່ການຜະລິດໃຫ້ລົງສູ່ຄອງລະບາຍນ້ຳ ໃນກໍລະນີທີ່ມີຝົນຕົກໜັກ ຫລື ການສົ່ງນ້ຳຜິດພາດ. |  |

| | | | |
|---|---|---|---|
| 5.9 | ອາຄານທ້າຍຄອງເໝືອງ | ປ້ອງກັນການກັດເຊາະຂອງນ້ຳເວລາໄຫລອອກຈາກຄອງດາດ, ອັດປະຕູນ້ຳເພື່ອສົ່ງນ້ຳໃຫ້ເນື້ອທີ່ນາຢູ່ທ້າຍຄອງເໝືອງ. |  |
| 6 | ຄອງລະບາຍນ້ຳ | ລະບາຍນ້ຳທີ່ເຫລືອຈາກເນື້ອທີ່ການຜະລິດ ຫລືໃນກໍລະນີທີ່ມີຝົນຕົກໜັກ ໃຫ້ລົງສູ່ບ່ອນຕ່ຳ ຫລືແຫລ່ງນ້ຳ ເພື່ອຮັກສາລະດັບຄວາມສົມດູນຂອງນ້ຳໃນໄຮ່ນາ ແລະ ເຮັດໃຫ້ເກີດມີຂະບວນການແລກປ່ຽນທາດເຄມີເຊິ່ງເຮັດໃຫ້ພືດເຕີບໃຫຍ່ຂະຫຍາຍໂຕໄດ້ດີ. |  |

# ບົດທີ່ 4
# ວິທີການສ້າງແຜນການຜະລິດປະຈຳປີ ຫລື ລະດູການ
# ຂອງຊຸມຊົນ

1. **ສຳຫຼວດ ແລະ ເກັບກຳຂໍ້ມູນລະບົບຊົນລະປະທານ**

**1.1 ສຳຫລວດ ເກັບກຳຂໍ້ມູນຝາຍນ້ຳລົ້ນ:**

ກວດກາສະພາບຢ່າງລະອຽດ, ກໍລະນີທີ່ມີການເປ່ເພ ເສຍຫາຍ ຫລື ມີສິ່ງຜິດປົກກະຕິເກີດຂຶ້ນຕ້ອງເກັບກຳສະພາບ, ລາງານ ແລະ ວາງແຜນສ້ອມແປງໃຫທັນເວລາ. ***(ນຳໃຊ້ແບບຟອມເກັບກຳ, ວິເຄາະ ແລະ ແກ້ໄຂບັນຫາ ໃນເອກະສານຊ້ອນທ້າຍ 2).***

**1.2 ສຳຫລວດ ເກັບກຳຂໍ້ມູນຄອງເໝືອງ ອາຄານຕາມຄອງເໝືອງ ແລະ ຄອງລະບາຍ:**

ກວດກາທົ່ວລະບົບຄອງເໝືອງ ແລະ ຄອງລະບາຍ ເພື່ອເກັບກຳສະພາບການເປ່ເພ ເສຍຫາຍທີ່ເກີດຂຶ້ນ, ຈາກນັ້ນກໍ່ບັນທຶກຂໍ້ມູນເຂົ້າໃນແບບຟອມເກັບກຳຂໍ້ມູນພາກສະໜາມ. ***(ແບບຟອມເກັບກຳ, ວິເຄາະ ແລະ ແກ້ໄຂບັນຫາ ສຳລັບຄອງເໝືອງ ແລະ ອາຄານ ເອກະສານຊ້ອນທ້າຍ 3).***

**1.3 ເກັບກຳຂໍ້ມູນເນື້ອທີ່ການຜະລິດ:**

ເກັບກຳຈຳນວນສະມາຊິກ ແລະ ເນື້ອທີ່ທຳການຜະລິດໃນລະດູການຢ່າງລະອຽດ, ທັງນີ້ເພື່ອສະດວກໃນການວາງແຜນການສະໜອງນ້ຳ ແລະ ຄິດໄລ່ຄ່ານ້ຳຊົນລະປະທານ ຂອງແຕ່ລະຄອບຄົວໃຫ້ຖືກຕ້ອງ ແລະ ຍຸດຕິທຳ. ***(ແບບຟອມເກັບກຳເນື້ອທີ່ການຜະລິດປະຈຳລະດູການ(ເອກະສານແນບທ້າຍ 5).***

2 **ເປີດກອງປະຊຸມເພື່ອວາງແຜນການ**

**2.1 ວາງແຜນການສ້ອມແປງ (ກໍລະນີທີ່ມີການເປ່ເພ):** ສັງລວມການເປ່ເພເສຍຫາຍ ສະເໜີຕໍ່ກອງປະຊຸມເພື່ອວາງແຜນຢ່າງເປັນເອກະພາບເຊັ່ນ: ຈະສ້ອມແປງຈຸດໃດກ່ອນ , ໃຊ້ອຸປະກອນຫຍັງແດ່, ແຮງງານເທົ່າໃດ, ເປັນເງິນເທົ່າໃດ, ມີການພົວພັນກັບພາກສ່ວນໃດ, (ຖ້າການສ້ອມແປງຕ້ອງການເຕັກນິກສູງຄວນພົວພັນກັບຂະແໜງການກ່ຽວຂ້ອງເພື່ອຂໍຄຳແນະນຳດ້ານວິຊາການ).

**2.2 ວາງແຜນການສົ່ງ ແລະ ແຈກຢາຍນ້ຳ:** ການສົ່ງ ແລະ ແຈກຢາຍ ນ້ຳແມ່ນອີງໃສ່ເນື້ອທີ່ທຳການຜະລິດຂອງສະມາຊິກທັງໝົດໃນລະດູນັ້ນ ມາເປັນຂໍ້ມູນຄິດໄລ່ຄວາມຕ້ອງການ ແລະ ຮອບວຽນການສົ່ງນ້ຳຢູ່ແຕ່ລະສາຍຄອງ (ກໍລະນີນ້ຳໃນແຫລ່ງນ້ຳມີໜ້ອຍຊຶ່ງບໍ່ສາມາດສົ່ງນ້ຳໃຫ້ເນື້ອທີ່ການຜະລິດພ້ອມກັນໄດ້, ແຕ່ຖ້າແຫລ່ງນ້ຳມີນ້ຳພຽງພໍແມ່ນສົ່ງນ້ຳໃຫ້ເນື້ອທີ່ການຜະລິດພ້ອມກັນ).

**2.3 ວາງແຜນການບົວລະບັດຮັກສາ:** ການົດ ແລະ ຈັດລຽງ ຄວາມສຳຄັນໜ້າວຽກທີ່ຈະທຳການບົວລະບັດຮັກສາ, ສະຖານທີ່, ເວລາ, ວິທີການ, ອຸປະກອນ, ຄາດຄະເນງົບປະມານ. ຈາກນັ້ນກໍ່ເຕົ້າໂຮມສະມາຊິກທັງໝົດ ເພື່ອຈັດແບ່ງຄວາມຮັບຜິດຊອບ, ແຕ່ລະຈຸ ເພື່ອທຳຄວາມເຂົ້າໃຈກັນຢ່າງລະອຽດ ແລະ ເລີ້ມລົງມືຈັດຕັ້ງປະຕິບັດ.

**2.4 ວາງແຜນການເກັບເງິນຄ່ານ້ຳຊົນລະປະທານ:** ການເກັບເງິນຄ່ານ້ຳຊົນລະປະທານ ອີງໃສ່ເນື້ອທີ່ຕົວຈິງທີ່ສະມາຊິກທຳການຜະລິດໃນລະດູນັ້ນ ດ້ວຍການຄິດໄລ່ຕາມອັດຕາທີ່ກົມຊົນລະປະທານ , ກະຊວງກະສິກຳ ແລະ ປ່າໄມ້ວາງອອກຄື: ສຳລັບນາ 150 Kg ເຂົ້າເປືອກ/ha/ປີ; ໜອງປາ 500 Kg ເຂົ້າເປືອກ/ha/ປີ ແລະ ສວນ 75 Kg ເຂົ້າເປືອກ/ha/ປີ.

ສຳລັບຢູ່ຂັ້ນທ້ອງຖິ່ນ ໃຫ້ອີງໃສ່ຄວາມສາມາດຂອງຊຸມຊົນເປັນຫລັກ, ຕາມການຕົກລົງ ແລະ ເຫັນດີເປັນເອກະພາບຂອງເຂົາເຈົ້າ. ໃນແຕ່ລະ ລະດູການເນື້ອທີ່ຂອງສະມາຊິກບາງຄົນອາດມີການປ່ຽນແປງ, ສະນັ້ນກ່ອນທຳການຜະລິດທຸກໆຄັ້ງຕ້ອງວັດແທກ ແລະ ເກັບກຳເນື້ອທີ່ຂອງສະມາຊິກຄືນໃໝ່ ເພື່ອໃຫ້ຊັດເຈນ ແລະ ຍຸດຕິທຳ. ອີກດ້ານໜຶ່ງ ຖ້າຜົນຜະລິດຂອງສະມາຊິກ ເສຍຫາຍຍ້ອນໄພທຳມະຊາດ ຫລື ສັດຕູພືດທຳລາຍຢ່າງຮ້າຍແຮງ, ຕ້ອງຫລຸດຜ່ອນການເສຍເງິນຄ່ານ້ຳລົງຕາມຄວາມເໝາະສົມ ດ້ວຍການວັດແທກເນື້ອທີ່ເສຍຫາຍດັ່ງກ່າວແລ້ວຄິດໄລ່ຕາມ % (ເປີເຊັນ) ຄວາມເສຍຫາຍ.

**3. ຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນ**

ປະຕິບັດ, ຕິດຕາມ ແລະ ໃຫ້ຄຳແນະນຳທີມງານໃນການດຳເນີນວຽກງານຕ່າງໆຕາມໜ້າທີ່ຮັບຜິດຊອບ ເພື່ອໃຫ້ບັນລຸຕາມແຜນທີ່ວາງໄວ້. ກໍລະນີໜ້າວຽກບາງຢ່າງບໍ່ທັນເໝາະສົມຕ້ອງປັບປຸງແກ້ໄຂ ທັງນີ້ກໍ່ເພື່ອໃຫ້ມີປະສິດທິພາບ. ຖ້າຫາກໜ້າວຽກທີ່ຈະປະຕິບັດຕ້ອງໃຊ້ເຕັກນິກສູງ ຄວນປະສານງານໄປຍັງຂະແໜງການກ່ຽວຂ້ອງ ເພື່ອຂໍຄຳແນະນຳ, ພ້ອມດຽວກັນຖ້າມີການຈ່າຍງົບປະມານ ຕ້ອງແຈ້ງມູນຄ່າການໃຊ້ຈ່າຍແຕ່ລະຄັ້ງໃຫ້ສະມາຊິກຮັບຊາບທົ່ວເຖິງກັນ.

**4. ເປີດກອງປະຊຸມປະເມີນຜົນ ຖອດຖອນບົດຮຽນ ແລະ ວາງແຜນໃນລະດູການຕໍ່ໄປ**

ພາຍຫລັງສິ້ນສຸດການຜະລິດປະຈຳລະດູ ຕ້ອງເປີດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດ ເພື່ອສັງເກດຕີລາຄາ ດ້ານດີ, ດ້ານອ່ອນ ແລະ ບົດຮຽນທີ່ຖອດຖອນໄດ້, ຈາກນັ້ນກໍ່ນຳເອົາບົດຮຽນນຳໄປໃຊ້ລະດູການຕໍ່ໄປ.

ໃນກອງປະຊຸມດັ່ງກ່າວຕ້ອງສະຫລຸບ ລາຍຮັບ-ລາຍຈ່າຍຕ່າງໆຕາມຮູບແບບເສດຖະກິດເປີດເຜີຍ ໃຫ້ສະມາຊິກຊາບ, ໂດຍສະເພາະແມ່ນ: ລາຍຮັບ-ລາຍຈ່າຍຂອງກອງທຶນບົວລະບັດຮັກສາ, ຄ່ານ້ຳຊົນລະປະທານທີ່ເກັບໄດ້ປະຈຳລະດູການ, ເງິນບໍລິຫານໃຫ້ຄະນະຮັບຜິດຊອບກຸ່ມ ແລະ ອື່ນໆ.

**5. ການສົ່ງ ແລະ ແຈກຢາຍນ້ຳໃຫ້ແກ່ເນື້ອທີ່ການຜະລິດ**

ການສົ່ງ ແລະ ແຈກຢາຍນ້ຳປະກອບດ້ວຍ 2 ວິທີຄື: ການສົ່ງນ້ຳແບບຕໍ່ເນື່ອງ ແລະ ແບບໝູນວຽນ.

**5.1 ວິທີການສົ່ງນ້ຳແບບຕໍ່ເນື່ອງ (ຫລື ແບບໄຫລເສລີ):** ເໝາະສຳລັບລະບົບຊົນລະປະທານແບບໄຫລເອງທີ່ມີຫົວງານເປັນຝາຍນ້ຳລົ້ນ ຫລື ເຂື່ອນຕ່າງໆ , ເຊິ່ງມີເນື້ອທີ່ການຜະລິດບໍ່ຫລາຍເກີນໄປ ແລະ ມີປະລິມານນ້ຳໄຫລຈາກແມ່ນ້ຳຢ່າງພຽງພໍ ຊຶ່ງສາມາດສົ່ງນ້ຳໃຫ້ທົ່ວເນື້ອທີ່ການຜະລິດໄດ້ພ້ອມກັນ.

5.2 **ການສົ່ງນ້ຳແບບຕໍ່ໝູນວຽນ** ການສົ່ງນ້ຳແບບໝູນວຽນແມ່ນເໝາະກັບໂຄງການຊົນລະປະທານທີ່ມີຫົວງານເປັນຈັກສູບນ້ຳ ຫລື ໂຄງການຊົນລະປະທານທີ່ມີເນື້ອທີ່ຢ່າງຫລວງຫລາຍ ເຊິ່ງບໍ່ສາມາດສົ່ງນ້ຳ ໃຫ້ເນື້ອທີ່ການຜະລິດພ້ອມກັນໄດ້.

- **ຫລັກການຂອງການສົ່ງນ້ຳແບບໝູນວຽນ:** ຕ້ອງສົ່ງນ້ຳໃຫ້ເນື້ອທີ່ຢູ່ດ້ານທ້າຍຄອງເໝືອງກ່ອນ, ຈາກນັ້ນຈຶ່ງຄ່ອຍສົ່ງຂຶ້ນມາຕາມລຳດັບຈົນກ່ວາເນື້ອທີ່ການຜະລິດທັງໝົດຈະໄດ້ຮັບຢ່າງທົ່ວເຖິງ ແລະ ພຽງພໍກັບຄວາມຕ້ອງການ. ແຕ່ສຳລັບການສົ່ງນ້ຳແບບຕໍ່ເນື່ອງຈະບໍ່ໄດ້ສົ່ງນ້ຳຕາມຮູບແບບດັ່ງກ່າວເນື່ອງຈາກວ່າມີນ້ຳໃນແມ່ນ້ຳຕະຫລອດເວລາ.

**5.3 ການກວດກາເບິ່ງປະລິມານ້ຳທີ່ສົ່ງໃຫ້ເນື້ອທີ່ການຜະລິດ(ສຳລັບການສົ່ງນ້ຳແບບໝູນວຽນ)**

ວິທີກວດກາປະລິມານນ້ຳທີ່ສົ່ງຈາກຄອງເໝືອງ ແລະ ປະລິມານນ້ຳທີ່ຕ້ອງການຂອງເນື້ອທີ່ການຜະລິດດັ່ງນີ້:

- ຖ້າປະລິມານນ້ຳທີ່ສົ່ງຈາກຄອງເໝືອງຫລາຍກ່ວາ ປະລິມານຄວາມຕ້ອງການນ້ຳຢູ່ໃນເນື້ອທີ່ນາສະແດງວ່າ: ນ້ຳທີ່ສົ່ງໄປພຽງພໍ, ແຕ່ຖ້າໜ້ອຍກ່ວາແມ່ນນ້ຳບໍ່ພຽງພໍກັບຄວາມຕ້ອງການ ຕ້ອງໄດ້ຊອກວິທີແກ້ໄຂ.

## ວົງຈອນການສ້າງແຜນຜະລິດປະຈຳປີ ຫລື ປະຈຳລະດູການຂອງຊຸມຊົນ



# ບົດທີ່ 5
# ການຄຸ້ມຄອງນຳໃຊ້ ແລະ ບົວລິບັດຮັກສາລະບົບຊົນລະປະທານ

## 1. ການຄຸ້ມຄອງນຳໃຊ້ ແລະ ການບົວລະບັດຮັກສາລະບົບຊົນລະປະທານ

ຕາມຫລັກການແລ້ວການຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາລະບົບຊົນລະປະທານທີ່ເຄີຍຈັດຕັ້ງປະຕິບັດຜ່ານມາແມ່ນປະກອບດ້ວຍ 3 ໄລຍະເວລາດ້ວຍກັນຄື: ການບົວລະບັດຮັກສາ ແລະ ສ້ອມແປງປົກກະຕິ , ປະຈຳລະດູການ ແລະ ສຸກເສີນ ເຊິ່ງລາຍລະອຽດຢູ່ໃນຕາຕະລາງຂ້າງ ລຸ່ມນີ້:

**ຕາຕະລາງແນະນຳການຄຸ້ມຄອງນຳໃຊ້ ແລະ ການບົວລະບັດຮັກສາລະບົບຊົນລະປະທານ**

| ຊື່ຂອງສ່ວນປະກອບ | ໜ້າວຽກທີ່ຕ້ອງປະຕິບັດ | ຮູບພາບປະກອບ | ເວລາຈັດຕັ້ງປະຕິບັດ |
|---|---|---|---|
| ຝາຍນ້ຳລົ້ນ | - ເປີດປະຕູລະບາຍຊາຍເວລາຝົນຕົກໜັກ ເພື່ອບໍ່ໃຫ້ນ້ຳລົ້ນ ໄປກັດເຊາະດິນຖົມດ້ານຂ້າງຂອງຝາຍ, ຄູກັນນ້ຳ ແລະ ບໍ່ ໃຫ້ນ້ຳໄຫລເຂົ້າຄອງເໝືອງຫລາຍເກີນຄວາມສາມາດໃນການລຳລຽງນ້ຳ. |  | ເປັນປົກກະຕິ |
| | ປິດປະຕູລະບາຍຊາຍໃນລະດູນ້ຳໜ້ອຍ ຫລື ລະດູແລ້ງ ຖ້າຫາກມີການເຮັດນາແຊງ ເພື່ອເກັບກັກ ແລະ ບັງຄັບນ້ຳ ໃຫ້ເຂົ້າຄອງເໝືອງ. |  | |
| | - ເປີດປະຕູເອົານ້ຳເຂົ້າຄອງເໝືອງຕາມລະດັບຄວາມສູງທີ່ ອອກແບບເພື່ອໃຫ້ປະລິມານນ້ຳໄຫລ ເຂົ້າຄອງເໝືອງເໝາະສົມກັບຄວາມສາມາດຂອງຄອງເໝືອງ ແລະ ຄວາມຕ້ອງການນ້ຳຂອງເໜືອທົ່ງນາ. |  | |

| | | | |
|---|---|---|---|
| | - ຖາງຫຍ້າອ້ອມຮອບໂຕຝາຍ. |  | |
| | - ອານາໄມຂີ້ເຫຍື້ອ ແລະ ຂອນໄມ້, ງ່າໄມ້ ທີ່ໄຫລມາສະສົມ ຢູ່ໜ້າຝາຍ, ປະຕູເອົານ້ຳເຂົ້າຄອງເໝືອງ. |  | |
| | - ອານາໄມຕະກອນທີ່ສະສົມຢູ່ໜ້າຝາຍ ແລະ ອາຄານເອົາ ນ້ຳເຂົ້າຄອງເໝືອງ. |  | |
| ຄອງເໝືອງ ແລະອາຄານ | - ກ່ອນເປີດນ້ຳເຂົ້າຄອງເໝືອງຕ້ອງປິດປະຕູອາຄານທ້າຍຄອງເໝືອງເພື່ອເຮັດໃຫ້ດິນໃນຄອງເໝືອງອີ່ມໂຕ ແລະ ເພື່ອໃຫ້ ນ້ຳໄຫລເຂົ້າເນື້ອທີ່ການຜະລິດໄດ້ງ່າຍ.<br>- ປ່ອຍນ້ຳເຂົ້າເນື້ອທີ່ນາຢູ່ທ້າຍຄອງເໝືອງເສຍກ່ອນ, ຫລັງຈາກນັ້ນຈຶ່ງປ່ອຍນ້ຳໃຫ້ເນື້ອທີ່ຕ່ຳໆຂຶ້ນມາຕາມລຳດັບ.<br>- ເປີດປະຕູນ້ຳຕາມອາຄານຄວບຄຸມ ແລະ ບັງຄັບນ້ຳຕາມ ອາຄານຕ່າງໆ ໂດຍອີງໃສ່ຂະໜາດຂອງຄອງເໝືອງ ແລະ ຄວາມຕ້ອງການນ້ຳແຕ່ລະໄລຍະຂອງພືດ.<br>- ຕິດຕາມ-ກວດກາເບິ່ງນ້ຳໃນທົ່ງນາພຽງພໍຫລືບໍ່, ຖ້າບໍ່ພຽງພໍກໍ່ໄຂບານ | <br> | ເປັນປົກກະຕິ |

| | | | |
|---|---|---|---|
| | ປະຕູ ຫລື ໄມ້ແປ້ນຂຶ້ນຕື່ມເພື່ອ ເພີ້ມປະລິມານນ້ຳ.<br>- ປິດປະຕູນ້ຳເມື່ອຝົນຕົກແຮງ.<br><br>- ເຝົ້າລະວັງບໍ່ໃຫ້ນ້ຳລົ້ນສັນຄອງເໝືອງ.<br>- ເປີດປະຕູນ້ຳຢູ່ອາຄານທ້າຍຄອງ ເໝືອງເມື່ອຝົນຕົກແຮງ.<br><br>- ຖາງຫຍ້າ ແລະ ຕັດຕົ້ນໄມ້ທີ່ເກີດຂຶ້ນ ຕາມຄອງເໝືອງ ແລະ ບໍລິເວນອ້ອມ ຮອບອາຄານຕາມຄອງເໝືອງ.<br><br>- ອານາໄມຕະກອນທີ່ໄຫລມາຕົກຄ້າງ ຕາມຄອງເໝືອງ ແລະ ອາຄານຕາມ ຄອງເໝືອງ.<br>- ກວດກາຮອຍຮົ່ວຊຶມຕາມຄອງເໝືອງ. | <br><br><br> | |

| | | | |
|---|---|---|---|
| ຝາຍນ້ຳລົ້ນ | - ກວດຫີນກໍ່ກັນເຈື່ອນໜ້າ ແລະ ຫລັງຝາຍນ້ຳລົ້ນ.<br><br>- ກວດກາການກັດເຊາະທ້າຍອາຄານອ່າງຜ່ອນກຳລັງນ້ຳ.<br><br>- ກວດກາໂຄງສ້າງຂອງຝາຍ ເຊັ່ນ: ການຍຸບໂຕ, ການຮົ່ວຊຶມ, ຮອຍແຕກແຫງຕ່າງໆຕາມໂຕຝາຍ.<br><br>- ກວດກາການເປັນໜ້ຽງ (ເຫລັກໂຕ U) ຂອງວົງປະຕູລະ ບາຍຊາຍ ແລະ ປະຕູເອົານ້ຳເຂົ້າຄອງເໝືອງ.<br>- ກວດກາການເປັນໜ້ຽງຂອງບານປະຕູລະບາຍຊາຍ ແລະ ບານປະຕູເອົານ້ຳເຂົ້າເໝືອງ (ຖ້າມີຊຸດປະຕູທີ່ເປັນເຫລັກ).<br><br>- ກວດກາໄມ້ປະຕູລາຍບາຍຊາຍ ແລະ ໄມ້ແປ້ນປະຕູເອົານ້ຳ ເຂົ້າຄອງເໝືອງ ຖ້າຖືກລັກ ຫລື ເສຍ ຕ້ອງເອົາອັນໃໝ່ມາ ແທນ. | <br><br><br><br> | ປະຈຳລະດູການ ຜະລິດ |

| | | | |
|---|---|---|---|
| | - ກວດກາການເປັນໜ້ຽງຂອງຮາວເຫລັກຕາມໂຕຝາຍ. | | |
| ຄອງເໝືອງ ແລະອາຄານ | - ກວດກາການຍຸບໂຕຂອງສັນຄອງເໝືອງ ແລະ ດິນຖົມຕາມອາຄານຕ່າງໆ.<br><br>- ກວດກາຮອຍແຕກແຫງ ແລະ ການຍຸບໂຕຂອງອາຄານ ຕ່າງໆ.<br><br>- ກວດກາການກັດເຊາະຕາມຄອງເໝືອງ ແລະ ດ້ານຫລັງອາຄານຕ່າງໆ. | <br><br><br><br> | ປະຈຳລະດູການ ຜະລິດ |

| | | | |
|---|---|---|---|
| | - ກວດກາຮອຍຮົ່ວຊຶມຕາມຄອງເໝືອງ ແລະ ອາຄານຕາມ ຄອງເໝືອງ.<br><br>- ກວດກາການເປັນໜ້ຽງ (ເຫລັກໂຕ U) ຂອງວົງປະຕູ ຕາມອາຄານຕ່າງໆຕາມຄອງເໝືອງ.<br>- ກວດກາການເປັນໜ້ຽງຂອງບານປະຕູ ຂອງອາຄານຕ່າງໆ ຕາມເໝືອງ (ຖ້າມີຊຸດປະຕູທີ່ ເປັນເຫລັກ).<br><br>- ກວດກາໄມ້ປະຕູຕາມອາຄານຕ່າງໆ ຕາມຄອງເໝືອງ ຖ້າຖືກລັກ ຫລື ເສຍ ຕ້ອງເອົາອັນໃໝ່ມາແທນ. | <br><br> | |
| ຝາຍນໍ້າລົ້ນ | - ຄູປ້ອງກັນນໍ້າຖ້ວມ, ດິນຖົມດ້ານ ຂ້າງຂອງຝາຍ, ທ້າຍອ່າງຜ່ອນ ຖືກກັດເຊາະຈົນຂາດ ຍ້ອນຝົນຕົກ ໜັກ ຫລື ໄພທໍາມະ ຊາດ. | <br> | ສູກເສີນ |

| | | | |
|---|---|---|---|
| | |  | |
| ຄອງເໝືອງ ແລະອາຄານ | - ສັນຄອງເໝືອງຂາດ ຫລື ຍຸບໂຕ; ນ້ຳກັດເຊາະດິນຖົມ ບໍລິເວນອາຄານ ເນື່ອງຈາກຝົນຕົກໜັກ ຫລື ການສົ່ງນ້ຳເຂົ້າຄອງເໝືອງຫລາຍເກີນຄວາມຕ້ອງການ. |     | ສຸກເສີນ |

## ຕາຕະລາງສັງລວມບັນຫາທີ່ມັກເກີດຂຶ້ນແລະ ວິທີການສ້ອມແປງ

| ຊື່ຂອງສ່ວນປະກອບ | ຄວາມເສຍຫາຍ | ຮູບພາບປະກອບ | ວິທີແກ້ໄຂ |
|---|---|---|---|
| ຝາຍນໍ້າລົ້ນ | - ການຫຍຸບໂຕຜິດປົກກະຕິ, ຫງ່ຽງ ຫລື ເຊື່ອນອອກຈາກຈຸດເດີມ.<br>- ການເປ່ເພຂອງເບຕົງ. | <br> | - ທຸບຊີ້ນສ່ວນທີ່ເສຍຫາຍອອກ.<br>- ຈົກດິນທີ່ບໍ່ດີອອກ.<br>- ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວໃຫ້ໄດ້ລະດັບ.<br>- ກໍ່ສ້າງຄືນໃໝ່. |
| | - ຮອບແຕກແຫງ, ຮອບຕໍ່, ຮອຍແຍກ. |  | - ອານາໄມຮອຍແຕກແຫງໃຫ້ສະອາດ, ໃຊ້ຢາງໝາກຕອຍຢາຕາມຮອບແຕກແຫງດັ່ງກ່າວ. |
| | - ການຮົ່ວຊຶມຢ່າງຜິດປົກກະຕິຈາກຜິວໜ້າຂອງເບຕົງ ຫລື ຈາກບ່ອນເຊື່ອມຕໍ່ເບຕົງ. |  | - ຂຸດດິນບໍລິເວນທີ່ອາຄານເກີດການຮົ່ວຊຶມອອກ.<br>- ຊອກຫາຈຸດທີ່ຮົ່ວຊຶມ.<br>- ອານາໄມໃຫ້ສະອາດ.<br>- ໂບກຄືນດ້ວຍປະທາຍ.<br>- ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວໃຫ້ໄດ້ລະດັບ. |

| | | | |
|---|---|---|---|
| | - ເໜືອ ແລະ ໃຕ້ກະແສ ຖືກກັດເຊາະ. |   | - ເອົາຂີ້ຕົມ, ດິນຢູ່ບໍລິເວນດັ່ງກ່າວ ອອກໃຫ້ໄດ້ລະດັບ.<br>- ເອົາຫີນລຽງໃສ່.<br>- ຫລື ປູດ້ວຍເບຕົງ.<br>- ຫລື ໃສ່ກະຕ່າຫີນ. |
| ຄອງເໝືອງ | - ການຫຍຸບໂຕຂອງສັນຄອງເໝືອງ. |  | - ເອົາຂີ້ຕົມ, ດິນ ແລະ/ຫລື ຫຍ້າ ຢູ່ບ່ອນທີ່ຫຍຸບໂຕອອກ ໃຫ້ຮອດຊັ້ນດິນໃໝ່.<br>- ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວຄືນໃຫ້ໄດ້ລະດັບ.<br>- ປູກຫຍ້າໃສ່.<br>- ຫລື ເອົາຫີນລຽງໃສ່.<br>- ຫລື ປູດ້ວຍເບຕົງ. |
| | - ເປີ້ນເນີນດ້ານຂ້າງໃນຄອງເໝືອງຖືກ ກັດ ເຊາະ ຫລື ຫຍຸບໂຕ. |  | - ເອົາຂີ້ຕົມ, ດິນ ແລະ/ຫລື ຫຍ້າ ຢູ່ບ່ອນທີ່ຫຍຸບໂຕອອກ ໃຫ້ຮອດຊັ້ນດິນໃໝ່.<br>- ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວຄືນໃຫ້ໄດ້ລະດັບ.<br>- ປູກຫຍ້າໃສ່.<br>- ຫລື ເອົາຫີນລຽງໃສ່.<br>- ຫລື ປູດ້ວຍເບຕົງ.<br>- ຫລື ຕີໄມ້ແປ້ນໃສ່. |

| | | | |
|---|---|---|---|
| | - ການຮົ່ວຊຶມຕ່າງໆ. |  | - ຊອກຫາຈຸດທີ່ຮົ່ວຊຶມ.<br>- ຂຸດດິນບໍລິເວນທີ່ເກີດການຮົ່ວຊຶມອອກ.<br>- ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວຄືນໃຫ້ໄດ້ລະດັບ.<br>- ປູກຫຍ້າໃສ່.<br>- ຫລື ເອົາຫີນລຽງໃສ່.<br>- ຫລື ປູດ້ວຍເບຕົງ. |
| | - ເປີ້ນເນີນດ້ານນອກຄອງເໝືອງຖືກ ກັດເຊາະ ຫລື ຫຍຸບໂຕເນື່ອງຈາກນໍ້າໄຫລເຂົ້າຄອງເໝືອງຈາກດ້ານນອກ. |  | - ຊອກຫາຈຸດທີ່ຮົ່ວຊຶມ.<br>- ຂຸດດິນບໍລິເວນທີ່ເກີດການຮົ່ວຊຶມອອກ.<br>- ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວຄືນໃຫ້ໄດ້ລະດັບ.<br>- ເຮັດຮ່ອງລະບາຍນໍ້າດ້ານນອກ.<br>- ປູກຫຍ້າໃສ່, ຫລື ເອົາຫີນລຽງໃສ່ ຫລື ປູດ້ວຍເບຕົງ. |
| ອາຄານຕ່າງໆ | - ການຫຍຸບໂຕຂອງໂຄງສ້າງອາຄານ. | <br> | - ທຸບຊິ້ນສ່ວນທີ່ເສຍຫາຍອອກ, ຈົກດິນທີ່ບໍ່ດີອອກ ແລ້ວກໍ່ສ້າງຄືນໃໝ່. |

| | | | |
|---|---|---|---|
| | - ຮອຍແຕກແຫງຕາມຜິວໜ້າອາຄານ. |  | - ອານາໄມຮອຍແຕກແຫງໃຫ້ສະອາດ.<br>- ໃຊ້ປາງໝາກຕອຍຢາຕາມຮອຍແຕກແຫງດັ່ງກ່າວ. |
| | - ຮອຍຮົ່ວຕາມຊິ້ນສ່ວນອາຄານ. |  | - ຂຸດດິນບໍລິເວນທີ່ອາຄານເກີດການຮົ່ວຊຶມອອກ.<br>- ຊອກຫາຈຸດທີ່ຮົ່ວຊຶມ.<br>- ອານາໄມໃຫ້ສະອາດ.<br>- ໂບກຄືນດ້ວຍປະທາຍ.<br>- ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວຄືນ. |
| | - ຈຸດຕໍ່ເຊື່ອມລະຫວ່າງດິນ ແລະ ຊິ້ນສ່ວນອາຄານເກີດການກັດເຊາະ. |  | - ຖົມ ແລະ ຕຳແໜ້ນດິນບໍລິເວນດັ່ງກ່າວຄືນໃຫ້ໄດ້ລະດັບ.<br>- ປູກຫຍ້າໃສ່.<br>- ຫລື ເອົາຫີນລຽງໃສ່.<br>- ຫລື ປູດ້ວຍເບຕົງ. |

# ພາກທີ III
# ເອກະສານຊ້ອນທ້າຍ

ກ. ແບບຟອມບັນຊີລາຍຊື່ສະມາຊິກຜູ້ນໍາໃຊ້ນໍ້າ (ເອກະສານຊ້ອນທ້າຍ 1).
ຂ. ແບບຟອມເກັບກໍາ, ວິເຄາະ ແລະ ແກ້ໄຂບັນຫາ ສໍາລັບຝາຍນໍ້າລົ້ນ (ເອກະສານຊ້ອນທ້າຍ 2).
ຄ. ແບບຟອມເກັບກໍາ, ວິເຄາະ ແລະ ແກ້ໄຂບັນຫາ ສໍາລັບຄອງເໝືອງ ແລະ ອາຄານ (ເອກະສານຊ້ອນທ້າຍ 3).
ງ. ແບບຟອມບັນທຶກການບົວລະບັດຮັກສາ ແລະ ສ້ອມແປງ (ເອກະສານຊ້ອນທ້າຍ 4).
ຈ. ແບບຟອມເກັບກໍາເນື້ອທີ່ການຜະລິດປະຈໍາລະດູການ (ເອກະສານຊ້ອນທ້າຍ 5).
ສ. ແບບຟອມການບໍລິຫານນໍ້າຈໍາລະດູການ (ເອກະສານຊ້ອນທ້າຍ 6).
ຊ. ແບບຟອມການນໍາໃຊ້ນໍ້າໄລຍະຕ່າງໆປະຈໍາລະດູການ (ເອກະສານຊ້ອນທ້າຍ 7).
ຍ. ແບບຟອມບັນທຶກການເສຍເງິນຄ່ານໍ້າ (ເອກະສານຊ້ອນທ້າຍ 8).
ດ. ແບບຟອມເຄື່ອນໄຫວເງິນສົດປະຈໍາປີຂອງກຸ່ມຜູ້ນໍາໃຊ້ນໍ້າ (ເອກະສານຊ້ອນທ້າຍ 9).
ຕ. ແບບຟອມສະເໜີຂໍເບີກຈ່າຍ (ເອກະສານຊ້ອນທ້າຍ 10).
ຖ. ແບບຟອມສະເໜີຂໍເບີກຈ່າຍເງິນສົດ (ເອກະສານຊ້ອນທ້າຍ 11).
ທ. ແບບຟອມສັງລວມໜ້າວຽກຕົ້ນຕໍໃນການດໍາເນີນງານຂອງກຸ່ມ (ເອກະສານຊ້ອນທ້າຍ 12).
ນ. ພາລະບົດບາດຂອງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ.
ບ. ກົດລະບຽບຂອງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ.
ປ. ໃບສະເໜີຂໍຈັດຕັ້ງກຸ່ມຜູ້ຊົມໃຊ້ນໍ້າ.
ຜ. ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະກຸ່ມຜູ້ຊົມໃຊ້ນໍ້າໂຄງການຊົນລະປະທານ.
ຝ. ສັນຍາການຮ່ວມມືພັດທະນາ ແລະ ຄຸ້ມຄອງນໍາໃຊ້ລະບົບຊົນລະປະທານ.
ພ. ຂໍ້ຕົກລົງຂອງເຈົ້າເມືອງວ່າດ້ວຍການຂຶ້ນທະບຽນກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ.

ກອງທຶນຫລຸດຜ່ອນຄວາມທຸກຍາກ ເອກະສານຊ້ອນທ້າຍ: 1

ແຂວງ:________________________ເມືອງ:_________________________ບ້ານ:_________________________

# ແບບຟອມບັນຊີລາຍຊື່ສະມາຊິກຜູ້ນຳໃຊ້ນ້ຳ

| ລ/ດ | ຊື່ ແລະ ນາມສະກຸນ | ເນື້ອທີ່ທຳການ ຜະລິດ (ha) | ທີ່ຕັ້ງຂອງເນື້ທີ່ ທຳການຜະລິດ | ລາຍເຊັນ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |
| 14 | | | | |
| 15 | | | | |
| 16 | | | | |
| 17 | | | | |
| 18 | | | | |
| 19 | | | | |
| 20 | | | | |
| 21 | | | | |
| 22 | | | | |
| 23 | | | | |
| 24 | | | | |
| 25 | | | | |
| | ລວມ: | | | |

ທີ່:________________________ວັນທີ່:_______________

ຢັ້ງຢືນໂດຍນາຍບ້ານ ປະທານກຸ່ມ ຜູ້ສັງລວມ

# ແບບຟອມເກັບກຳ, ວິເຄາະຂໍ້ມູນ ແລະ ແກ້ໄຂບັນຫາທີ່ເກີດຂຶ້ນຢູ່ຫົວງານ (ຝາຍນ້ຳລົ້ນ)

| ລ/ດ | ຊື່ໂຄງສ້າງ | ບັນຫາ | ສາເຫດ | ວິທີແກ້ໄຂ | ເວລາປະຕິບັດ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|
| | | | | | | |
| | | | | | | |
| | | | | | | |

ທີ່:______________________, ວັນທີ່:______________

ຢັ້ງຢືນຈາກນາຍບ້ານ　　　　ຄະນະຮັບຜິດຊອບຄຸ້ມຄອງໂຄງການຍ່ອຍ　　　　ວິຊາການ

ເອກະສານຊ້ອນທ້າຍ: 3

# ແບບຟອມເກັບກຳ, ວິເຄາະຂໍ້ມູນ ແລະ ແກ້ໄຂບັນຫາ ທີ່ເກີດຂຶ້ນຢູ່ໃນຄອງເໝືອງ ແລະ ອາຄານ

| ລ/ດ | ຊື່ໂຄງສ້າງ | ສະຖານທີ່ | ບັນຫາ | ສາເຫດ | ວິທີແກ້ໄຂ | ເວລາປະຕິບັດ | ຜູ້ຮັບຜິດຊອບ |
|---|---|---|---|---|---|---|---|
| | | | | | | | |
| | | | | | | | |
| | | | | | | | |

ທີ່:______________________, ວັນທີ່:______________

ຢັ້ງຢືນຈາກນາຍບ້ານ　　　　ຄະນະຮັບຜິດຊອບຄຸ້ມຄອງໂຄງການຍ່ອຍ　　　　ວິຊາການ

ເອກະສານຊ້ອນທ້າຍ 4

<u>ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ</u>

ແຂວງ:_______________________ເມືອງ:______________________ບ້ານ:__________________
ຈຸທີ່:__________________________

## ແບບຟອມບັນທຶກການບົວລະບັດຮັດສາ ແລະ ສ້ອມແປງ

ປະຈຳລະດູການ (ສົກປີ):___________________

ປະເພດການຜະລິດ:______________________

| ລ/ດ | ວ,ດ,ປ ບົວລະບັດຮັກສາ ຫລື ສ້ອມແປງ | ລາຍການບົວລະບັດຮັກສາ ຫລື ສ້ອມແປງ | ຜູ້ເຂົ້າຮ່ວມ | | ຄ່າໃຊ້ຈ່າຍໃນການບົວລະບັດຮັກສາຫລື ສ້ອມແປງ |
|---|---|---|---|---|---|
| | | | ທັງໝົດ | ຍິງ | |
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| 6 | | | | | |
| 7 | | | | | |
| 8 | | | | | |
| 9 | | | | | |
| 10 | | | | | |
| 11 | | | | | |
| 12 | | | | | |
| 13 | | | | | |
| 14 | | | | | |
| 15 | | | | | |
| 16 | | | | | |
| 17 | | | | | |
| 18 | | | | | |
| 19 | | | | | |
| 20 | | | | | |

<u>ໝາຍເຫດ:</u> *ທຸກໆຄັ້ງທີ່ມີການບົວລະບັດຮັກສາ ຫລື ສ້ອມແປງ ກຸ່ມຜູ້ນຳໃຊ້ນ້ຳ, ໂດຍສະເພາະຜູ້ຮັບຜິດຊອບວຽກງານວິຊາການຕ້ອງບັນທຶກລາຍລະອຽດໄວ້ໃນເອກະສານຊ້ອນທ້າຍນີ້, ທັງນີ້ກໍ່ເພື່ອເປັນການຕິດຕາມການເຄື່ອນໄຫວວຽກງານຂອງກຸ່ມ.*

# ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ

ແຂວງ:______________________ ເມືອງ:_____________________ ບ້ານ:_________________
ຈຸທີ່:_________________________

## ແບບຟອມເກັບກຳເນື້ອທີ່ການຜະລິດ ແລະ ພືດທີ່ຈະປູກ

ປະຈຳລະດູການ (ສົກປີ):__________________

ປະເພດການຜະລິດ:______________________

| ລ/ດ | ຊື່ ແລະ ນາມສະກຸນ ຂອງສະມາຊິກ | ເນື້ອທີ່ຈະນຳໃຊ້ນ້ຳ (ha) | ສະນິດພືດທີ່ຈະປູກ | ໝາຍເຫດ |
|---|---|---|---|---|
| 1 | | | | |
| 2 | | | | |
| 3 | | | | |
| 4 | | | | |
| 5 | | | | |
| 6 | | | | |
| 7 | | | | |
| 8 | | | | |
| 9 | | | | |
| 10 | | | | |
| 11 | | | | |
| 12 | | | | |
| 13 | | | | |
| 14 | | | | |
| 15 | | | | |

<u>ໝາຍເຫດ:</u> *ພາຍຫລັງທີ່ຫົວໜ້າຈຸເກັບກຳເອົາສະຖິຕິເນື້ອທີ່ທຳການຜະລິດຂອງສະມາຊິກພາຍໃນຈຸແລ້ວ, ຫົວໜ້າຈຸຕ້ອງໄດ້ສົ່ງແບບຟອມນີ້ໃຫ້ຄະນະກຸ່ມ ເພື່ອສັງລວມ ແລະ ສະເໜີຢູ່ກອງປະຊຸມວາງແຜນປະຈຳປຂອງກຸ່ມ.*

ວັນທີ່:________________

ຫົວໜ້າຈຸ

ແຜນການບໍລິຫານນຳໃຊ້ນ້ຳຊົນລະປະທານ ປະຈຳລະດູການຜະລິດນາປີ

ເອກະສານຊ້ອນທ້າຍ: 6

| ລ/ດ | ລາຍລະອຽດຂອງໜ້າວຽກທີ່ຈະເຮັດ | ຜູ້ຮັບຜິດຊອບ | ເດືອນ/ອາທິດ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
|  |  |  | ພຶດສະພາ (5) |  |  |  | ມິຖຸນາ (6) |  |  |  | ກໍລະກົດ (7) |  |  |  | ສິງຫາ (8) |  |  |  | ກັນຍາ (9) |  |  |  | ຕຸລາ (10) |  |  |  | ພະຈິກ (11) |  |  |  |
|  |  |  | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 |
| 1 | ສຳຫລວດເກັບກຳຂໍ້ມູນລະບົບຊົນລະປະທານ ແລະ ເນື້ອທີ່ການຜະລິດ | ຄະນະກຸ່ມ + ຄະນະຈຸ |  | ■ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
| 2 | ເປີດກອງປະຊຸມວາງແຜນການຜະລິດປະຈຳປີຂອງກຸ່ມ | ຄະນະກຸ່ມ |  |  | ■ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
| 3 | ອານາໄມ ຝາຍ, ອາຄານ, ຄອງເໝືອງ ແລະ ຄອງລະບາຍ | ໝົດທຸກຄົນ |  |  |  | ■ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
| 4 | ດຳເນີນການຜະລິດ ແລະ ສົ່ງນ້ຳຕາມແຜນການ | ສະມາຊິກ |  |  |  |  | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ |  |  |  |  |
| 5 | ຕິດຕາມການນຳໃຊ້ນ້ຳ, ຖ້າຈຳເປັນຕ້ອງປັບແຜນການສົ່ງນ້ຳໃໝ່ | ຄະນະຈຸ |  |  |  |  | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ |  |  |  |  |
| 6 | ກວດກາ ແລະ ລາຍງານສະພາບຂອງລະບົບຊົນລະປະທານ | ຄະນະຈຸ |  |  |  |  |  |  |  | ■ |  |  |  | ■ |  |  |  | ■ |  |  |  | ■ |  |  |  | ■ |  |  |  |  |
| 7 | ເກັບເງິນຄ່ານ້ຳປະຈຳປີ | ຄະນະຈຸ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  | ■ | ■ |  |  |
| 8 | ເປີດກອງປະຊຸມຖອດຖອນບົດຮຽນປະຈຳປີ | ຄະນະກຸ່ມ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  | ■ |  |  |
| 9 | ລາຍງານໃຫ້ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ | ຄະນະກຸ່ມ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  | ■ |  |  |

ແຜນການບໍລິຫານນຳໃຊ້ນ້ຳຊົນລະປະທານ ປະຈຳລະດູການຜະລິດນາແຊງ

| ລ/ດ | ລາຍລະອຽດຂອງໜ້າວຽກທີ່ຈະເຮັດ | ຜູ້ຮັບຜິດຊອບ | ເດືອນ/ອາທິດ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
|  |  |  | ພະຈິກ (11) |  |  |  | ທັນວາ (12) |  |  |  | ມັງກອນ (1) |  |  |  | ກຸມພາ (2) |  |  |  | ມີນາ (3) |  |  |  | ເມສາ (4) |  |  |  | ພຶດສະພາ (5) |  |  |  |
|  |  |  | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 | 1 | 2 | 3 | 4 |
| 1 | ສຳຫລວດເກັບກຳຂໍ້ມູນລະບົບຊົນລະປະທານ ແລະ ເນື້ອທີ່ການຜະລິດ | ຄະນະກຸ່ມ + ຄະນະຈຸ |  | ■ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
| 2 | ເປີດກອງປະຊຸມວາງແຜນການຜະລິດປະຈຳປີຂອງກຸ່ມ | ຄະນະກຸ່ມ |  |  | ■ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
| 3 | ອານາໄມ ຝາຍ, ອາຄານ, ຄອງເໝືອງ ແລະ ຄອງລະບາຍ | ໝົດທຸກຄົນ |  |  |  | ■ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |
| 4 | ດຳເນີນການຜະລິດ ແລະ ສົ່ງນ້ຳຕາມແຜນການ | ສະມາຊິກ |  |  |  |  | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ |  |  |  |  |
| 5 | ຕິດຕາມການນຳໃຊ້ນ້ຳ, ຖ້າຈຳເປັນຕ້ອງປັບແຜນການສົ່ງນ້ຳໃໝ່ | ຄະນະຈຸ |  |  |  |  | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ | ■ |  |  |  |  |
| 6 | ກວດກາ ແລະ ລາຍງານສະພາບຂອງລະບົບຊົນລະປະທານ | ຄະນະຈຸ |  |  |  |  |  |  |  | ■ |  |  |  | ■ |  |  |  | ■ |  |  |  | ■ |  |  |  | ■ |  |  |  |  |
| 7 | ເກັບເງິນຄ່ານ້ຳປະຈຳປີ | ຄະນະຈຸ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  | ■ | ■ |  |  |
| 8 | ເປີດກອງປະຊຸມຖອດຖອນບົດຮຽນປະຈຳປີ | ຄະນະກຸ່ມ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  | ■ |  |  |
| 9 | ລາຍງານໃຫ້ຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ເມືອງ | ຄະນະກຸ່ມ |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  |  | ■ |  |  |

# ກິດຈະກຳ ການນຳໃຊ້ນ້ຳຊົນລະປະທານໃນໄລຍະຕ່າງໆ



# ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ

ແຂວງ:______________________ ເມືອງ:____________________ ບ້ານ:________________

ຈຸທີ່:________________________

## ແບບຟອມບັນທຶກການເສຍຄ່ານ້ຳເພື່ອບົວລະບັດຮັກສາ ແລະ ສ້ອມແປງ

ປະຈຳລະດູການ (ສົກປີ):__________________

ປະເພດການຜະລິດ:_____________________

| ລ/ດ | ຊື່ ແລະ ນາມສະກຸນ ຂອງສະມາຊິກ | ເນື້ອທີ່ການ ຜະລິດ (ha) | ຈຳນວນເງິນ | ຜູ້ມອບ | ຢັ້ງຢືນໂດຍຫົວໜ້າຈຸ (ວັນທີ ແລະ ລາຍເຊັນ) |
|---|---|---|---|---|---|
| 1 | | | | | |
| 2 | | | | | |
| 3 | | | | | |
| 4 | | | | | |
| 5 | | | | | |
| 6 | | | | | |
| 7 | | | | | |
| 8 | | | | | |
| 9 | | | | | |
| 10 | | | | | |
| 11 | | | | | |
| 12 | | | | | |
| 13 | | | | | |
| 14 | | | | | |
| 15 | | | | | |
| 16 | | | | | |
| 17 | | | | | |
| 18 | | | | | |
| 19 | | | | | |
| 20 | | | | | |

ຢັ້ງຢືນໂດຍ ວັນທີ່:___________

ປະທານກຸ່ມ ຜູ້ຮັບຜິດຊອບບັນຊີ-ການເງິນກຸ່ມ ຫົວໜ້າຈຸ

**ປຶ້ມບັນທຶກ: ການເຄື່ອນໄຫວເງິນສົດປະຈໍາປີຂອງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານບ້ານ:___________________________,ກຸ່ມ:________________________**

| ຍອດຍົກມາ:________________ກີບ (ກ) | ປີ:__________________ | | | | | | |
|---|---|---|---|---|---|---|---|
| ການເຄື່ອນໄຫວ | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ລວມ 6 ເດືອນ |
| **1. ເງິນຮັບເຂົ້າ** | | | | | | | |
| + ເງິນຄ່ານໍາໃຊ້ນໍ້າຂອງສະມາຊິກ | | | | | | | |
| + ເງິນກູ້ຢືມທີ່ໃຊ້ຄືນ | | | | | | | |
| + ດອກເບັ້ຍທີ່ໄດ້ຮັບຈາກການກູ້ຢືມ | | | | | | | |
| + ລາຍຮັບອື່ນໆ *(ເງິນສະໜັບສະໜູນຈາກພາຍນອກ, ດອກເບັ້ຍໄດ້ຮັບຈາກທະນາຄານ, ເງິນປັບໃໝ...)* | | | | | | | |
| ***ລວມເງິນຮັບເຂົ້າທັງໝົດ:*** | | | | | | | |
| **2. ເງິນຈ່າຍອອກ** | | | | | | | |
| + ຄ່າຊື້ວັດຖຸ ແລະ ອື່ນໆສໍາລັບສ້ອມແປງ | | | | | | | |
| + ຈ່າຍຄ່າຊຸກຍູ້ໃຫ້ຄະນະກຸ່ມ | | | | | | | |
| + ຄ່າບໍລິຫານ ແລະ ອື່ນໆ | | | | | | | |
| ***ລວມເງິນຈ່າຍອອກທັງໝົດ:*** | | | | | | | |
| 3. ເງິນທີ່ຍັງເຫລືອ | | | | | | | |
| (= ເງິນຮັບເຂົ້າ - ເງິນຈ່າຍອອກ) (ຂ) | | | | | | | |
| **4. ເງິສົດທີ່ຍັງເຫລືອ** | | | | | | | |
| + ເງິນຍັງເຫລືອຢູ່ທະນາຄານ (ຄ) | | | | | | | |
| + ເງິນສົດໂຕຈິງທີ່ຍັງເຫລືອ (ງ) | | | | | | | |
| ເງິນສົດທີ່ຍັງເຫລືອທັງໝົດ ( = ຄ + ງ ) | | | | | | | |

**ໝາຍເຫດ:** (1). ບັນຊີທີ່ວນີ້ ແມ່ນຜູ້ຮັບຜິດຊອບບັນຊີ - ການເງິນ ເປັນຜູ້ບັນທຶກ ແລະ ເກັບຮັກສາ.

(2). ເນື່ອງຈາກວ່າ ຂະໜາດຂອງເຈ້ຍບໍ່ຍາວພໍ ຈຶ່ງໄດ້ສ້າງປຶ້ມບັນທຶກການເຄື່ອນໄຫວເງິນສົດຂອງກຸ່ມເທື່ອລະ 6 ເດືອນ

## ປຶ້ມບັນທຶກ: ການເຄື່ອນໄຫວເງີ□ສົດປະຈຳປີຂອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານບ້ານ:________________________,ກຸ່ມ:_____________________

| ຍອດຍົກມາ:______________ກີບ (ກ) | ປີ:________________ | | | | | | |
|---|---|---|---|---|---|---|---|
| ການເຄື່ອນໄຫວ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ | ລວມ 6 ເດືອນ |
| **1. ເງິນຮັບເຂົ້າ** | | | | | | | |
| + ເງິນຄ່ານຳໃຊ້ນ້ຳຂອງສະມາຊິກ | | | | | | | |
| + ເງິນກູ້ຢືມທີ່ໃຊ້ຄືນ | | | | | | | |
| + ດອກເບັ້ຍທີ່ໄດ້ຮັບຈາກການກູ້ຢືມ | | | | | | | |
| + ລາຍຮັບອື່ນໆ *(ເງິນສະໜັບສະໜູນຈາກພາຍນອກ, ດອກເບັ້ຍໄດ້ຮັບຈາກທະນາຄານ, ເງິນປັບໃໝ...)* | | | | | | | |
| *ລວມເງິນຮັບເຂົ້າທັງໝົດ:* | | | | | | | |
| **2. ເງິນຈ່າຍອອກ** | | | | | | | |
| + ຄ່າຊື້ວັດຖຸ ແລະ ອື່ນໆສຳລັບສ້ອມແປງ | | | | | | | |
| + ຈ່າຍຄ່າຊຸກຍູ້ໃຫ້ຄະນະກຸ່ມ | | | | | | | |
| + ຄ່າບໍລິຫານ ແລະ ອື່ນໆ | | | | | | | |
| *ລວມເງິນຈ່າຍອອກທັງໝົດ:* | | | | | | | |
| 3. ເງິນທີ່ຍັງເຫລືອ | | | | | | | |
| (= ເງິນຮັບເຂົ້າ - ເງິນຈ່າຍອອກ) (ຂ) | | | | | | | |
| **4. ເງິສົດທີ່ຍັງເຫລືອ** | | | | | | | |
| + ເງິນຍັງເຫລືອຢູ່ທະນາຄານ (ຄ) | | | | | | | |
| + ເງິນສົດໂຕຈິງທີ່ຍັງເຫລືອ (ງ) | | | | | | | |
| ເງິນສົດທີ່ຍັງເຫລືອທັງໝົດ ( = ຄ + ງ ) | | | | | | | |

**ໝາຍເຫດ:** (1). ບັນຊີທີ່ວນີ້ ແມ່ນຜູ້ຮັບຜິດຊອບບັນຊີ - ການເງິນ ເປັນຜູ້ບັນທຶກ ແລະ ເກັບຮັກສາ.

(2). ເນື່ອງຈາກວ່າ ຂະໜາດຂອງເຈ້ຍບໍ່ຍາວພໍ ຈຶ່ງໄດ້ສ້າງປຶ້ມບັນທຶກການເຄື່ອນໄຫວເງິນສົດຂອງກຸ່ມເທື່ອລະ 6 ເດືອນ

**ເອກະສານຊ້ອນທ້າຍ: 10**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ເມືອງ:___________________

ບ້ານ:____________________

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ

**<u>ໃບສະເໜີຂໍໃຊ້ຈ່າຍເງິນຂອງກຸ່ມ</u>**

ຮຽນ: ຄະນະປະທານກຸ່ມ

**ເລື້ອງ: ຂໍສະເໜີໃຊ້ຈ່າຍເງິນຂອງກຸ່ມ**

ຂ້າພະເຈົ້າຊື່:………………………………….ໜ້າທີ່ຮັບຜິດຊອບ:……………………………...…

ປະຈຸບັນຢູ່ບ້ານ:………………………...…ເມືອງ:…………………………….. ແຂວງ:…………………..

ມີຈຸດປະສົງຂໍສະເໜີຈ່າຍເງິນຂອງກຸ່ມຈຳນວນ:…………………….ກີບ, ຂຽນເປັນໂຕໜັງສື:……………………

ເພື່ອ:……………………………………………………………………..……………………………

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງຄະນະປະທານກຸ່ມ ເພື່ອຄົ້ນຄ້ວາ ແລະ ພິຈາລະນາຕາມເຫັນສົມຄວນດ້ວຍ

**ວັນທີ່:**………………………

**<u>ຄຳເຫັນ</u>** **<u>ຜູ້ສະເໜີ</u>**

**ປະທານກຸ່ມ**

……………………………………………………………………………………………………..

**ເອກະສານຊ້ອນທ້າຍ: 11**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ເມືອງ:___________________

ບ້ານ:____________________

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ

**<u>ໃບເບີກຈ່າຍເງິນສົດ</u>**

ອີງຕາມໃບສະເໜີເລກທີ່:………………../…….………ລົງວັນທີ່:……………………………...……

ຂ້າພະເຈົ້າ:…………………………..…ໃນນາມຜູ້ຮັບຜິດຊອບບັນຊີ-ການເງິນກຸ່ມໄດ້ຈ່າຍເງິນໃຫ້ທ່ານ…………

…………………… ຈຳນວນ:…………………..(ກີບ), ຂຽນເປັນໂຕໜັງສື:……………………

……………………………………………………………………………………………………

ຈຸດປະສົງໃນການເບີກຈ່າຍ:………………………………………………………………...……..

**ວັນທີ່:**………………………

| | | | |
|---|---|---|---|
| **<u>ຢັ້ງຢືນ</u>** | **ຜູ້ຮັບຜິດຊອບເງິນສົດ** | **ຜູ້ຮັບ** | **ຜູ້ເບີກຈ່າຍ** |
| **(ປະທານກຸ່ມ)** | | | **(ບັນຊີ-ການເງິນ)** |

ເອກະສານຊ້ອນທ້າຍ:12

# ສັງລວມໜ້າວຽກຕົ້ນຕໍໃນການດໍາເນີນງານຂອງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ

| ລ/ດ | ໜ້າທີ່ຕ້ອງປະຕິບັດ | ເວລາປະຕິບັດ | ຜູ້ຮັບຜິດຊອບ |
|---|---|---|---|
| 1 | ແຈ້ງເນື້ອທີ່ທໍາການຜະລິດ | ກ່ອນນໍາໃຊ້ນໍ້າຊົນລະປະທານ ປະຈໍາລະດູການ | **ສະມາຊິກ** |
| 2 | ບໍາລຸງຮັກສາ, ອານາໄມ ຝາຍ ແລະ ຄອງເໝືອງ | ກ່ອນນໍາໃຊ້ນໍ້າຊົນລະປະທານ ປະຈໍາລະດູການ | |
| 3 | ເຂົ້າຮ່ວມກອງປະຊຸມສ້າງແຜນການດໍາເນີນງານປະຈໍາລະດູການຜະລິດ | ກ່ອນທໍາການຜະລິດ | |
| 4 | ແຈ້ງຄວາມເສຍຫາຍຕ່າງໆໃຫ່ຫົວໜ້າຈຸ | ເວລາເກີດຄວາມເສຍຫາຍ | |
| 5 | ເສຍຄ່າບົວລະບັດຮັກສາ ແລະ ສ້ອມແປງປະຈໍາປີ | ຫລັງເກັບກ່ຽວຜົນຜະລິດ | |
| 6 | ເຂົ້າຮ່ວມປະຊຸມສະຫລຸບປະຈໍາປີຂອງກຸ່ມ | ຫລັງເກັບກ່ຽວຜົນຜະລິດ | |
| 1 | ສະເໜີແຜນການຜະລິດປະຈລະດູການຂອງຈຸ | ກອງປະຊຸມເຜີຍແຜ່ແຜນການ ດໍາເນີນງານຂອງກຸ່ມ | **ຄະນະຈຸ** |
| 2 | ບໍາລຸງຮັກສາ ແລະ ອານາໄມຮ່ວມໃກັບສະມາຊິກ | ກ່ອນນໍາໃຊ້ນໍ້າຊົນລະປະທານ ປະຈໍາລະດູການ | |
| 3 | ເປີດ-ປິດອາຄານຕ່າງໆໃນຄອງຊົນລະປະທານ | ໄລຍະເວລານໍາໃຊ້ນໍ້າຊົນ ລະປະທານ | |
| 4 | ຕິດຕາມດູແລ ແລະ ກວດກາການນໍາໃຊ້ນໍ້າຂອງສະມາຊິກ | ໄລຍະເວລານໍາໃຊ້ນໍ້າຊົນ ລະປະທານ | |
| 5 | ກວດສອບ ແລະ ລາຍງານສະພາບ ຝາຍ, ຄອງເໝືອງ ແລະ ອາຄານຕ່າງໆ. | ປະຈໍາເດືອນ | |
| 6 | ຮັບແຈ້ງຄວາມເສຍຫາຍຈາກສະມາຊິກ | ເວລາເກີດຄວາມເສຍຫາຍ | |
| 7 | ເກັບເງິນຄ່າບົວລະບັດຮັກສາ ແລະ ສ້ອມແປງປະຈໍາປີ ນໍາສະມາຊິກໃນຈຸທີ່ຕົນເອງຮັບຜິດຊອບ | ຫລັງເກັບກ່ຽວຜົນຜະລິດ | |
| 1 | ຮັບຮອງແຜນການເຄື່ອນໄຫວປະຈໍາປີຂອງກຸ່ມ (ແຜນການນໍາໃຊ້ນໍ້າ ແລະ ແຜນການຜະລິດ) | ກ່ອນລະດູການຜະລິດ | **ຄະນະກຸ່ມ** |
| 2 | ຮັບຜິດຊອບການດໍາເນີນກອງປະຊຸມຖອດຖອນບົດຮຽນ ປະຈໍາປີ | ຫລັງຈາກເກັບກ່ຽວຜົນຜະລິດ | |
| 3 | ສະຫລຸບເງິນຄ່າບົວລະບັດຮັກສາ ແລະ ແປງປະຈໍາປີ ພ້ອມທັງ ເຮັດເສດຖະກິດເປີດເຜີຍຕໍ່ສະມາຊິກ | ກອງປະຊຸມຖອດຖອນບົດຮຽນ | |
| 4 | ຮ່າງກົດລະບຽບຂອງກຸ່ມ ສະເໜີຕໍ່ກອງປະຊຸມກຸ່ມເພື່ອ ຮັບຮອງເປັນເອກະພາບ | ກ່ອນນໍາໃຊ້ນ້ຳຊົນລະປະທານ | |
| 5 | ລາຍງານ ແລະ ພົວພັນປະສານສົມທົບກັບຫ້ອງການສົ່ງ ເສີມກະສິກໍາ ແລະ ປ່າໄມ້ເມືອງ | ເປັນໄລຍະ ແລະ ໃນເວລາທີ່ມີ ບັນຫາ | |
| 6 | ຈັດສັນງົບປະມານໃນການບົວລະບັດຮັກສາ ແລະ ສ້ອມແປງ | ກ່ອນລະດູການ ແລະ ໃນເວລາສຸກເສີນ | |

## ແຜນງົບປະມານຄຸ້ມຄອງນຳໃຊ້ ແລະ ປົກປັກຮັກສາໂຄງການຍ່ອຍຊົນລະປະທານ

ຊົນລະປະທານເປັນໂຄງສ້າງທີ່ປະກອບດ້ວຍຫຼາຍພາກສ່ວນທີ່ກະຈາຍຕາມບ້ານ,ຕາມທົ່ງນາ ແລະຕາມຫວ້ຍນ້ຳຊຶ່ງປະກອບມີຫົວງານທີ່ຢູ່ຫວ້ຍນ້ຳ,ຄອງເໜືອງສາຍແມ່,ຄອງເໜືອງສາຍຍ່ອຍ ແລະ ຄອງລະບາຍ,ອາຄານຕ່າງໆ ແລະ ປະຕູເອົານ້ຳເຂົ້າແຕ່ລະທົ່ງນາ.ສ່ວນປະກອບນີ້ລ້ວນແລ້ວແຕ່ຕອ້ງການປົກປັກຮັກສາ ແລະ ສອ້ມແປງທີ່ແຕກຕ່າງກັນດັ່ງນັ້ນປະຊາຊົນຕອ້ງມີແຜນການງົບປະມານທີ່ເໝາະສົມເພື່ອຮັບປະກັນໃຫ້ລະບົບຊົນລະປະທານຖືກນຳໃຊ້ໄດ້ໄລຍະຍາວນານດວ້ຍການເກັບເງິນຄ່າຊົມໃຊ້ນ້ຳເຂົ້າກອງທຶນຢ່າງເປັນປົກກະຕິ. ໃນຕາຕະລາງນີ້ສະແດງເຖິງງົບປະມານທີ່ຕອ້ງການພາຍໃນ1ປີສຳລັບລະບົບຊົນລະປະທານຄົບຊຸດແຕ່ຖ້າໂຄງການຍອ່ຍມີພຽງແຕ່ສ່ວນໄດໜຶ່ງແມ່ນໃຫ້ເອົາແຕ່ມູນຄ່າທີ່ສະແດງໃນຕາຕະລາງນັ້ນມາຄິດໄລ່ກຳໜົດງົບປະມານທີ່ຈຳເປັນນຳໃຊ້ເຂົ້າໃນການປົກປັກຮັກສາ.

### ຕາຕະລາງສັງລວມວຽກວຽກຄຸ້ມຄອງນຳໃຊ້ລະບົບຊົນລະປະທານພາຍໃນປີ

| ລ/ດ | ໜ້າວຽກ | ຈຳນວນເທື່ອ/ປີ | ແຮງງານທີ່ຕ້ອງນຳໃຊ້ | | | ວັດສະດຸທີ່ຕ້ອງໃຊ້ | | | ລວມມູນຄ່າສ້ອມແປງ/ປີ | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | | ຈຳນວນແຮງງານ/8 ຊົ່ວໂມງ | ຄ່າແຮງງານ/8ຊົ່ວໂມງ | ລວມ | ຈຳນວນວັດສະດຸ | ມູນຄ່າ | ລວມ | | |
| I | **ຫົວງານ** | | | | | | | | **3,150,000** | |
| 1 | ອະນາໄມຕະກອນຢູ່ໜ້າຝາຍ | 1 | 20 | 50,000 | 1,000,000 | | | | 1,000,000 | |
| 2 | ອະນາໄມຂີ້ເຫຍື່ອ, ຂອນໄມ້, ຖາງຫຍ້າບໍລິເວນຝາຍ | 4 | 20 | | | | | | | |
| 3 | ທາສີກັນໜ້ຽງຮາວເຫລັກ, ຊຸດປະຕູເອົານ້ຳເຂົ້າຄອງເໜືອງ ແລະປະຕູລະບາຍຊາຍ | 1 | 2 | 50,000 | 100,000 | 3 | 100,000 | 300,000 | 400,000 | |
| 4 | ຖົມດິນດ້ານຂ້າງຝາຍກໍລະນີນ້ຳກັດເຊາະ | 1 | 20 | | | | | | | |
| 5 | ຢາຮອຍແຕກແຫງຕາມພື້ວໜ້າເບຕົງຂອງຝາຍ | 1 | 2 | 50,000 | 100,000 | 1 | 50,000 | 50,000 | 150,000 | |
| 6 | ລຽງຫີນທ້າຍຝາຍກໍລະນີນ້ຳເຊາະ | 1 | 20 | 50,000 | 1,000,000 | | | | 1,000,000 | |
| 7 | ປ່ຽນຖ່າຍແປ້ນປະຕູເອົານ້ຳເຂົ້າຄອງເໜືອງ ຫລືປະຕູລາຍບາຍຊາຍກໍລະນີພຸໂດກ ຫລື ເສຍ | 1 | 2 | 50,000 | 100,000 | 1 | 500,000 | 500,000 | 600,000 | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| **II** | **ຄອງເໝືອງ ແລະ ອາຄານ** | | | | | | | | **2,150,000** | |
| **ກ** | **ຄອງເໝືອງ** | | | | | | | | **500,000** | |
| 1 | ອະນາໄມຕະກອນຕາມຄອງເໝືອງ | 1 | 10 | 50,000 | 500,000 | | | | 500,000 | |
| 2 | ອະນາໄມຂີ້ເຫຍື່ອ, ຂອນໄມ້, ຖາງຫຍ້າຕາມຄອງເໝືອງ | 4 | 20 | | | | | | | |
| 3 | ຖົມດິນສັນຄອງເໝືອງ ກໍລະນີຫຍຸບໂຕ | 2 | 20 | | | | | | | |
| 4 | ສ້ອມແປງເປີ້ນເນີນດ້ານຂ້າງຄອງເໝືອງ | 2 | 20 | | | | | | | |
| **ຂ** | **ອາຄານ** | | | | | | | | **1,650,000** | |
| 1 | ອະນາໄມຕະກອນຕາມອາຄານຕ່າງໆ | 1 | 10 | 50,000 | 500,000 | | | | 500,000 | |
| 2 | ອະນາໄມຂີ້ເຫຍື່ອ, ຂອນໄມ້, ຖາງຫຍ້າບໍລິເວນອາຄານ | 4 | 10 | | | | | | | |
| 3 | ທາສີກັນໝ້ຽງຮາວເຫລັກ, ຊຸດປະຕູເອົານ້ຳຕາມອາຄານຕ່າງໆ | 1 | 2 | 50,000 | 100,000 | 3 | 100,000 | 300,000 | 400,000 | |
| 4 | ຖົມດິນດ້ານຂ້າງອາຄານ ກໍລະນີດິນຫຍຸບໂຕ | 1 | 10 | | | | | | | |
| 5 | ຢາຮອຍແຕກແຫງຕາມຜິວໜ້າເບຕົງຂອງອາຄານຕ່າງໆ | 1 | 2 | 50,000 | 100,000 | 1 | 50,000 | 50,000 | 150,000 | |
| 6 | ຖົມດິນທ້າຍອາຄານ ກໍລະນີນ້ຳເຊາະ | 1 | 10 | | | | | | | |
| 7 | ປ່ຽນຖ່າຍແປ້ນປະຕູຕາມອາຄານຕ່າງໆ ກໍລະນີພຸໂດກຫລື ເສຍ | 1 | 2 | 50,000 | 100,000 | 1 | 500,000 | 500,000 | 600,000 | |
| **III** | **ຄອງລະບາຍ** | | | | | | | | **500,000** | |
| 1 | ອະນາໄມຕະກອນຕາມຄອງລະບາຍ | 1 | 10 | 50,000 | 500,000 | | | | 500,000 | |
| 2 | ອະນາໄມຂີ້ເຫຍື່ອ, ຂອນໄມ້, ຖາງຫຍ້າຕາມຄອງລະບາຍ | 4 | 10 | | | | | | | |
| 3 | ຖົມດິນສັນຄອງລະບາຍ ກໍລະນີຫຍຸບໂຕ | 1 | 20 | | | | | | | |
| 4 | ສ້ອມແປງເປີ້ນເນີນດ້ານຂ້າງຄອງລະບາຍ | 1 | 20 | | | | | | | |
| **ລວມມູນຄ່າສ້ອມແປງ/ປີ** | | | | | | | | | **5,800,000** | |

- ໃນກໍລະນີໂຄງການນີ້ມີ58ຄົວເຮືອນໄດ້ຮັບຜົນປະໂຫຍດດັ່ງນັ້ນງົບທີ່ຕອ້ງການເພື່ອປົກປັກຮັກສາແຕ່ລະປີມີ 5,800,000 ກີບ.

ຈານວນເງີນຢ່າງນ້ອຍທີ່ຕ້ອງເກັບຕໍ່ 12 ເດືອນຕໍ່ຄອບຄົວ 100,000ຕໍ່ປີ

**<u>ໝາຍເຫດ</u>:**

1) ແຫລ່ງທືນແມ່ນເກັບຈາກຄອບຄົວທີ່ໄດ້ຮັບຜົນປະໂຫຍດຈາກໂຄງການ, ສະນັ້ນການເກັບເງີນແມ່ນຂື້ນກັບເນື້ອທີ່ການຜະລິດຂອງຊາວບ້ານທີ່ໄດ້ຮັບຜົນປະໂຫຍດຈາກໂຄງການໂດຍອີງຕາມການຕົກລົງເຫັນດີກັນພາຍໃນບ້ານ

2) ຖ້າອີງໃສ່ອັດຕາທີ່ກົມຊົນລະປະທານວາງອອກແມ່ນ:

ກ. ເນື້ອທີ່ນາ ຈະເສຍພັນທະ ເຂົ້າເປືອກ 200 ກິໂລ/ເຮັກຕາ/ປີ

ຂ. ເນື້ອທີ່ປູກພືດ ຈະເສຍພັນທະ ເຂົ້າເປືອກ 100 ກິໂລ/ເຮັກຕາ/ປີ

ຄ. ລ້ຽງສັດນໍ້າທຸກປະເພດ ຈະເສຍພັນທະ ເຂົ້າເປືອກ 500 ກິໂລ/ເຮັກຕາ/ປີ

ງ. ນໍາໃຊ້ນໍ້າທາງອ້ອມ ຈະເສຍພັນທະ ເຂົ້າເປືອກ 140 ກິໂລ/ເຮັກຕາ/ປີ

ກໍລະນີບໍ່ມີການເປ່ເພ ແລະ ບໍ່ໄດ້ຊື້ອຸປະກອນບາງຢ່າງບ້ານກໍ່ຈະມີເງີນແຮ ຫຼື ສາມາດຫຼຸດຈໍານວນການເກັບເງີນລົງໃນປີຕໍ່ໄປກໍ່ໄດ້.

## ຕາຕະລາງສັງລວມວຽກງານຄຸ້ມຄອງນຳໃຊ້ລະບົບຊົນລະປະທານ ພາຍໃນ 1 ປີ

| ລ/ດ | ໜ້າວຽກ | ງົບປະມານ | ແຮງງານ (ຄົນ) | ເວລາ (ມື້) | ມັງກອນ | ກຸມພາ | ມີນາ | ເມສາ | ພຶດສະພາ | ມິຖຸນາ | ກໍລະກົດ | ສິງຫາ | ກັນຍາ | ຕຸລາ | ພະຈິກ | ທັນວາ |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | # # # | # # # | # # # | # # # | # # # | # # # | # # # | # # # | # # # | # # # | # # # | # # # |
| **I** | **ທົ່ວໄປ** | **3,150,000** | | | | | | | | | | | | | | |
| 1 | ອະນາໄມຕະກອນຢູ່ໜ້າຝາຍ | 1,000,000 | 20 | | | | | | | | | | | | | |
| 2 | ອະນາໄມຂີ້ເຫຍື້ອ, ຂອນໄມ້, ຖາງຫຍ້າບໍລິເວນຝາຍ | 0 | 20 | 4 | | | | | | | | | | | | |
| 3 | ທາສີກັນໝ້ຽງຂາວເຫລັກ, ຊຸດປະຕູເອົານ້ຳເຂົ້າຄອງເໝືອງ ແລະ ປະຕູລະບາຍຊາຍ | 400,000 | 2 | 1 | | | | | | | | | | | | |
| 4 | ຖົມດິນດ້ານຂ້າງຝາຍ ກໍລະນີນ້ຳກັດເຊາະ | 0 | 20 | 1 | | | | | | | | | | | | |
| 5 | ປາຂອບແຕກແຫງຕາມຜິວໜ້າເບຕົງຂອງຝາຍ | 150,000 | 2 | 1 | | | | | | | | | | | | |
| 6 | ລຽງຫີນທ້າຍຝາຍ ກໍລະນີນ້ຳເຊາະ | 1,000,000 | 20 | 1 | | | | | | | | | | | | |
| 7 | ປ່ຽນຖ່າຍແປ້ນປະຕູເອົານ້ຳເຂົ້າຄອງເໝືອງ ຫລື ປະຕູລາຍບາຍຊາຍ ກໍລະນີພຸໃດກ ຫລື ເສຍ | 600,000 | 2 | 1 | | | | | | | | | | | | |
| **II** | **ຄອງເໝືອງ ແລະ ອາຄານ** | **2,150,000** | | | | | | | | | | | | | | |
| **ກ** | **ຄອງເໝືອງ** | **500,000** | | | | | | | | | | | | | | |
| 1 | ອະນາໄມຕະກອນຕາມຄອງເໝືອງ | 500,000 | 10 | 1 | | | | | | | | | | | | |
| 2 | ອະນາໄມຂີ້ເຫຍື້ອ, ຂອນໄມ້, ຖາງຫຍ້າຕາມຄອງເໝືອງ | 0 | 20 | 4 | | | | | | | | | | | | |
| 3 | ຖົມດິນສັນຄອງເໝືອງ ກໍລະນີຫຍຸບໃຕ | 0 | 20 | 2 | | | | | | | | | | | | |
| 4 | ສ້ອມແປງເປີນເນີນດ້ານຂ້າງຄອງເໝືອງ | 0 | 20 | 2 | | | | | | | | | | | | |
| **ຂ** | **ອາຄານ** | **1,650,000** | | | | | | | | | | | | | | |
| 1 | ອະນາໄມຕະກອນຕາມອາຄານຕ່າງໆ | 500,000 | 10 | 1 | | | | | | | | | | | | |
| 2 | ອະນາໄມຂີ້ເຫຍື້ອ, ຂອນໄມ້, ຖາງຫຍ້າບໍລິເວນອາຄານ | 0 | 10 | 4 | | | | | | | | | | | | |
| 3 | ທາສີກັນໝ້ຽງຂາວເຫລັກ, ຊຸດປະຕູເອົານ້ຳຕາມອາຄານຕ່າງໆ | 400,000 | 2 | 1 | | | | | | | | | | | | |
| 4 | ຖົມດິນດ້ານຂ້າງອາຄານ ກໍລະນີດິນຫຍຸບໃຕ | 0 | 10 | 1 | | | | | | | | | | | | |
| 5 | ປາຂອບແຕກແຫງຕາມຜິວໜ້າເບຕົງຂອງອາຄານຕ່າງໆ | 150,000 | 2 | 1 | | | | | | | | | | | | |
| 6 | ຖົມດິນທ້າຍອາຄານ ກໍລະນີນ້ຳເຊາະ | 0 | 10 | 1 | | | | | | | | | | | | |
| 7 | ປ່ຽນຖ່າຍແປ້ນປະຕູຕາມອາຄານຕ່າງໆ ກໍລະນີພຸໃດກ ຫລື ເສຍ | 600,000 | 2 | 1 | | | | | | | | | | | | |
| **III** | **ຄອງລະບາຍ** | **500,000** | | | | | | | | | | | | | | |
| 1 | ອະນາໄມຕະກອນຕາມຄອງລະບາຍ | 500,000 | 10 | 1 | | | | | | | | | | | | |
| 2 | ອະນາໄມຂີ້ເຫຍື້ອ, ຂອນໄມ້, ຖາງຫຍ້າຕາມຄອງລະບາຍ | 0 | 10 | 4 | | | | | | | | | | | | |
| 3 | ຖົມດິນສັນຄອງລະບາຍ ກໍລະນີຫຍຸບໃຕ | 0 | 20 | 1 | | | | | | | | | | | | |
| 4 | ສ້ອມແປງເປີນເນີນດ້ານຂ້າງຄອງລະບາຍ | 0 | 20 | 1 | | | | | | | | | | | | |

Page 1
Page 2

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ແຂວງ.........................................................

ເມືອງ.........................................................

ໂຄງການຊົນລະປະທານ...................................

**ພາລະບົດບາດ**

**ຂອງກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ**

**<u>ບ່ອນອີງ:</u>**

- ອີງຕາມ: ດຳລັດວ່າດ້ວຍການສ້າງຕັ້ງສະມາຄົມເລກທີ 115/ນຍ, ລົງວັນທີ 29 ເມສາ 2009.
- ອີງຕາມ: ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ເລກທີ 26/ນຍ, ລົງວັນທີ 16/2/1998 ວ່າດ້ວຍການມອບໂອນ ໂຄງການຊົນລະປະທານໃຫ້ກາຍເປັນຂອງລວມໝູ່ຂອງປະຊາຊົນຢ່າງຂາດຕົວ.
- ອີງຕາມ: ຂໍ້ກຳນົດວ່າດ້ວຍສະມາຄົມຜູ້ຊົມໃຊ້ນ້ຳຊົນລະປະທານ ເລກທີ່ 0156/ກປ. ລົງວັນທີ11/3/97 ວ່າດ້ວຍການສ້າງຕັ້ງສະມາຄົມຜູ້ຊົມໃຊ້ນ້ຳຊົນລະປະທານ.
- ອີງຕາມ: ການຕົກລົງເຫັນດີຂອງອຳນາດການປົກຄອງບ້ານ................................ ແລະ ຊາວນາ ໃນຂອບເຂດເນື້ອທີ່ນາຂອງໂຄງການຊົນລະປະທານ..............................................ເມືອງ................................ ແຂວງ................................................

**<u>ມາດຕາ 1</u>: ຊື່ ແລະ ທີ່ຕັ້ງ**

1. ໂຄງການຊົນລະປະທານ............................................... ຕັ້ງຢູ່ ບ້ານ.................................. ເມືອງ.......................................ແຂວງ......................................... ເຊິ່ງເປັນປະເພດຝາຍນ້ຳລົ້ນ, ໂຄງການຊົນລະປະທາ ດັ່ງກ່າວ ປະກອບດ້ວຍຊາວບ້ານຜູ້ທີ່ມີດິນ ຫລື ຜູ້ທີ່ຜະລິດກະສິກຳຢູ່ເຂດໂຄງການຊົນລະປະທານດັ່ງກ່າວ, ຊາວບ້ານເຫລົ່ານີ້ຈະໄດ້ຈັດຕັ້ງເປັນກຸ່ມກິດຈະກຳໂດຍຮຽກວ່າ: ກຸ່ມຜູ້ຊົມໃຊ້ນ້ຳໂຄງການຊົນລະປະທານ..........................................ບ້ານ................................ ເມືອງ.................................ແຂວງ............................................
2. ສຳນັກງານຂອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ຕັ້ງຢູ່ບ້ານ..................................ເມືອງ............. ແຂວງ.................................................
3. ເນື້ອທີ່ຊົນລະປະທານ ຕັ້ງຢູ່ຂອບເຂດ ບ້ານ.............................ເມືອງ..............ແຂວງ..................
    - ເນື້ອທີ່ນາປີ ຈຳນວນ........................ເຮັກຕາ
    - ເນື້ອທີ່ນາແຊງ ຈຳນວນ ......................... ເຮັກຕາ
    - ເນື້ອທີ່ປູກພືດ ຈຳນວນ .........................ເຮັກຕາ
    - ເນື້ອທີ່ໜອງປາ ຈຳນວນ .........................ເຮັກຕາ

    ລວມເນື້ອທີ່ທັງໝົດ:................................ເຮັກຕາ

**ມາດຕາ 2: ຈຸດປະສົງ**

ກຸ່ມຜູ້ໃຊ້ນໍ້າຊົນລະປະທານ.........................................ເປັນກຸ່ມເພື່ອບໍລິຫານ ແລະ ການຈັດການລະບົບຊົນລະປະທານ ມີຈຸດປະສົງສະເພາະແມ່ນ:

- ເພື່ອສົ່ງເສີມ ແລະ ພັດທະນາ ການຜະລິດກະສິກຳເຂດເນື້ອທີ່ຊົນລະປະທານ.
- ເພື່ອພັດທະນາໃຫ້ກຸ່ມຜູ້ຊົມໃຊ້ນໍ້າເປັນເຈົ້າການໃນການຄຸ້ມຄອງ-ນໍ້າໃຊ້, ບົວລະບັດຮັກສາລະບົບຊົນລະປະທານທັງໃຫ້ມີປະສິດທິຜົນ.
- ເພື່ອພັດທະນາຄວາມຮູ້ຄວາມສາມາດ ແລະ ຄວາມຊຳນິຊຳນານຂອງສະມາຊິກ ດ້ານການຜະລິດກະສິກຳ ພ້ອມທັງສົ່ງເສີມການມີສ່ວນຮ່ວມ ຂອງສະມາຊິກໃນການແລກປ່ຽນປະສົບການ ດ້ານເຕັກນິກວິຊາການ.
- ເພື່ອປະສານສົມທົບກັບໜ່ວຍງານຂອງພັກ ແລະ ລັດຖະບານ, ບັນດາຮ້ານຄ້າ, ບໍລິສັດ ແລະ ທະນາຄານ ໃນການສະໜອງດ້ານເຕັກນິກ, ທຶນຮອນ ແລະ ສິນເຊື່ອ ທີ່ຈຳເປັນໃນການພັດທະນາການຜະລິດກະສິກຳ ແລະ ການພັດທະນາຊົນລະປະທານ.
- ເພື່ອອຳນວຍຄວາມສະດວກໃນການຄໍ້າປະກັນການທົດແທນສິນເຊື່ອ ເປັນເງິນ ຫລື ເປັນວັດຖຸ ແລະ ການເກັບຄ່ານໍ້າຂອງສະມາຄົມ ພ້ອມທັງຄຸ້ມຄອງທຶນດັ່ງກ່າວ.
- ເພື່ອສະດວກໃນການຈັດຊື້ວັດຖຸ ເພື່ອຮັບໃຊ້ການຜະລິດ, ສິນເຊື່ອ, ເງິນກູ້ຢືມ, ແລະ ການຈຳໜ່າຍຜະລິດຕະພັນ ຂອງສະມາຊິກເພີ້ມລາຍຮັບ ແລະ ຍົກລະດັບການດຳລົງຊີວິດຂອງສະມາຊິກໃຫ້ດີຂຶ້ນເລື້ອຍໆ.
- ເພື່ອພັດທະນາລະບົບຂໍ້ມູນຂ່າວສານ, ເຕັກນິກວິຊາການດ້ານຊົນລະປະທານ, ການກະສິກຳ ແລະ ການຕະຫລາດໃຫ້ເປັນປະໂຫຍດ ແກ່ການປູກຝັງ ແລະ ລ້ຽງສັດ.
- ເສີມຂະຫຍາຍຄວາມສາມັກຄີຮັກແພງ ລະຫວ່າງສະມາຊິກ ແລະ ການມີສ່ວນຮ່ວມກັບສະມາຊິກຊາວນາອື່ນໆ ແລະ ອົງກອນທີ່ບໍ່ຂຶ້ນກັບລັດຖະບານ, ໃນການສົ່ງເສີມການພັດທະນາໃນການພັດທະນາບ້ານ.
- ສົ່ງເສີມການຄຸ້ມຄອງຊັບພະຍາກອນທຳມະຊາດ (ໂດຍສະເພາະແມ່ນ ດິນ ແລະ ນໍ້າ) ເພື່ອຮັບປະກັນໃນການຜະລິດກະສິກຳໃຫ້ຍືນຍົງ .
- ສົ່ງເສີມການຂະຫຍາຍເນື້ອທີ່ຊົນລະປະທານ ຈາກທີ່ມີປະຈຸບັນເພື່ອຮັບໃຊ້ຜົນປະໂຫຍດຂອງສະມາຊິກຜູ້ຊົມໃຊ້ນໍ້າຊົນລະປະທານ.
- ການປົກປັກຮັກສາລະບົບຊົນລະປະທານຂອງຕົນເອງ ບໍ່ໃຫ້ມີການທຳລາຍຈາກບຸກຄົນ ຫລື ກຸ່ມຄົນ, ພ້ອມທັງປ້ອງກັນບໍ່ໃຫ້ໃຊ້ລະບົບຊົນລະປະທານດັ່ງກ່າວໄປໃນທາງທີ່ຜິດ.

**ມາດຕາ 3: ວ່າດ້ວຍການຈັດຕັ້ງກຸ່ມຜູ້ຊົມໃຊ້ນໍ້າ**

ກຸ່ມຜູ້ຊົມໃຊ້ນໍ້າ ຊົນລະປະທານ ໂຄງການຊົນລະປະທານ.........................................ໄດ້ສ້າງຕັ້ງຂຶ້ນໃນວັນທີ............/............/................ດ້ວຍວິທີການປ່ອນບັດເລືອກຕັ້ງ ຈາກສະມາຊິກຂອງສະມາຄົມເຊິ່ງປະກອບດ້ວຍ:

1. ຄະນະກຳມະການກຸ່ມຜູ້ນຳໃຊ້ນໍ້າ ປະກອບດ້ວຍ.....................ທ່ານ, ຍິງ.................ທ່ານ
    - ທ່ານ................................................................ປະທານ ( ຮັບຜິດຊອບຊີ້ນຳລວມ )
    - ທ່ານ............................................ຮອງປະທານຜູ້ທີໜຶ່ງ ຮັບຜິດຊອບການແບ່ງປັນນໍ້າ

- ທ່ານ....................................ຮອງປະທານ ຜູ້ທີສອງ ຮັບຜິດຊອບການຜະລິດກະສິກຳ.
- ທ່ານ.............................................................ຄະນະກຳມະການ ຮັບຜິດຊອບບັນຊີ.
- ທ່ານ......................................................ຄະນະກຳມະການ ຮັບຜິດຊອບຄັງເງິນສົດ.

2. ສະມາຊິກຂອງກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ ມີຈຳນວນທັງໝົດ..............ຄອບຄົວ, ມີ..................ຄົນ, ຍິງ...............ຄົນ. ໃນນີ້ ມາຈາກບ້ານ...........................ຄອບຄົວ, ບ້ານ..............................ຄອບຄົວ, ບ້ານ................................ຄອບຄົວ, ບ້ານ ............................ຄອບຄົວ. ບ້ານ......................ຄອບຄົວ ຊຶ່ງໄດ້ແບ່ງອອກເປັນຈຸນຳໃຊ້ນ້ຳ ຈຳນວນ............ຈຸ.
3. ຄະນະທີ່ປຶກສາຂອງກຸ່ມຜູ້ນຳໃຊ້ນ້ຳ.
   - ປະກອບດ້ວຍອຳນາດການປົກຄອງເມືອງ......................................
   - ອຳນາດການປົກຄອງບ້ານ........................................................
4. ໜ່ວຍງານທີ່ກ່ຽວຂ້ອງ:
   - ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ..............................., ພະແນກກະສິກຳ ແລະ ປ່າໄມ້ແຂວງ ..................................................
   - ຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ເມືອງ.............................................
   - ກອງທຶນຫລຸດຜ່ອນຄວາມທຸກຍາກ ເມືອງ...................................................................................
5. ພາລະບົດບາດ ແລະ ສິດໜ້າທີ່ຂອງຄະນະທີປຶກສາ.

**<u>ມາດຕາ 4</u>: ພາລະບົດບາດ, ສິດ ແລະ ໜ້າທີ່.**

### 4.1 <u>ທີ່ປຶກສາຂັ້ນເມືອງ:</u>

- ມີບົດບາດເປັນທີ່ປຶກສາໃຫ້ແກ່ກຸ່ມຜູ້ນຳໃຊ້ນ້ຳໃນລະດັບເມືອງ.
- ມີໜ້າທີ່ຊີ້ນຳການຕັດສິນບັນຫາ ແກ້ໄຂບັນຫາທີ່ອາດຈະເກີດຂຶ້ນຊ່ວຍກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ.
- ມີບົດບາດເປັນທີ່ປຶກສາ, ປຶກສາຫາເພື່ອຮອງຮັບເອົາບັນຫາ ແລະ ການສະເໜີ ນັບທັງຂໍ້ມູນຂ່າວສານ ຕ່າງໆ ຕໍ່ພາກສ່ວນທີ່ກ່ຽວຂ້ອງ.
- ອະນຸມັດການແຕ່ງຕັ້ງຄະນະກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ.
- ລະດົມການປະກອບສ່ວນ, ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາລະບົບຊົນລະປະທານ.

### 4.2 <u>ທີ່ປຶກສາຂັ້ນບ້ານ:</u>

- ມີບົດບາດເປັນທີ່ປຶກສາໃຫ້ກຸ່ມນຳໃຊ້ນ້ຳຊົນລະປະທານໃນລະດັບບ້ານເພື່ອແກ້ໄຂບັນຫາຕ່າງໆ ທີ່ອາດຈະເກີດຂຶ້ນ ແລະ ກ່ຽວຂ້ອງກັບກຸ່ມຜູ້ຊົມໃຊ້ນ້ຳ.
- ຈັດຕັ້ງການປຸກລະດົມປະຊາຊົນເພື່ອປະກອບສ່ວນໃນການພັດທະນາລະບົບຊົນລະປະທານ.
- ນຳສະເໜີອຳນາດການປົກຄອງບ້ານໃນການອະນຸມັດແຕ່ງຕັ້ງກຸ່ມຜູ້ຊົມໃຊ້ນ້ຳ
- ຈັດຕັ້ງປຸກລະດົມປະຊາຊົນປະກອບສ່ວນໃນການພັດທະນາລະບົບຊົນລະປະທານ.

### 4.3 <u>ພາລະບົດບາດ,ສິດ ແລະ ໜ້າທີ່ຂອງໜ່ວຍງານທີ່ກ່ຽວຂ້ອງ</u>

1. ໜ້າທີ່ພາລະບົດບາດຂອງຂະແໜງການກ່ຽວຂ້ອງຂັ້ນສູນກາງ:

- ຮັບຜິດຊອບລະບົບຂໍ້ມູນຂ່າວສານທັງໝົດຂອງແຕ່ລະພາກສ່ວນ
- ປຶກສາຫາລືກັບພະແນກກະສິກຳ ແລະ ປ່າໄມ້ແຂວງເຖິງຄວາມເປັນໄປໄດ້ຂອງແຕ່ລະໂຄງການ
- ພິຈາລະນາການອະນຸມັດໂຄງການຍ່ອຍຢູ່ໃນແຕ່ລະແຂວງ
- ລົງກວດກາສະຖານທີການກໍ່ສ້າງຊົນລະປະທານຮ່ວມກັບຫ້ອງການກະສິກຳປ່າໄມ້ເມືອງ ແລະ ກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ ເພື່ອຄົ້ນຄວ້າ ຄວາມເປັນໄປໄດ້ໃນທຸກດ້ານ.
- ປະສານສົມທົບ ແລະ ກະກຽມຂໍ້ມູນເພື່ອອອກແບບການກໍ່ສ້າງໂຄງການຍ່ອຍຢູ່ໃນແຕ່ລະແຂວງ.
- ກະກຽມອຸປະກອນ, ຈັດຫາວັດສະດຸກໍ່ສ້າງ, ກະກຽມການປະມູນ, ແກ້ໄຂສັນຍາ
- ຕິດຕາມຄວາມຄືບໜ້າຂອງໂຄງການຍ່ອຍໂດຍຜ່ານຫ້ອງການກະສິກຳ ແລະ ປ່າໄມ້ແຂວງ.
- ຈັດຕັ້ງການມອບຮັບໂຄງການຍ່ອຍໂດຍຜ່ານ ພະແນກກະສິກຳ ແລະ ປ່າໄມ້ແຂວງ
- ຊຸກຍູ້ການຄຸ້ມຄອງນຳໃຊ້ລະບົບຊົນລະປະທານເຂົ້າໃນການຜະລິດກະສິກຳ

2. ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຂະແໜງການກ່ຽວຂ້ອງຂັ້ນແຂວງ
   - ຕາງໜ້າໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ
   - ປະສານສົມທົບກັບຫ້ອງການກະສິກຳ-ປ່າໄມ້ເມືອງ ລົງເກັບກຳຂໍ້ມູນຕ່າງໆ
   - ຕອບສະໜອງ ຂໍ້ມູນພື້ນຖານດ້ານເສດຖະກິດ-ສັງຄົມ, ສິ່ງແວດລ້ອມໃຫ້ແກ່ຫ້ອງການຄຸ້ມຄອງໂຄງການ ພັດທະນາໂຄງລ່າງຊົນນະບົດພາກເໜືອເພື່ອການອະນຸມັດ.
   - ຮັບຜິດຊອບການສຳຫລວດ, ສະເໜີແບບ ຕໍ່ໜ່ວຍງານສຳຫລວດ-ອອກແບບຊົນລະປະທານເພື່ອອະນຸມັດ
   - ສະເໜີແຜນການກໍ່ສ້າງ
   - ນຳສະເໜີໜ້າວຽກ ທີ່ຈະປະຕິບັດໂດຍບໍລິສັດ ຮັບເໝົາ ແລະ ຊາວນາ
   - ຊີ້ນຳ ແລະ ຊ່ວຍເຫລືອ ສະມາຄົມທຸກໆ ບັນຫາ ໃນການຄຸ້ມຄອງຊົນລະປະທານ
   - ຕິດຕາມການກໍ່ສ້າງ, ການປະຕິບັດສັນຍາກໍ່ສ້າງ, ການຄຸ້ມຄອງການກໍ່ສ້າງ, ຮ່ວມການຈັດປະມູນພາຍໃນ ແລະ ປະເມີນຜົນການປະມູນ ເພື່ອນຳສະເໜີຫາຫ້ອງການໂຄງການ ພຄຊ ຂັ້ນສູນກາງເພື່ອອະນຸມັດ.
   - ກວດກາບັນຊີການເງິນຕ່າງໆ ແລະ ເຮັດບົດລາຍງານຫ້ອງປະສານງານຂັ້ນສູນກາງ.
   - ຊີ້ນຳການຄຸ້ມຄອງທຶນທີ່ສົ່ງໃຫ້ສະມາຄົມແຕ່ລະກິດຈະກຳຂອງໂຄງການ.
   - ກະກຽມແຜນການຄຸ້ມຄອງ-ນຳໃຊ້ລະບົບຊົນລະປະທານໃຫ້ແກ່ສະມາຄົມ.

3. ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການກ່ຽວຂ້ອງຂັ້ນເມືອງ.
   - ມີບົດບາດຕາງໜ້າໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
   - ປະສານສົມທົບກັບຫ້ອງການຂັ້ນແຂວງ ແລະ ກຸ່ມຜູ້ນຳໃຊ້ນ້ຳລົງເກັບກຳຂໍ້ມູນຂອງບ້ານທີ່ມີໂຄງການ.
   - ສະເໜີ ບົດລາຍງານຕ່າງໆ ໃຫ້ແກ່ ພະແນກກະສິກຳປ່າໄມ້ແຂວງ ເພື່ອພິຈາລະນາ ແລະ ມີຄຳເຫັນຕໍ່ເອກະສານ, ບົດລາຍງານຕ່າງໆຂອງໂຄງການຂັ້ນເມືອງ
   - ສົມທົບກັບແຂວງ ແລະ ສູນກາງເພື່ອສັງລວມຂໍ້ມູນ, ສະພາບເສດຖະກິດ - ສັງຄົມ, ສະພາບແວດລ້ອມ, ເຜີຍແຜ່ຍຸດທະສາດການພັດທະນາລະບົບຊົນລະປະທານໃຫ້ແກ່ສະມາຄົມ.

4.4 **<u>ການມີສ່ວນຮ່ວມ:</u>**

- ຊ່ວຍໃນການປະກອບເອກະສານເພື່ອຈັດຕັ້ງຂື້ນທະບຽນໃຫ້ກຸ່ມນໍາໃຊ້ນໍ້າ ເປັນສະມາຄົມຜູ້ຊົມໃຊ້ນໍ້າ ພາຍຫລັງກຸ່ມນໍາໃຊ້ນໍ້າ ໄດ້ຮັບການເສີມສ້າງຄວາມເຂັ້ມແຂງ ແລະ ມີຄວາມພ້ອມທີ່ຈະຈັດຕັ້ງເປັນສາມາຄົມແລ້ວ.
- ຊ່ວຍກະກຽມແຜນການກໍ່ສ້າງ
- ຕິດຕາມ ການກໍ່ສ້າງ, ການປະຕິບັດສັນຍາ, ປະສານສົມທົບກັບກຸ່ມຜູ້ຊົມໃຊ້ນໍ້າ
- ຕິດຕາມ ແລະ ຊີ້ນໍາການຄຸ້ມຄອງກອງທຶນທີ່ອະນຸມັດໃນແຕ່ລະກິດຈະກໍາຊ່ວຍສະມາຄົມຜູ້ໃຊ້ນໍ້າ (ຖ້າມີ)
- ຕິດຕາມ ແລະ ຄຸ້ມຄອງນໍາໃຊ້ລະບົບຊົນລະປະທານຂອງຊາວບ້ານເຂົ້າໃນການຜະລິດກະສິກໍາ ຢ່າງມີປະສິດທິຜົນສູງ .

**<u>ມາດຕາ 5</u>: ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະບໍລິຫານງານກຸ່ມຜູ້ນໍາໃຊ້ນໍ້າ.**

ຄະນະບໍລິຫານງານກຸ່ມຜູ້ນໍາໃຊ້ນໍ້າ ຈັດຕັ້ງ ຂື້ນໂດຍມີການຄັດເລືອກ ແບບປ່ອນບັດ ແລະ ໄດ້ຄະແນນສຽງສ່ວນຫລາຍມາຈາກສະມາຊິກ. ມີບົດບາດເປັນຄະນະບໍລິຫານງານຂອງກຸ່ມຜູ້ຊົມໃຊ້ນໍ້າຖືກຕ້ອຕາມກົດໝາຍ. ມີສິດໃນການຕິດຕໍ່ພົວພັນວຽກງານທີ່ຈໍາເປັນນໍາຂັ້ນເທີງ, ອົງການ, ພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ຮັບຜິດຊອບດ້ານກົດໝາຍຕໍ່ຜົນປະໂຫຍດຂອງກຸ່ມ ແລະ ສະມາຊິກ. ຄະນະກໍາມະການກຸ່ມຜູ້ຊົມໃຊ້ນໍ້າ ກໍານົດໃຫ້ມີ ອາຍຸການ ເທົ່າກັບ 3 ປີ, ຫລັງຈາກນັ້ນຈະມີການຄັດເລືອກໃໝ່. ຖ້າຫາກວ່າມີຄວາມຈໍາເປັນສາມາດຄັດເລືອກໃນກອງປະຊຸມປະຈໍາປີຂອງກຸ່ມກໍ່ໄດ້.

5.1 **<u>ພາລະບົດບາດ, ສິດ ແລະ ໜ້າທີ່ມີຂອງກຸ່ມຜູ້ນໍາໃຊ້ນໍ້າ:</u>**

- ສະເໜີ ຄໍາຮ້ອງຂໍ ຫາຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ.
- ຈັດຕັ້ງສະມາຄົມໂດຍການຊີ້ນໍາຂອງວິຊາການພັດທະນາຂັ້ນບ້ານ.
- ກະກຽມ ແລະ ຂື້ນທະບຽນກຸ່ມໃຫ້ກາຍເປັນສະມາຄົມຢ່າງເປັນທາງການ.
- ປະສານສົມທົບທຸກໆ ບັນຫາ, ສະຫລູບຜົນໄດ້ຮັບ ແລະ ການສ້າງແຜນຈັດຕັ້ງປະຕິບັດ.
- ຈັດຕັ້ງການຄັດເລືອກປະທານສະມາຄົມຜູ້ນໍາໃຊ້ນໍ້າຊົນລະປະທານ.
- ເຂົ້າຮ່ວມສັງເກດການ ການກະກຽມສະຖານທີ່ກໍ່ສ້າງ ແລະ ການຕິດຕາມສັນຍາການກໍ່ສ້າງຂອງຜູ້ຮັບເໝົາກໍ່ສ້າງ.
- ຈັດຕັ້ງກວດກາລະບົບການເງິນ ແລະ ການເກັບຄ່ານໍ້າຊົນລະປະທານ.
- ຮັບຮອງເອົາການມອບ-ຮັບການຄຸ້ມຄອງ ແລະ ນໍາໃຊ້ນໍ້າລະບົບຊົນລະປະທານ ຈາກຂັ້ນເທີງ ແລະ ໂຄງການ.

5.2 **<u>ສິດ ແລະ ໜ້າທີ່ຂອງປະທານກຸ່ມ:</u>**

- ມີສິດຕັດສິນ ແລະ ແກ້ໄຂບັນຫາທັງໝົດທີ່ເກີດຂື້ນໃນຂົງເຂດວຽກງານຂອງກຸ່ມຜູ້ຊົມໃຊ້ນໍ້າ.
- ເປັນປະທານຂອງກຸ້ມຜູ້ຊົມໃຊ້ນໍ້າໃນຂອບເຂດໂຄງການ.
- ຮັບຜິດຊອບລວມທຸກວຽກງານຂອງກຸ່ມ.
- ມີໜ້າທີ່ຕິດຕໍ່ພົວພັນກັບອົງການລັດ ແລະ ເອກະຊົນ.
- ມີໜ້າທີ່ໃນການຊອກແຫລ່ງທຶນມາຊ່ວຍກຸ່ມ.
- ຊ່ວຍເປັນທີ່ປຶກສາໃຫ້ແກ່ກອງທຶນໝູນວຽນຂອງກຸ່ມ.

- ຮັບຜິດຊອບກວດກາລະບົບຊົນລະປະທານ.
- ຮັບຜິດຊອບໃນການຊອກຕະຫລາດໃຫ້ແກ່ກອງທຶນໝູນວຽນຂອງກຸ່ມ.
- ເປັນຜູ້ຈັດແບ່ງນ້ຳໄປຕາມສາຍຄອງເໝືອງແຕ່ລະສາຍໃຫ້ແກ່ຈຸຜະລິດ.
- ຂື້ນແຜນການແບບສອ້ມແປງ, ແຈກຢ່າຍນ້ຳ, ສ້າງແຜນເກັບເງິນຄ່າຊົມໃຊ້ນ້ຳປະຈຳລະດູການຕາມການແບ່ງນ້ຳ.
- ມີສິດຕິດຕາມ ແລະ ກວດກາທຸກວຽກງານຂອງສະມາຄົມຜູ້ຊົມໃຊ້ນ້ຳຊົນລະປະທານ.

5.3 **<u>ສິດ ແລະ ໜ້າທີ່ຂອງຜູ້ຮອງປະທານຜູ້ທີ່ໜຶ່ງ:</u>**

- ມີສິດເຮັດວຽກແທນປະທານເວລາປະທານບໍ່ຢູ່ ໂດຍມີການແບ່ງວຽກກັບຄະນະຮອງຜູ້ທີ່ສອງຕາມການຕົກລົງເປັນໝູ່ຄະນະ.
- ມີສິດຕັດສິນໃຈບັນຫາຕ່າງໆ ແທນປະທານໃນການສ້າງແຜນຜະລິດ ແລະ ການຈັດຕັ້ງປະຕິບັດ, ການກວດກາຄວາມຄືບໜ້າຂອງແຕ່ລະກິດຈະກຳຂອງສະມາຄົມ.

5.4 **<u>ສິດ ແລະ ໜ້າທີ່ຮອງປະທານຜູ້ທີ່ສອງ :</u>**

- ເຮັດໜ້າທີ່ດ້ານວຽກງານເສດຖະກິດ-ສັງຄົມ.
- ມີໜ້າທີ່ໃນການສ້າງແຜນການການຜະລິດເຊັ່ນ: ການແຈກຢ່າຍນ້ຳ, ການປູກຝັງຕ່າງໆເຊັ່ນ: ນາປີ, ນາແຊງ, ແລະ ປູກພືດເປັນສິນຄ້າຕ່າງໆ.
- ມີໜ້າທີ່ກວດກາຕາມແຜນການທີ່ໄດ້ວາງອອກໄປແລ້ວວ່າ: ມີຜົນສຳເລັດ ຫລື ບໍ່.
- ການວາງແຜນການຈັດຕັ້ງປະຕິບັດກອງທຶນພັດທະນາບ້ານ.
- ອາດເປັນທັງຫົວໜ້າ ຫລື ບັນຊີການເງິນຂອງໜ່ວຍ.
- ມີໜ້າທີ່ກວດກາລະບົບຄອງເໝືອງ ແລະ ຂື້ນແຜນການປົກປັກຮັກສາສອ້ມແປງລະບົບອາຄານຕາມຄອງເໝືອງທີ່ມີການເປ່ເພ .
- ວາງແຜນການແຈກຢາຍນ້ຳ, ເກັບເງິນຄ່ານ້ຳສົ່ງໃຫ້ການເງິນ ຕາມການແບ່ງຄວາມຮັບຜິດຊອບຂອງຄະນະປະທານສະມາຄົມ.

5.5 **<u>ສິດ ແລະ ໜ້າທີ່ຂອງພາກສ່ວ ການບໍລິຫານຂອງກຸ່ມ</u>**

ປະທານໄດ້ແຕ່ງຕັ້ງຜູ້ຊ່ວຍຄະນະປະທານຂະແໜງບໍລິການຈັດການຈັດການກຸ່ມ, ຊື່ງປະກອບດ້ວຍຂະແໜງລະ 01 ທ່ານ

- ພາກສ່ວ ແຜນການ - ການເງິນຂອງກຸ່ມ
- ພາກສ່ວ ປູກຝັງ ແລະ ລ້ຽງສັດ
- ພາກສ່ວ ຈັດການແຈກຢາຍນ້ຳຊົນລະປະທານ

5.5.1. ສິດ ແລະ ໜ້າທີ່ຂອງຂະແໜງການເງິນ

ຂະແໜງແຜນການ - ການເງິນທີ່ຖືກແຕ່ງຕັ້ງຈາກປະທານຈະມີໜ້າທີ່ຮັບຜິດຊອບຄື:

- ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ການຜະລິດກະສິກຳຂອງກຸ່ມຮ່ວມກັບຂະແໜງປູກຝັງ, ລ້ຽງສັດ
- ສ້າງ ແລະ ຈັດຕັ້ງປະຕິບັດແຜນການຈັດຫານ້ຳຊົນລະປະທານຂອງກຸ່ມຮ່ວມກັບຂະແໜງຈັດຫານ້ຳ
- ສ້າງ ແລະ ຈັດຕັ້ງແຜນການກໍ່ສ້າງ ແລະ ປັບປຸງລະບົບຊົນລະປະທານ
- ເກັບກຳ ກຳລັງພົນຂອງກຸ່ມ
- ເກັບກຳບັນຊີລາຍຮັບລາຍຈ່າຍຂອງກຸ່ມ

- ສ້າງບົດລາຍງານດ້ານການເງິນຂອງກຸ່ມ

5.5.2. ສິດ ແລະ ໜ້າທີ່ຂອງພາກສ່ວ ການປູກຝັງ :

- ສ້າງ ແລະ ຈັດຕັ້ງປະຕິບັດແຜນການຜະລິດກະສິກຳໃນແຕ່ລະ ລະດູການ
- ສ້າງ ແລະ ຈັດຕັ້ງແຜນການຝຶກອົບຮົມ ການສົ່ງເສີມກະສິກຳໃຫ້ສະມາຊິກກຸ່ມ
- ສ້າງ ແລະ ຈັດຕັ້ງປະຕິບັດ ແຜນການ ປ່ອຍເງິນກູ້ຢືມຂອງທືນໝູນວຽນໃຫ້ກຸ່ມ ( ຖ້າມີ ) ເພື່ອການພັດທະນາກະສິກຳ ແລະ ອື່ນໆ.
- ຈັດຕັ້ງເຜີຍແຜ່ລະບົບຂໍ້ມູນ, ຂ່າວສານດ້ານເຕັກນິກວິຊາການ ແລະ ດ້ານການຕະຫລາດໃຫ້ແກ່ສະມາຊິກ
- ກວດກາຕິດຕາມການປະຕິບັດແຜນການຜະລິດ ພ້ອມທັງການປະຕິບັດສັນຍາຜູກພັນນຳບັນດາບໍລິສັດສົ່ງເສີມຕ່າງໆ
- ຈັດຕັ້ງລະບົບສະໜອງວັດຖຸປັດໃຈການຜະລິດ ( ປຸຍ, ຢາປາບສັດຕູພືດ ) ພ້ອມທັງສິນເຊື່ອທະນາຄານໃຫ້ສະມາຊິກ.

5.5.3. ສິດແລະໜ້າທີ່ ຂອງພາກສ່ວ ແຈກຢ່າຍນ້ຳ ຊົນລະປະທານ

- ສ້າງແຜນການ ແລະ ຈັດຕັ້ງປະຕິບັດການແຈກຢ່າຍນ້ຳຊົນລະປະທານໃນແຕ່ລະລະດູການ
- ຮັບຜິດຊອບລະບົບຊົນລະປະທານທີ່ປະກອບດ້ວຍ ຕົວຝາຍ, ຄອງເໝືອງ ແລະ ອາຄານຕ່າງໆ ພ້ອມທັງວາງແຜນ ແລະ ຈັດຕັ້ງປະຕິບັດການສ້ອມແປງທັງໝົດ.
- ຈັດຕັ້ງປະຕິບັດການແບ່ງປັນນ້ຳໃຫ້ແກ່ແຕ່ລະຈຸຜະລິດ
- ກວດກາຕິດຕາມ ການແຈກຢາຍນ້ຳຂອງແຕ່ລະຈຸຜະລິດ

**ມາດຕາ 6. ສິດ ແລະ ໜ້າທີ່ຂອງພາກສ່ວ ບໍລິຫານກຸ່ມ.**

- ເກັບກຳບັນຊີລາຍຊື່ຂອງສະມາຊິກກຸ່ມ
- ເກັບເງິນຄ່າບຳລຸງສະມາຊິກປະຈຳປີ
- ຮັບເອົາໃບສະເໜີຂອງສະມາຊິກກຸ່ມ
- ເກັບເງິນຄ່າສະໝັກເຂົ້າເປັນສະມາຊິກກຸ່ມ
- ບັນທຶກກອງປະຊຸມຂອງສະມາຊິກກຸ່ມໃນທຸກ ໆ ກອງປະຊຸມເພື່ອລາຍງານໃຫ້ຂັ້ນເທິງຊາບ
- ປຸກລະດົມສະຫະພັນແມ່ຍິງເຂົ້າຮ່ວມໃນຂະບວນການຂອງກິດຈະກຳຂອງກຸ່ມ
- ກວດກາຕິດຕາມ ການເຄື່ອນໄຫວຂອງສະມາຊິກເພດຍິງໃນການຜະລິດກະສິກຳ, ການປູກພືດ, ການຝຶກອົບຮົມ ແລະ ການປະກອບສ່ວນຕ່າງ ໆ ຂອງການພັດທະນາລະບົບຊົນລະປະທານ.

**ມາດຕາ 7. ວ່າດ້ວຍການເປັນສະມາຊິກຂອງກຸ່ມຜູ້ໃຊ້ນ້ຳຊົນລະປະທານ**

7.1 <u>**ເງື່ອນໄຂຂອງຜູ້ຈະເຂົ້າມາເປັນສະມາຊິກ**</u>

- ຕ້ອງຕັດສິນໃຈດ້ວຍຕົນເອງ ແລະ ຂຽນໃບຄຳຮ້ອງ ສະເໜີຕໍ່ປະທານກຸ່ມ
- ຕ້ອງມີເນື້ອທີ່ທຳການຜະລິດຢູ່ໃນເຂດຊົນລະປະທານ
- ມີອາຊີບຫລັກ ຫລື ອາຊີບສຳຮອງເປັນຊາວກະສິກອ ໃນເຂດຊົນລະປະທານ
- ຍິນດີປະຕິບັດຕາມກົດລະບຽບທີ່ທາງກຸ່ມວາງອອກ
- ມີນ້ຳໃຈກວ້າງຂວາງຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນເວລາຈຳເປັນກັບສະມາຊິກຜູ້ອື່ນໂດຍບໍ່ຈຳແນກເພດໄວ, ຊົນຊາດຊົນເຜົ່າ ແລະ ຕ້ອງປະຕິບັດພັນທະເສຍຄ່າບຳລຸງສະມາຊິກເປັນປະຈຳ.

– ຜູ້ທີ່ເຊົ່າເນື້ອທີ່ຂອງຜູ້ອື່ນເພື່ອຜະລິດ, ບໍ່ມີເນື້ອທີ່ນາໃນເຂດໂຄງການແມ່ນຈະຖືກຈົດທະບຽນເປັນສະມາຊິກ ຊົ່ວຄາວ.

7.2 **<u>ສະມາຊິກກຸ່ມຜູ້ໃຊ້ນ້ຳມີສິດດັ່ງຕໍ່ໄປນີ້ :</u>**

– ມີສິດເລືອກຕັ້ງປະທານກຸ່ມ
– ມີສິດໃນການອອກສຽງປະກອບຄຳເຫັນໃນທຸກກໍລະນີ
– ມີສິດສະໝັກ ຫລື ມີສິດໃນການແຕ່ງຕັ້ງຮັບວຽກງານຕາມຕຳແໜ່ງທີ່ເໝາະສົມ
– ມີສິດໃນການຮັບເອົານ້ຳຊົນລະປະທານເພື່ອການຜະລິດກະສິກຳ
– ມີສິດໄດ້ຮັບຄວາມຮູ້ດ້ານເຕັກນິກວິຊາການ ແລະ ອື່ນ ໆ ຈາກກຸ່ມຕາມຄວາມເໝາະສົມ
– ມີສິດສະເໜີກວດກາບັນຊີ - ການເງິນຂອງກຸ່ມ
– ມີສິດສະເໜີຕໍ່ກອງປະຊຸມເພື່ອປັບປຸງຫົວໜ້າຈຸ ຫລື ຄະນະກຸ່ມ
– ມີສິດເຂົ້າຮ່ວມກອງປະຊຸມຕັດສິນບັນຫາຕໍ່ການກະທຳຜິດຂອງສະມາຊິກ.
– ມີສິດສະເໜີຕໍ່ຂັ້ນເທິງຕາມຂັ້ນຕອນ ( ຖ້າຄະນະປະທານກຸ່ມບໍ່ຕອບຄຳຮ້ອງຂອງຕົນເອງ ).

7.3 **<u>ໜ້າທີ່ຂອງສະມາຊິກກຸ່ມຜູ້ຊົມໃຊ້ນ້ຳມີ:</u>**

1. ປະຕິບັດກົດລະບຽບທີ່ທາງກຸ່ມຮ່າງຂຶ້ນມາຢ່າງເຂັ້ມງວດ .
2. ເຂົ້າປະຊຸມສຳມະນາ, ຝຶກອົບຮົມ ແລະ ອື່ນ ໆ ທີ່ຖືກເຊື້ອເຊີນໂດຍກຸ່ມ ແລະ ໜ່ວຍງານຂອງລັດທີ່ກ່ຽວຂ້ອງ.
3. ມີໜ້າທີ່ຮັບເອົານ້ຳຊົນລະປະທານ ແລະ ຈັດການນ້ຳໃນເນື້ອທີ່ຜະລິດຂອງຕົນເອງ
4. ມີໜ້າທີ່ທຳການຜະລິດໃຫ້ຖືກຕ້ອງຕາມເຕັກນິກວິຊາການ
5. ມີໜ້າທີ່ພັດທະນາ ແລະ ປັບປຸງພາຍໃນຈຸຮັບນ້ຳຂອງຕົນໃນການຄຸ້ມຄອງ ,ການແຈກຢາຍນ້ຳໃຫ້ດີຕາມການແນະນຳຂອງຜູ້ຈັດການນ້ຳ.
6. ມີໜ້າທີ່ການເສຍຄ່າບຳລຸງສະມາຊິກກຸ່ມ ແລະ ຄ່າຊົມໃຊ້ນ້ຳຊົນລະປະທານທີ່ກຳນົດໄວ້ໃນກົດລະບຽບ.
7. ເຂົ້າຮ່ວມກິດຈະກຳ ຕ່າງ ໆ ທີ່ທາງຄະນະກຳມະການຈັດຂຶ້ນ.

7.4 **<u>ສະມາຊິກອາດຖືກຍົກເລີກຫລື ເຊົາເປັນສະມາຊິກໄດ້ໃນກໍລະນີດັ່ງລຸ່ມນີ້:</u>**

– ຂາຍກຳມະສິດທີ່ດິນໃຫ້ຜູ້ອື່ນ ຫຼື ຍ້ອນການຍ້າຍຖິ່ນຖານ, ການເປັນສະມາຊິກກໍ່ຈະໝົດໄປ
– ຖ້າວ່າສະມາຊິກຜູ້ໃດ ບໍ່ສາມາດຈ່າຍຄ່ານ້ຳໄດ້ໂດຍບໍ່ມີເຫດຜົນ, ເກີນກຳນົດໜຶ່ງປີຂຶ້ນໄປໃຫ້ຢຸດເປັນສະມາຊິກຊົ່ວຄາວ, ສອງປີຂຶ້ນໄປແມ່ນໃຫ້ເຊົາເລີຍ.
– ຖ້າບໍ່ປະຕິບັດຕາມກົດລະບຽບຂອງກຸ່ມ, ຄັ້ງທີ່ 1 ແມ່ນຈະຕັກເຕືອນ, ຄັ້ງທີ່ 2 ສຶກສາອົບຮົມ, ຄັ້ງທີ່ 3 ໃຫ້ຢຸດເຊົາເປັນສະມາຊິກຊົ່ວຄາວ. ນອກຈາກນັ້ນໃນກໍລະນີຫາກມີຄວາມຜິດ ຮ້າຍແຮງ ແມ່ນຈະໄດ້ດຳເນີນຄະດີຕາມກົດໝາຍບ້ານເມືອງ. ເມື່ອເຫັນວ່າຜູ້ກ່ຽວມີການປະພຶດດີຂຶ້ນ ທາງຄະນະກຸ່ມອາດ ຈະພິຈາລະນາຮັບຜູ້ກ່ຽວຄືນໃໝ່.

**<u>ມາດຕາ 8:</u> ການຈ່າຍຄ່າ ບຳລຸງໃຫ້ແກ່ກຸ່ມຜູ້ຊົມໃຊ້ນ້ຳ**

ສະມາຊິກທຸກຄົນຈະຕ້ອງຈ່າຍຄ່າບຳລຸງໃຫ້ແກ່ກຸ່ມຜູ້ຊົມໃຊ້ນ້ຳດັ່ງນີ້:

– ຄ່າບຳລຸງສະມາຊິກຖາວອນ ປະຈຳປີ: **5,000** ກີບ/ປີ

– ຄ່າບຳລຸງສະມາຊິກຊົ່ວຄາວ ປະຈຳປີ: **20,000** ກີບ/ປີ
– ຄ່າບຳລຸງສະມາຊິກດັ່ງກ່າວຈະຖືກປັບປຸງປ່ຽນແປງໃນວາລະກອງປະຊຸມໃຫ່ຍ ຂອງສະມາຊິກ (ຖ້າຈຳເປັນ).
– ການຍົກເວັ້ນການເສຍຄ່າບຳລຸງສະມາຊິກໃຫ້ແກ່ກຸ່ມຜູ້ຊົມໃຊ້ນ້ຳ ແມ່ນຄະນະກຸ່ມຈະເປັນຜູ້ພິຈາລະນາຍົກເວັ້ນໃຫ້ສະເພາະແຕ່ລະຄອບຄົວທີ່ມີເຫດຜົນ ແລະ ມີຄວາມຈຳເປັນທີ່ສຸດເທົ່ານັ້ນ.

**<u>ມາດຕາ 9</u> : ກອງປະຊຸມຂອງສະມາຊິກ**

1. ກອງປະຊຸມຈະເປີດຂຶ້ນທຸກໆກອ່ນລະດູການຜະລິດ (ຫຼື 6 ເດືອນ) ເພື່ອກະກຽມແຜນການຜະລິດຂອງກຸ່ມ.
2. ສະມາຊິກທົ່ວໄປຈະຕ້ອງປະຊຸມກັນປີລະເທື່ອ ເພື່ອທົບທວນ, ປະເມີນການຈັດຕັ້ງປະຕິບັດກິດຈະກຳໃນໄລຍະຜ່ານມາ.
3. ກອງປະຊຸມວິສາມັນອາດຈະຈັດຂຶ້ນໄດ້ທຸກເວລາ ໂດຍການຮຽກຮ້ອງຈາກສະມາຊິກບໍ່ຕ່ຳກວ່າ 20% ໂດຍມີໃບຄຳຮ້ອງເປັນລາຍລັກອັກສອນ ແລະ ຊຽນຈາກແຕ່ລະຈຸຂື້ນຫາກຸ່ມ.
4. ການແຈ້ງການສຳລັບເປີດກອງປະຊຸມຈະຕ້ອງປະກາດໄວ້ຢູ່ຫ້ອງການບ້ານ ຫລື ທໍ່ຂ່າວຂອງບ້ານຢ່າງໜ້ອຍ 3 ວັນ.
5. ກອງປະຊຸມສະໄໝສາມັນແຕ່ລະເທື່ອຕ້ອງມີສະມາຊິກເຂົ້າຮ່ວມຈຳນວນ 2/3 ຈື່ງສາມາດເປີດໄດ້. ການລົງຄະແນນສຽງແມ່ນອານຸຍາດໃຫ້ສະມາຊິກໜຶ່ງຄົນເທົ່າກັບໜຶ່ງສຽງ. ບໍ່ອະນຸຍາດໃຫ້ອອກສຽງແທນຜູ້ອື່ນໄດ້.
6. ລະບຽບຂອງກອງປະຊຸມມີດັ່ງນີ້ :
   - ລົງທະບຽນເພື່ອກວດກາບັນຊີຂອງສະມາຊິກ
   - ແຕ່ງຕັ້ງຜູ້ບັນທຶກກອງປະຊຸມ ແລະ ອ່ານວາລະກອງປະຊຸມ
   - ສະເໜີຈຸດປະສົງຂອງກອງປະຊຸມ
   - ຜ່ານບົດສະຫຼຸບການເຄື່ອນໄຫວວຽກງານ ໃນໄລຍະຜ່ານມາ, ຜົນໄດ້ຮັບ ແລະ ຂໍ້ຄົງຄ້າງ
   - ຮັບຮອງບົດລາຍງານ ແລະ ແຜນການຕ່າງໆຂອງກຸ່ມ

**<u>ມາດຕາ 10</u>**: ພາລະບົດບາດສະບັບນີ້ປະກອບດ້ວຍ 10 ມາດຕາ, ຮັບຮູ້ ແລະ ຢັ້ງຢືນໂດຍອຳນາດການປົກຄອງບ້ານ ແລະ ເມືອງ. ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັ່ນເປັນຕົ້ນໄປ ຈົນກວ່າຈະມີການປ່ຽນແປງ.

ທີ່ບ້ານ...................., ວັນທີ..................................

| | |
|---|---|
| **<u>ຢັ້ງຢືນຈາກນາຍບ້ານ</u>**................... | **<u>ປະທານກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ</u>**..................... |
| **<u>ຢັ້ງຢືນຈາກ</u>** | **<u>ຢັ້ງຢືນຈາກ</u>** |
| **<u>ເຈົ້າເມືອງ</u>**...................... | **<u>ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ</u>**. |

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ແຂວງ...................................

ເມືອງ....................................

ໂຄງການຊົນລະປະທານ........................................

# ກົດລະບຽບ

## ຂອງກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ

– ອີງຕາມ: ດຳລັດວ່າດ້ວຍການສ້າງຕັ້ງສະມາຄົມເລກທີ 115/ນຍ, ລົງວັນທີ 29 ເມສາ 2009
– ອີງຕາມ: ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີເລກທີ 26/ນຍ, ລົງວັນທີ 16/12/1998 ວ່າດ້ວຍການມອບໂອນ ໂຄງການຊົນລະປະທານໃຫ້ກາຍເປັນຂອງລວມໝູ່ຂອງປະຊາຊົນຢ່າງຂາດຕົວ.
– ອີງຕາມ: ຂໍ້ກຳນົດວ່າດ້ວຍສະມາຄົມຜູ້ຊົມໃຊ້ນ້ຳເລກທີ່ 0156/ກປ, ລົງວັນທີ 11/3/97 ວ່າດ້ວຍການສ້າງຕັ້ງ
– ສະມາຄົມຜູ້ຊົມໃຊ້ນ້ຳ.
– ອີງຕາມ: ການຕົກລົງເຫັນດີໃນກອງປະຊຸມ ຄັ້ງວັນທີ........../........./............ ຂອງສະມາຊິກຜູ້ຊົມໃຊ້ນ້ຳຂອງໂຄງການຊົນລະປະທານ....................ເມືອງ…………………………ແຂວງ…………………….

**ຈຸດປະສົງ ແລະ ລະດັບຄາດໝາຍ:**

1. ເພື່ອໃຫ້ໝົດທຸກຄົນໄດ້ມີສ່ວນຮ່ວມ ໃນການຄຸ້ມຄອງ - ນຳໃຊ້ ແລະ ປົກປັກຮັກສາລະບົບຊົນລະປະທານ.
2. ເພື່ອໃຫ້ໝົດທຸກຄົນມີຄວາມສາມັກຄີ ແລະ ມີນ້ຳໃຈຮັບຜິດຊອບຊັບສົມບັດຂອງສ່ວນລວມ.
3. ເພື່ອເຮັດໃຫ້ລະບົບຊົນລະປະທານນຳໃຊ້ໄດ້ຍາວນານ ແລະ ມີປະສິດທິຜົນ.

<u>ມາດຕາ1</u>: **ການເລືອກຕັ້ງຄະນະບໍລິຫານກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານນ້ຳມະອຸ່ນ**

1. ຄະນະບໍລິຫານກຸ່ມປະກອບດ້ວຍ....................ທ່ານ. ທີ່ໄດ້ຮັບການເລືອກຕັ້ງມາຈາກສະມາຊິກ ໃນຄັ້ງ ໆ ວັນທີ........../.........../................ບຸກຄົນທີ່ຖືກຄັດເລືອກເປັນປະທານ ແລະ ຄະນະກຸ່ມຜູ້ໃຊ້ນ້ຳຊົນລະປະທານປະກອບດ້ວຍ:

- ທ່ານ.............................................................................ປະທານ ( ຮັບຜິດຊອບຊີ້ນຳລວມ )
- ທ່ານ........................................................ຮອງປະທານຜູ້ທີໜຶ່ງ ຮັບຜິດຊອບການແບ່ງປັນນ້ຳ
- ທ່ານ..............................................ຮອງປະທານ ຜູ້ທີສອງ ຮັບຜິດຊອບການຜະລິດກະສິກຳ.
- ທ່ານ........................................................ຄະນະກຳມະການ ຮັບຜິດຊອບບັນຊີ - ການເງິນ.
- ທ່ານ..................................................................ຄະນະກຳມະການ ຮັບຜິດຊອບຄັງເງິນສົດ.

ສະມາຊິກຂອງກຸ່ມຜູ້ຊົມໃຊ້ນ້ຳລວມມີ................ຄົວເຮືອນ, ມີພົນລະເມືອງທັງໝົດ..................ຄົນ ທີ່ມາຈາກບ້ານ.............................ຄອບຄົວ, ບ້ານ............................ຄອບຄົວ, ບ້ານ......................

ຄອບຄົວ, ບ້ານ................................ຄອບຄົວ, ບ້ານ....................................ຄອບຄົວ ເຊິ່ງໄດ້ແບ່ງອອກເປັນ..............ຈຸ, ຕາມແຕ່ລະສາຍຄອງ ຊື່ງປະກອບດ້ວຍ:

ຈຸທີ 1: ທ່ານ ......................................ເປັນຫົວໜ້າ

ຈຸທີ 2: ທ່ານ ......................................ເປັນຫົວໜ້າ

ຈຸທີ 3: ທ່ານ ......................................ເປັນຫົວໜ້າ

ຄະນະທີ່ປຶກສາ

- ຄະນະທີ່ປຶກສາປະກອບດ້ວຍ ທ່ານ ຮອງເຈົ້າເມືອງ, ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ປະທານສະຫະພັນແມ່ຍິງເມືອງ, ແຜນການ - ການເງິນເມືອງ.
- ອຳນາດການປົກຄອງບ້ານໆ............................................

2. ພາກສ່ວນກ່ຽວຂ້ອງອື່ນໆ
   ໂຄງການພັດທະນາໂຄງລ່າງຊົນລະປະທານພາກເໜືອ ( ຂັ້ນສູນກາງ, ຂັ້ນແຂວງ, ແລະ ຂັ້ນເມືອງ )
3. ການເລືອກຕັ້ງປະທານ ແລະ ອາຍຸຂອງປະທານ ແມ່ນປະຕິບັດຢູ່ລະຫວ່າງກອງປະຊຸມປະຈຳປີ ໂດຍແມ່ນສະມາຊິກເປັນຜູ້ເລືອກຕັ້ງ. ຜູ້ສະໝັກເປັນປະທານ ແລະ ຄະນະຕ້ອງແມ່ນສະມາຊິກພາຍໃນກຸ່ມເອງ ແລະ ອາຍຸການເຄື່ອນໄຫວວຽກງານ ຂອງຄະນະປະທານແມ່ນກຳນົດເອົາ 03 ປີ.
4. ການມອບໝາຍໜ້າທີ່ລະຫວ່າງຄະນະໃໝ່ ແລະ ຄະນະເກົ່າ ແມ່ນພາຍຫຼັງກອງປະຊຸມປ່ອນບັດໄດ້ຄະນະຊຸດໃໝ່ແລ້ວ.
5. ການປົດຄະນະກຸ່ມ ໃນກໍລະນີຄະນະກຸ່ມບໍ່ປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງກຸ່ມ ແລະ ຂາດຄວາມໄວ້ວາງໃຈຈາກສະມາຊິກ, ກ່ອນຈະປົດຈະຕ້ອງມີສະມາຊິກຢ່າງນ້ອຍຈຳນວນ 2/3 ຍືນຄຳຮ້ອງໃຫ້ ຂັ້ນເທິງເພື່ອເປີດກອງປະຊຸມເປັນກໍລະນີພິເສດ.
6. ວ່າດ້ວຍການໃຊ້ຈ່າຍ ແລະ ເງິນອູດໜູນຂອງຄະນະກຸ່ມ ແລະ ຫົວໜ້າຈຸ.
   ລາຍຮັບທັງໝົດຂອງກຸ່ມແມ່ນໄດ້ມາຈາກການເກັບຄ່ານ້ຳ, ຄ່າບຳລຸງສະມາຊິກ, ຄ່າປັບໃໝ ແລະ ອື່ນໆ. ລາຍຮັບທັງໝົດຂອງກຸ່ມຈະຕ້ອງໄດ້ຈັດສັນດັ່ງນີ້:
   - ເງິນລາຍຮັບລວມທັງໝົດຕ້ອງນຳໄປຝາກຢູ່ທະນາຄານທີ່ໃກ້ກັບບ້ານ ແລະ ທັງຄະນະກຸ່ມຈະຕ້ອງມີການສ້າງແຜນໃນການໃຊ້ຈ່າຍທັງໝົດໂດຍລະອຽດຄື:
   - 20% ແມ່ນມອບພັນທະໃຫ້ເມືອງ, ໃນນີ້ໃຫ້ຕັ້ງເປັນ 100% ແລ້ວມາແບ່ງອອກເປັນ:
     - 50% ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງເພື່ອໃຊ້ເປັນເງິນລົງຊຸກຍູ້ຕິດຕາມ.
     - 50% ແມ່ນມອບເປັນພັນທະໃຫ້ແກ່ເມືອງ
   - ອີກ 80% ແມ່ນເປັນກອງທຶນສ້ອມແປງຊົນລະປະທານ, ໃນນີ້ໃຫ້ຕັ້ງເປັນ 100% ແລ້ວມາແບ່ງອອກເປັນ:
     - 70%ໃຊ້ເຂົ້າໃນການສ້ອມແປງລະບົບຊົນລະປະທານໃນແຕ່ລະປີ (ຖ້າມີ), ຖ້າບໍ່ມີການສ້ອມແປງແມ່ນເງິນສ່ວນນີ້ຈະຕ້ອງໄດ້ສະສົມເປັນກອງທຶນຂອງກຸ່ມເພື່ອໃຊ້ເປັນກອງທຶນພັດທະນາພາຍໃນກຸ່ມ ເພື່ອປ່ອຍສິນເຊື່ອໃຫ້ແກ່ສະມາຊິກກຸ່ມ ໃນການປູກຝັງ,ລ້ຽງສັດ ແລະ ອື່ນໆ.
     - 30% ແມ່ນມອບໃຫ້ແກ່ຄະນະບໍລິຫານກຸ່ມ(ລາຍລະອຽດແມ່ນມີເອກະສານຄັດຕິດມາພ້ອມ)
7. ການເບີກຈ່າຍ ແລະ ການກວດກາບັນຊີ

- ການເບີກຈ່າຍເຂົ້າໃນວຽກງານທັງໝົດຂອງກຸ່ມຈະຕ້ອງມີການກວດກາຈາກພາຍນອກເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງທາງດ້ານບັນຊີ ການເງິນຕ່າງໆ ຂອງກຸ່ມ ແລະ ໃຫ້ມີເສດຖະກິດເປີດເຜີຍ.
- ຖ້າວ່າຜູ້ໃດຜູ້ໜຶ່ງໃຊ້ຈ່າຍໄປທາງທີ່ບໍ່ຖືກຕ້ອງ ຈະຕ້ອງໄດ້ໃຊ້ຄືນທັງໝົດ ແລະ ທັງຈະຖືກປັບໃໝ 10% ຂອງມູນຄ່ານັ້ນ ໂດຍບໍ່ມີການຍົກເວັ້ນ.
- ການອານຸມັດເບີກຈ່າຍເງິນແຕ່ລະຄັ້ງຕ້ອງປະຕິບັດດັ່ງນີ້:
  - ຄະນະບໍລິຫານກຸ່ມອານຸມັດ : 1.000.000ກີບ ລົງມາ.
  - ເຈົ້າເມືອງອານຸມັດ : 1.000.001ກີບ ຂື້ນໄປ.

8. ການປະຊຸມສາມັນຂອງຄະນະກຸ່ມ.
   ຄະນະບໍລິຫານກຸ່ມຈະເປີດກອງປະຊຸມທຸກໆຄັ້ງກອ່ນການຜະລິດ ແລະ ປະຈຳປີ ເພື່ອສະຫລຸບຜົນສຳເລັດໃນການຈັດຕັ້ງປະຕິບັດ ແລະ ວາງແຜນການຜະລິດໃນລະດູການຕໍ່ໄປ.
9. ການປະຊຸມວິສາມັນຂອງກຸ່ມ
   ການປະຊຸມວິສາມັນຈະຈັດຂື້ນເມື່ອປະທານມີວຽກປະຊຸມປຶກສາຫາລືດ່ວນ ຫລື ມີຄຳຮ້ອງຂອງສະມາຊິກສ່ວນຫລາຍຮຽກຮ້ອງໃຫ້ມີການປະຊຸມແກ້ໄຂບັນຫາ ແລະ ຕ້ອງມີຄະນະກຸ່ມເຂົ້າຮ່ວມຢ່າງນ້ອຍ 2/3

<u>ມາດຕາ 2</u>: **ວ່າດ້ວຍການຄຸ້ມຄອງລະບົບຊົນລະປະທານ ແລະ ການປັບໃໝ**

ກ່ອນຈະປ່ອຍນ້ຳທຸກໆຄັ້ງຄະນະກຸ່ມຕ້ອງໄດ້ລົງກວດກາລະບົບຊົນລະປະທານທັງໝົດ. ຖ້າຫາກເຫັນວ່າຄອງເໝືອງ ແລະ ອາຄານໃດມີການເປ່ເພ ຕ້ອງໄດ້ສ້ອມແປງ ແລະ ອານາໄມສາກ່ອນຈື່ງອະນຸມັດໃຫ້ປ່ອຍນ້ຳເຂົ້າຄອງເໝືອງ ຕາມການສະເໜີຂອງສະມາຊິກ.

1. ຜູ້ທີ່ເປັນເດັກອາຍຸ 15 ປີ ລົງມາ ຈະບໍ່ນັບແຮງງານ
2. ຜູ້ບໍ່ມາອອກແຮງງານ ໂດຍບໍ່ມີເຫດຜົນ ( ຂາດການອອກແຮງງານລວມ ) ຈະຖືກປັບໃໝດັ່ງນີ້:
   ເທື່ອທີ ໜຶ່ງ : ເປັນເງິນເທົ່າກັບຄ່າແຮງງານໜຶ່ງວັນ ( 50,000ກີບ ).
   ເທື່ອທີ ສອງ : ເປັນເງິນ 2 ເທົ່າຕົວຂອງເທື່ອທີ່ 1 ພ້ອມກັບ ຕັກເຕືອນ ( 100,000ກີບ ).
   ເທື່ອທີ ສາມ : ເປັນເງິນ 3 ເທົ່າຕົວຂອງເທື່ອທີ່ 1 ພ້ອມກັບ ຕັກເຕືອນ ( 150,000ກີບ ) ພ້ອມທັງພິຈາລະນາການເປັນສະມາຊິກກຸ່ມ.
3. ຖ້າບຸກຄົນ ຫລື ກຸ່ມຄົນໃດໜຶ່ງເຮັດໃຫ້ລະບົບຊົນລະປະທານເປເພຕ້ອງມີການປັບໃໝ ແລະ ສ້ອມແປງຄືນໃຫ້ຢູ່ສະພາບເດີມ.
   - ການທຳລາຍຄອງເໝືອງດ້ວຍການເຈດຕະນາຕັນຄອງເໝືອງ, ຂຸດຄອງເໝືອງເອົານ້ຳເພື່ອຜົນປະໂຫຍດສ່ວນຕົວຕາມລຳພັງໃຈຈະຖືກປັບໃໝ.
   - ຄັ້ງທີ ໜຶ່ງ : ປັບໃໝຕາມມູນຄ່າເສຍຫາຍຕົວຈິງ ພ້ອມທັງໃຫ້ສ້ອມແປງຄືນໃໝ່ໃຫ້ຢູ່ໃນສະພາບເດີມ
   - ຄັ້ງທີ ສອງ : ປັບໃໝຕາມມູນຄ່າເສຍຫາຍສອງເທົ່າຕົວ ແລະ ໃຫ້ສ້ອມແປງຄືນໃໝ່ໃຫ້ຢູ່ໃນສະພາບເດີມ
   - ຄັ້ງທີ ສາມ : ລາຍງານຂັ້ນເທິງເພື່ອພິຈາລະນາດຳເນີນຄະດີຕາມກົດໝາຍບ້ານເມືອງ.
4. ການສົ່ງນ້ຳຕ້ອງສົ່ງໃຫ້ຜູ້ຢູ່ສຸດທ້າຍຄອງເໝືອງເອົາກ່ອນ ແລ້ວຈື່ງປ່ອຍຕາມລຳດັບ. ຖ້າມີຜູ້ລະເມີດກົດລະບຽບທີ່ໄດ້ວາງອອກແມ່ນປັບໃໝຕາມຂໍ້ທີ່ 3 ຂ້າງເທິງ
5. ວ່າດ້ວຍຂໍ້ຫ້າມ:
   - ຫ້າມນຳເອົາສັດລ້ຽງລົງທຳລາຍຄອງເໝືອງຢ່າງເດັດຂາດ.

- ຫ້າມລົດທຸກຊະນິດທີ່ບໍ່ໄດ້ຮັບອະນຸຍາດ (ລົດຕີນເຫຼັກ) ຢຽບຄອງເໝືອງ ຫລື ຄອງຊອຍເຂດມີຄອງ ຊົນລະ ປະທານ
- ຫ້າມເຮັດຮົ້ວຕັນຄອງເໝືອງແມ່ ຫລື ຄອງຊອຍເຂດມີຊົນລະປະທານ,
- ຫ້າມບຸກຄົນ ຫລື ກຸ່ມຄົນ ຕັນຄອງເໝືອງເພື່ອຈັບປາ. ທຸກບັນຫາທີ່ກ່າວມາຂ້າງເທິງລ້ວນແຕ່ຈະຖືກ ປັບໃໝທັງນັ້ນ.
- ຫ້າມນໍາເອົາບັ້ງສີດຢາ, ກ່ອງໃສ່ນໍ້າຢາ ໄປລ້າງ ຫຼື ຖິ້ມໃສ່ຄອງເໝືອງຢ່າງເດັດຂາດ.
- ຫ້າມເຮັດຂົວຂ້າມຄອງເໝືອງຕໍ່າກວ່າສັນຄອງເໝືອງ

  ນອກຈາກບັນດາຂໍ້ຫ້າມຂ້າງເທິງແລ້ວ, ຫ້າມກະທໍາສິ່ງໃດໆ ທີ່ອາດຈະສົ່ງຜົນເສຍຫາຍຕໍ່ຄອງເໝືອງ ຢ່າງເດັດຂາດ, ຖ້າມີຜູ້ລະເມີດຈະຖືກປັບໃໝຕາມຂໍ້ທີ່ 3 ເຊັ່ນດຽວກັນ.

**<u>ມາດຕາ 3</u>: ວ່າດ້ວຍການຜະລິດ**

1. ຫ້າມປະດິນເປົ່າຫວ່າງໃນລະດູການຜະລິດໃນເຂດຂອງໂຄງການທີ່ມີນໍ້າໄປຮອດຕ້ອງໄດ້ປູກເຂົ້າ ທັງນາປີ ແລະ ນາແຊງ, ບ່ອນໃດນໍ້າບໍ່ພຽງພໍກໍ່ໃຫ້ປູກພືດທີ່ຕ້ອງການນໍ້າໜ້ອຍ ແລະ ໃຊ້ ເວລານ້ອຍ. ຖ້ານໍ້າເຖິງ ແຕ່ບໍ່ທໍາການຜະລິດ ຈະຕ້ອງຍອມມອບດິນດັ່ງກ່າວໃຫ້ຜູ້ອື່ນຜະລິດແທນ.
2. ການເກັບຊື້ຜົນຜະລິດຂອງສະມາຊິກກຸ່ມ ຈະເຮັດແບບມີການປົກປ້ອງຜົນປະໂຫຍດຂອງສະມາຊິກ.

**<u>ມາດຕາ 4</u>: ວ່າດ້ວຍຫຼັກການເກັບຄ່ານໍ້າ**

1. ສະມາຊິກທຸກຄົນທີ່ໄດ້ຮັບນໍ້າຈາກໂຄງການໂດຍກົງ ຫລື ນໍ້າຊຶມຕ້ອງເຂົ້າເປັນຊະມາຊິກຂອງກຸ່ມຜູ້ຊົມໃຊ້ ນໍ້າ ແລະ ຕ້ອງໄດ້ເສຍຄ່ານໍ້າ ດັ່ງນີ້:
   - ເຂົ້ານາປີ 70,000 ກີບ/ເຮັກຕາ
   - ເຂົ້ານາແຊງ 00 ກິໂລເຂົ້າເປືອກ/ເຮັກຕາ
   - ປູກພືດລະດູແລ້ງ 30,000 ກີບ/ເຮັກຕາ, ຖ້າແມ່ນສະມາຊິກຊົ່ວຄາວ ຫຼື ຄົນຕ່າງດ້າວ ຫຼື ບໍລິສັດ ພາຍນອກເຊົ່າເພື່ອລົງທືນປູກຈະຕ້ອງເສຍຄ່ານໍ້າ 200,000 ກີບ/ເຮັກຕາ
   - ໜອງປາ 3 00,000 ກີບ /ເຮັກຕາ/ປີ. ຖ້າແມ່ນສະມາຊິກຊົ່ວຄາວ ຫຼື ຄົນຕ່າງດ້າວ ຫຼື ບໍລິສັດ ພາຍນອກເຊົ່າເພື່ອລົງທືນ ຈະຕ້ອງເສຍຄ່ານໍ້າ 500,000 ກີບ/ເຮັກຕາ/ປີ.
2. ສະມາຊິກຜູ້ເສຍຄ່ານໍ້າຊົນລະປະທານ ແມ່ນຕ້ອງເສຍພາຍຫລັງການເກັບກ່ຽວຜົນຜະລິດພາຍໃນກໍານົດ ບໍ່ ໃຫ້ເກີນ 30 ວັນ.ເລີ່ມແຕ່ວັນທີ່ 01 ເດືອນ 01 ຫາ ວັນທີ່ 01 ເດືອນ 02 ຂອງທຸກໆປີ. ຖ້າເກີນແມ່ນ ຈະຖືກກ່າວເຕືອນ ແລະ ປັບໃໝ 10% ຂອງມູນຄ່າ ແລະ ຖ້າກາຍ 6 ເດືອນຂື້ນໄປ ຈະຖືກປັບໃໝ 50% ຂອງມູນຄ່າຕາມ ມາດຕາ4 ແລະ ປິດສິດນໍາໃຊ້ນໍ້າໃນລະດູການຕໍ່ໄປ, ພ້ອມທັງພິຈາລະນາການ ເປັນສະມາຊິກ
3. ສະມາຊິກທີ່ໄດ້ຮັບຜົນເສຍຫາຍເນື່ອງຈາກໄພທໍາມະຊາດເຊັ່ນ: ນໍ້າຖ້ວມ, ແຫ້ງແລ້ງ, ສັດຕູພືດ ແລະ ສັດ ປ່າທໍາລາຍ, ຖ້າເນື້ອທີ່ຖືກເສຍຫາຍສູງເຖິງ 70% ຂື້ນໄປ ແມ່ນໃຫ້ຍົກເວັ້ນການເສຍຄ່ານໍ້າ.
4. ເນື້ອທີ່ໂຄງການລົງທືນຂອງລັດ ສາທິດ, ທົດລອງ ແມ່ນຍົກເວັ້ນການເສຍຄ່ານໍ້າຊົນລະປະທານ.

**<u>ມາດຕາ 5</u>: ວ່າດ້ວຍການຍ້ອງຍໍ ຫຼື ການປັບໃໝ.**

1. ບຸກຄົນໃດເຫັນຜູ້ອື່ນກະທໍາຜິດ ແລະ ມີຜົນເສຍຫາຍແກ່ສ່ວນລວມ, ມີຄວາມຈິງໃຈລາຍງານ ແລະ ໃຫ້ຂໍ້ ມູນຄົບຖ້ວນຈະຕ້ອງໄດ້ຮັບການຍ້ອງຍໍຊົມເຊີຍ. ນອກຈາກນີ້ຍັງ ຈະໄດ້ຮັບການຕອບແທນຈາກຄ່າປັບໃໝ

20% ຂອງມູນຄ່າທີ່ປັບໃໝໄດ້. ແຕ່ກົງກັນຂ້າມຫາກມີການເຊື່ອງອຳ ການກະທຳຜິດຂອງຜູ້ອື່ນ, ຜູ້ນັ້ນຈະຖືກປັບໃໝ 50% ຂອງມູນຄ່າປັບໃໝ ໃນຖານສົມຮູ້ຮ່ວມຄິດ.

2. ຜູ້ກະທຳຜິດຕາມມາດຕາ4 ຫາກມີການບິດເບື່ອນ, ສ້າງຄວາມຫຍຸ້ງຍາກແກ່ຍາວ, ຫຼືກລັ້ງການປັບໃໝຈະຄິດໄລ່ດອກເບ້ຍເພີ້ມ 20% ແລະ ຈະຖືກນຳສະເໜີໃຫ້ທີ່ປຶກສາຂອງກຸ່ມ ແລະ ພາກສ່ວນກ່ຽວຂ້ອງຂອງກຸ່ມນຳໄປດຳເນີນຄະດີຕໍ່ໄປ.

**<u>ມາດຕາ 6</u> : ວ່າດ້ວຍການຄຸ້ມຄອງກອງທືນ**

ເພື່ອເຮັດໃຫ້ການຄຸ້ມຄອງກອງທືນຂອງກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານໃຫ້ມີປະສິດທິພາບ, ຄະນະບໍລິຫານງານກຸ່ມຈະແຕ່ງຕັ້ງຄະນະກຳມະການຜູ້ໜຶ່ງຮັບຜິດຊອບວຽກງານກອງທືນໂດຍສະເພາະ ແລະ ມີໜ້າທີ່ລະບຸໄວ້ຕາມມາດຕາ 1 ຂໍ້ 8.

**<u>ມາດຕາ 7</u>: ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ.**

1. ກຸ່ມຜູ້ຊົມໃຊ້ນ້ຳຕ້ອງສ້າງແຜນການປຸກລະດົມປູກ ແລະ ຮັກສາຕົ້ນໄມ້ ຕາມຄອງເໝືອງແມ່ ແລະ ອ້ອມແອ້ມບໍລິເວນຫົວງານເພື່ອປ້ອງກັນການເຊາະເຈື່ອນ.
2. ຫ້າມຖາງປ່າໃນບໍລິເວນຫົວງານເຂດອ່າງໂຕ່ງ ແລະ ຍອດນ້ຳເດັດຂາດ.
3. ຕ້ອງກຳນົດຈັດສັນເຂດປ່າຍອດນ້ຳຂອງໂຄງການຊົນລະປະທານໃຫ້ຊັດເຈນ. ຜູ້ໃດມີການລະເມີດຕ້ອງໄດ້ມີການປັບໃໝ ຕາມກົດໝາຍວ່າດ້ວຍປ່າໄມ້ ເລກທີ່ 06/ສພຊ, ລົງວັນທີ 24/12/2007.
4. ຫ້າມຫາປາໂດຍການໃຊ້ທາດເບື່ອ ຫລື ສູບນ້ຳຕາມຄອງເໝືອງ ຫລື ໃຊ້ລະເບີດຕາມຫ້ວຍນ້ຳບໍລິເວນເຂດມີລະບົບຊົນລະປະທານທີ່ຈະມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ລະບົບນິເວດວິທະຍາ, ຜູ້ລະເມີດຈະຖືກປັບໃໝຕາມກົດໝາຍວ່າດ້ວຍສັດນ້ຳ ສັດປ່າ ເລກທີ 07/ສພຊ, ລົງວັນທີ 24/12/2007

**<u>ມາດຕາ 8</u>: ວ່າດ້ວຍການເພີ້ມຕື່ມ ຫລື ລົບລ້າງ**

1. ກົດລະບຽບສະບັບນີ້ມີ 8 ມາດຕາ, ຖ້າຫາກຢາກເພີ້ມ ຫລື ລົບລ້າງບາງມາດຕາ ຫລື ປ່ຽນຂໍ້ຄວາມບາງມາດຕາຈະຕ້ອງຜ່ານການເຫັນດີເຫັນພ້ອມ ຫລື ເຫັນດີຈາກກອງປະຊຸມໃຫ່ຍຂອງຄະນະກຸ່ມ.
2. ກົດລະບຽບສະບັບນີ້ຮັບຮູ້ ແລະ ຢັ້ງຢືນໂດຍອຳນາດການປົກຄອງບ້ານ ແລະ ເມືອງ, ມີຜົນສັກສິດແຕ່ມື້ລົງລາຍເຊັ່ນເປັນຕົ້ນໄປ.

ທີ່ບ້ານ................, ວັນທີ ........................

**<u>ນາຍບ້ານ........................</u>** **<u>ປະທານກຸ່ມຜູ້ໃຊ້ນ້ຳ</u>**

**<u>ຢັ້ງຢືນຈາກ</u>**

**<u>ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.............................</u>**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**-------------------------**

ບ້ານ.......................................

ໂຄງການຊົນລະປະທານ....................................... ວັນທີ......./........./............

## ໃບສະເໜີຂໍຈັດຕັ້ງກຸ່ມຜູ້ຊົມໃຊ້ນ້ຳ

ຮຽນ: ທ່ານ ເຈົ້າເມືອງ....................................... ທີ່ນັບຖື.

(ໂດຍຜ່ານການຈັດຕັ້ງທີ່ກ່ຽວຂ້ອງຕາມລຳດັບ)

ເລື່ອງ: ຂໍສ້າງຕັ້ງກຸ່ມຜູ້ຊົມໃຊ້ນ້ຳໂຄງການຊົນລະປະທານ............................ບ້ານ....................ເມືອງ ..............................ແຂວງ.............................................

- ອີງຕາມ: ຄຳສັ່ງແນະນຳຂອງນາຍົກລັດຖະມົນຕີ ເລກທີ 26/ນຍ; ລົງວັນທີ 16/12/1998 ວ່າດ້ວຍການມອບໂອນໂຄງການຊົນລະປະທານໃຫ້ກາຍເປັນຂອງລວມໝູ່ຂອງປະຊາຊົນຢ່າງຂາດຕົວ.
- ອີງຕາມ: ຂໍ້ກຳນົດວ່າດ້ວຍສະມາຄົມຜູ້ຊົມໃຊ້ນ້ຳຊົນລະປະທານ ເລກທີ່ 0156/ກປ; ລົງວັນທີ 11/3/97 ວ່າດ້ວຍການສ້າງຕັ້ງສະມາຄົມຜູ້ຊົມໃຊ້ນ້ຳ
- ອີງຕາມ: ຜົນຂອງກອງປະຊຸມຂໍສ້າງຕັ້ງ ແລະ ຄັດເລືອກປະທານ ແລະ ຮອງປະທານ ແລະ ຄະນະກຳມະການກຸ່ມຜູ້ຊົມໃຊ້ນ້ຳໂຄງການຊົນລະປະທານ.................................ບ້ານ.............................

ເມືອງ.............................ຂວງ.................................., ຄັ້ງວັນທີ.........../.............../..................... ທີ່ບ້ານ................................ເມືອງ................................ແຂວງ..............................................

ເພື່ອໃຫ້ປະທານ ແລະ ຄະນະກຳມະການກຸ່ມຜູ້ນຳໃຊ້ນ້ຳສາມາດເຄື່ອນໄຫວວຽກງານ ໃນການສົ່ງເສີມການກະສິກຳປູກຝັງ, ລ້ຽງສັດ ແລະ ຄຸ້ມຄອງນຳໃຊ້ລະບົບຊົນລະປະທານໃຫ້ໄດ້ຮັບຜົນດີ ແລະ ຖືກຕ້ອງຕາມພາລະບົດບາດ ແລະ ແນວທາງນະໂຍບາຍຂອງຂັ້ນເທິງ.

ດັ່ງນັ້ນກຸ່ມຜູ້ໃຊ້ນ້ຳໂຄງການຊົນລະປະທານ...............................ຈຶ່ງມີຈຸດປະສົງສະເໜີມາຍັງທ່ານ ເພື່ອຂໍອະນຸມັດການແຕ່ງຕັ້ງເປັນກຸ່ມຊົມໃຊ້ນ້ຳ ໂຄງການຊົນລະປະທານ............................. ບ້ານ.......................ເມືອງ.................................ແຂວງ...................................... ລາຍລະອຽດມີເອກະສານພາລະບົດບາດ, ກົດລະບຽບ, ໂຄງຮ່າງການຈັດຕັ້ງ, ລາຍຊື່ຂອງສະມາຊິກກຸ່ມທີ່ໄດ້ລົງທະບຽນແລ້ວ ແລະ ເອກະສານອື່ນໆ ຕິດຄັດມາພ້ອມນີ້.

ຫັວງຢ່າງຍິ່ງວ່າທ່ານຈະພິຈາລະນາຕາມທີ່ຄວນດ້ວຍ .

**ນາຍບ້ານ.......................** **ຫົວໜ້າກຸ່ມນຳໃຊ້ນ້ຳໂຄງການຊົນລະປະທານ.............**

**ເຈົ້າເມືອງ.....................** **ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ........**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ແຂວງ.........................................

ເຈົ້າເມືອງ......................................                                        ເລກທີ______________/ ຈມ

ເມືອງ............, ວັນທີ_________________

# ຂໍ້ຕົກລົງ

# ວ່າດ້ວຍການແຕ່ງຕັ້ງຄະນະກຸ່ມຜູ້ຊົມໃຊ້ນ້ຳໂຄງການຊົນລະປະທານ

# ............................, ບ້ານ..........................

- ອີງຕາມ: ການສະເໜີຂອງກຸ່ມຜູ້ຊົມໃຊ້ນ້ຳສະບັບລົງວັນທີ......../........./.............. ວ່າດ້ວຍການແຕ່ງຕັ້ງຄະນະຜູ້ຊົມໃຊ້ນ້ຳ ໂຄງການຊົນລະປະທານ......................................................
- ອີງຕາມ: ການສະເໜີຂອງຫ້ອງການກະສິກຳ - ປ່າໄມ້ເມືອງ ແລະ ການເຫັນດີເປັນເອກະພາບຂອງຄະນະປະຈຳພັກເມືອງ.............................., ຄັ້ງວັນທີ……………………

## ເຈົ້າເມືອງ........................ຕົກລົງ:

**ມາດຕາ 1**: ເຫັນດີແຕ່ງຕັ້ງກຸ່ມຜູ້ນຳໃຊ້ນ້ຳໂຄງການຊົນລະປະທານ............................ບ້ານ........................ ເມືອງ..............................ແຂວງ.............................ເຊິ່ງມີລາຍຊື່ດັ່ງລຸ່ມນີ້:

ອຳນາດການປົກຄອງບ້ານ............, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ........................ ເປັນທີ່ປຶກສາກຸ່ມ.

1. ທ່ານ...........................................................ປະທານ ( ຮັບຜິດຊອບຊີ້ນຳລວມ )
2. ທ່ານ.........................................ຮອງປະທານ ຜູ້ທີໜຶ່ງ ຮັບຜິດຊອບການແບ່ງປັນນ້ຳ.
3. ທ່ານ..................................ຮອງປະທານ ຜູ້ທີສອງ ຮັບຜິດຊອບການຜະລິດກະສິກຳ.
4. ທ່ານ.............................................ຄະນະກຳມະການ ຮັບຜິດຊອບບັນຊີ - ການເງິນ.
5. ທ່ານ.......................................................ຄະນະກຳມະການ ຮັບຜິດຊອບຄັງເງິນສົດ.

**ມາດຕາ 2**: ມອບໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ .......................ສົມທົບກັບອຳນາດການປົກຄອງບ້ານ.........................ຊີ້ນຳກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ ໃຫ້ເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ.

**ມາດຕາ 3**: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າເມືອງ.................................**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**--------------------------**

ເມືອງ.......................................

ບ້ານ.......................................

ໂຄງການຊົນລະປະທານ.............................................

## ສັນຍາການຮ່ວມມືພັດທະນາ ແລະ ຄຸ້ມຄອງນໍາໃຊ້ລະບົບຊົນລະປະທານ

## ໂຄງການຊົນລະປະທານ..............................ບ້ານ.......................................

- ອີງຕາມ: ການສະເໜີຂອງກຸ່ມຜູ້ໃຊ້ນໍ້າໂຄງການຊົນລະປະທານ.......................ສະເໜີຫາຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ......................ເພື່ອຂໍອະນຸມັດການສ້າງຕັ້ງກຸ່ມຜູ້ຊົມໃຊ້ນໍ້າໂຄງການຊົນລະປະທານ.................. ບ້ານ.............................ເມືອງ...............................ແຂວງ.......................................

ເພື່ອຮັບປະກັນການ ຍອມຮັບຂອງກຸ່ມຜູ້ຊົມໃຊ້ນໍ້າ ແລະ ຮັບປະກັນການດ້ານເສດຖະກິດ-ສັງຄົມ ແລະ ເຕັກນິກການພັດທະນາລະບົບຊົນລະປະທານ ເພື່ອແນ່ໃສ່ການຜະລິດເຂົ້າໃຫ້ພຽງພໍສໍາລັບບໍລິໂພກໃນເຂດໂຄງການ. ສະນັ້ນ, ແຕ່ລະພາກສ່ວນໄດ້ຕົກລົງກັນດັ່ງຕໍ່ໄປນີ້:

ສັນຍາສະບັບນີ້ເຮັດຂຶ້ນ ທີ່ບ້ານ.....................ເມືອງ.............................ແຂວງ...................... ໃນວັນທີ........./........./................ ລະຫວ່າງ ຫ້ອງການກະສິກໍາເມືອງ........................ ກັບ ກຸ່ມ ຜູ້ຊົມໃຊ້ນໍ້າໂຄງການຊົນລະປະທານ.................................., ຮັບຮູ້ ແລະ ຢັ້ງຢືນໂດຍອໍານາດການປົກຄອງບ້ານ ...........................ເຈົ້າເມືອງ..............................., ພະແນກກະສິກໍາ ແລະ ປ່າໄມ້ແຂວງ ...................................ແລະ ກອງທຶນຫລຸດຜ່ອນຄວາມທຸກຍາກ ເມືອງ...........................................

**ມາດຕາ 1: ຈຸດປະສົງ**

1. ເພື່ອໃຫ້ປະຊາຊົນຮັບຮູ້, ມີສ່ວນຮ່ວມ ໃນການກໍ່ສ້າງ-ສ້ອມແປງ, ຄຸ້ມຄອງບົວລະບັດຮັກສາລະບົບຊົນລະປະທານນັບແຕ່ເລີ່ມຕົ້ນຈົນເຖິງຜົນສໍາເລັດ.
2. ເພື່ອໃຫ້ປະຊາຊົນມີຄວາມຮັບຜິດຊອບຕໍ່ການຄຸ້ມຄອງ ແລະ ການນໍາໃຊ້ ເຂົ້າໃນການຜະລິດ ໃຫ້ມີປະສິດທິພາບສູງສຸດ. ພາຍຫລັງມອບໂອນລະບົບຊົນລະປະທານໃຫ້ກຸ່ມເປັນຜູ້ຄຸ້ມຄອງ.
3. ເພື່ອໃຫ້ປະຊາຊົນ ໃນຂອບເຂດໂຄງການຊົນລະປະທານ ມີຄວາມສະມັກຄີ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໃນການບົວລະບັດຮັກສາລະບົບຊົນລະປະທານ.

**ມາດຕາ 2 : ສິດໜ້າທີ່ຂອງພະແນກກະສິກໍາ ແລະ ປ່າໄມ້ແຂວງ**

1. ເປັນຜູ້ຮ່ວມກັບໂຄງການພັດທະນາໂຄງລ່າງຊົນນະບົດພາກເໜືອ ເພື່ອ ສຶກສາຄົ້ນຄ້ວາ ສໍາຫລວດ - ອອກແບບເພື່ອກໍ່ສ້າງ-ສ້ອມແປງໂຄງການ, ກະກຽມແຜນການ ລວມທັງການສະໜັບສະໜູນກິດຈະກໍາຕ່າງໆໃນເຂດໂຄງການ.

2. ມີໜ້າທີ່ຮ່ວມມືການສຳຫລວດ-ອອກແບບເພື່ອກໍ່ສ້າງ-ສ້ອມແປງລະບົບຊົນລະປະທານ. ຖ້າວ່າການສຳຫລວດຫາກມີຜົນກະທົບຕໍ່ສະພາບແວດລ້ອມ, ດິນນາ ຫລື ຊັບສິນຂອງຜູ້ທີ່ໄດ້ຮັບຜົນປະໂຫຍດຈະຕ້ອງໄດ້ປຶກສາຫາລື ແລະ ແກ້ໄຂບັນຫາຮ່ວມກັນເພື່ອໃຫ້ຖືກຕ້ອງຕາມນະໂຍບາຍ ແລະ ຂໍ້ກຳນົດວ່າດ້ວຍການເວັ້ນຄືນທີ່ດິນ ແລະ ຍົກຍ້າຍສິ່ງກີດຂວາງ.
3. ຮ່ວມມືກັບໂຄງການເພື່ອໄດ້ກະກຽມຊ່ວຍດ້ານເຕັກນິກໃຫ້ແກ່ກຸ່ມເຊັ່ນ: ການຝຶກອົບຮົມ ແລະ ຊ່ວຍການພັດທະນາຄວາມອາດສາມາດໃຫ້ແກ່ກຸ່ມເພື່ອໃຫ້ເຂົາເຈົ້າສາມາດຄຸ້ມຄອງ, ບໍລິຫານ ແລະ ບົວລະບັດຮັກສາລະບົບຊົນລະປະທານພາຍຫລັງໂຄງການສຳເລັດ.
4. ຊ່ວຍກຸ່ມໃນການຕິດຕາມກວດກາ ແລະ ການປະເມີນຜົນກິດຈະກຳການກໍ່ສ້າງຕະຫລອດ ຮອດການກວດກາຄຸນນະພາບການສ້ອມແປງຝາຍ-ຄອງເໝືອງ. ມີໜ້າທີ່ໃນການປຶກສາຫາລື ແລະ ເຕົ້າໂຮມປະຊາຊົນເພື່ອແກ້ໄຂບັນຫາຕ່າງໆ.
5. ມອບ-ໂອນໂຄງການໃຫ້ກຸ່ມຫລັງຈາກກໍ່ສ້າງສຳເລັດ ເພື່ອໃຫ້ກຸ່ມຄຸ້ມຄອງບົວລະບັດຮັກສາ ແລະ ນຳໃຊ້ຕໍ່ໄປ.

**ມາດຕາ 3: ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ-ປ່າໄມ້ເມືອງ**

1. ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ກອງທຶນຫລຸດຜ່ອນຄວາມທຸກຍາກ ເພື່ອລົງເກັບກຳຂໍ້ມູນຕ່າງໆ ໃນການອອກແບບກໍ່ສ້າງ.
2. ປະສານງານໂຄງການຂັ້ນແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ເພື່ອພິຈາລະນາມີຄຳເຫັນຕໍ່ເອກະສານ ແລະ ບົດລາຍງານຕ່າງໆ.
3. ມີໜ້າທີ່ໃນການປຸກລະດົມໃຫ້ປະຊາຊົນໃຫ້ມີສ່ວນຮ່ວມເຂົ້າໃນຂະບວນການວາງແຜນ, ກະກຽມ ແລະ ຈັດຕັ້ງປະຕິບັດ.
4. ມີໜ້າທີ່ໃນການຊ່ວຍຈັດຕັ້ງຂຶ້ນທະບຽນກຸ່ມໃຫ້ເປັນສະມາຄົມ ພາຍຫລັງກຸ່ມໄດ້ຮັບການຝຶກອົບຮົມ ແລະ ມີຄວາມເຂັ້ມແຂງແລ້ວ.
5. ຕິດຕາມການກໍ່ສ້າງ ແລະ ການປະຕິບັດສັນຍາ
6. ຊຸກຍູ້ຕິດຕາມຄຸ້ມຄອງການນຳໃຊ້ລະບົບຊົນລະປະທານຂອງກຸ່ມເຂົ້າໃນການຜະລິດກະສິກຳ

**ມາດຕາ 4 : ສິດ ແລະ ໜ້າທີ່ຂອງສະມາຊິກກຸ່ມຜູ້ຊົມໃຊ້ນ້ຳ**

1. ກຸ່ມຜູ້ຊົມໃຊ້ນ້ຳຕ້ອງອຳນວຍຄວາມສະດວກໃຫ້ແຂວງ, ເມືອງ, ແລະ ໂຄງການໃນການເກັບ ກຳຂໍ້ມູນຕ່າງໆ ເພື່ອການວິໄຈ ແລະ ປະເມີນຜົນກະທົບດ້ານສັງຄົມ ເພື່ອຂຽນໂຄງການບົດລາຍງານການສຶກສາຄວາມເປັນໄປໄດ້ດ້ານເສດຖະກິດ-ເຕັກນິກເພື່ອສະເໜີໃຫ້ທະນາຄານ ພັດທະນາອາຊີຮັບຮອງ.
2. ປຸກລະດົມປະຊາຊົນໃຫ້ມີສ່ວນຮ່ວມເຂົ້າໃນຂະບວນການສຳຫລວດ-ອອກແບບ, ເຫັນດີ, ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນໄດ້ຮັບໂຄງການ.
3. ຍິນດີໃນການນຳໃຊ້ກົດລະບຽບຂອງກຸ່ມເພື່ອການຄຸ້ມຄອງລະບົບຊົນລະປະທານ.
4. ຄະນະກຸ່ມຜູ້ຊົມໃຊ້ນ້ຳຈະເປັນຜູ້ໄກ່ເກ່ຍກັບສະມາຊິກຂອງຕົນໃນເມື່ອການກໍ່ສ້າງໄປກະທົບຕໍ່ຜົນປະໂຫຍດ ແລະ ຊັບສິນຂອງສະມາຊິກ.
5. ກຸ່ມຜູ້ຊົມໃຊ້ນ້ຳຈະຕ້ອງເຂົ້າຮ່ວມການຝຶກອົບຮົມ, ປະຊຸມ ຕະຫຼອດຮອດການ ເຂົ້າຮ່ວມການຕິດຕາມ, ກວດກາປະເມີນຄວາມຄືບໜ້າຂອງແຕ່ລະໜ້າວຽກ ແລະ ເຂົ້າຮ່ວມທຸກກິດຈະກຳທີ່ກ່ຽວຂ້ອງກັບການພັດທະນາໃຫ້ກຸ່ມມີຄວາມເຂັ້ມແຂງ
6. ກຸ່ມຜູ້ຊົມໃຊ້ນ້ຳທຸກຄົນຕ້ອງຍິນດີຮັບເອົາໂຄງການພາຍຫລັງຈາກການກໍ່ສ້າງສຳເລັດ
7. ກຸ່ມຜູ້ຊົມໃຊ້ນ້ຳຈະຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ກົດລະບຽບຂອງກຸ່ມພ້ອມນັ້ນຈະຕ້ອງໄດ້ປ່ອນ

ບັດຄັດເລືອກເອົາຄະນະກຸ່ມຕາມກົດລະບຽບຂອງກຸ່ມ

8. ເພື່ອຮັບປະກັນໃຫ້ມີທຶນໃນການຄຸ້ມຄອງ-ນຳໃຊ້ ແລະ ບົວລະບັດຮັກສາລະບົບຊົນລະປະທານ, ຫລັງຈາກການກໍ່ສ້າງສຳເລັດ ກຸ່ມຈະຕ້ອງໄດ້ເກັບເງິນຄ່ານຳໃຊ້ນ້ຳ ແລະ ອື່ນໆ ຕາມທີ່ໄດ້ຕົກລົງກັນເພື່ອສ້າງເປັນກອງທຶນຂອງກຸ່ມ.

**ມາດຕາ 5 : ການປະຕິບັດສັນຍາ**

ສັນຍາສະບັບນີ້ ປະກອບດ້ວຍ 5 ມາດຕາ ແລະ ໄດ້ເຫັນດີເປັນເອກະພາບກັນຢ່າງຄັກແນ່. ທຸກພາກສ່ວນຈະຕ້ອງພ້ອມກັນປະຕິບັດຢ່າງເຂັ້ມງວດ. ເພື່ອເຮັດໃຫ້ໂຄງການໄດ້ຮັບຜົນສຳເລັດທັນກັບລະດູການຜະລິດ ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ທີ່ບ້ານ ......................., ວັນທີ...................

ນາຍບ້ານ..........                ປະທານກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ.....................

ເຈົ້າເມືອງ................                ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້

ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ເມືອງ......................................

ໂຄງການຍ່ອຍ.......................................... ເລກທີ_________/_________

ວັນທີ...................................

## ໃບສະເໜີຂໍຂຶ້ນທະບຽນເປັນສະມາຄົມຜູ້ໃຊ້ນ້ຳ

ຮຽນ: ທ່ານ ເຈົ້າເມືອງ....................................... ທີ່ນັບຖື.

ເລື່ອງ: ຂໍອະນຸຍາດສ້າງຕັ້ງສະມາຄົມຜູ້ຊົມໃຊ້ນ້ຳໂຄງການຍ່ອຍ.........................................................
ເມືອງ...............................ແຂວງ...................................................

- ອີງຕາມ: ຄຳສັ່ງແນະນຳຂອງນາຍຍົກລັດຖະມົນຕີ ເລກທີ່ 26/ ນຍ ລົງວັນທີ 16/2/1998. ( ວ່າດ້ວຍການ
ມອບໂອນໂຄງການຊົນລະປະທານໃຫ້ກາຍເປັນຂອງລວມໝູ່ຂອງປະຊາຊົນຢ່າງຂາດຕົວ )
- ອີງຕາມ: ຜົນຂອງກອງປະຊຸມຂໍສ້າງຕັ້ງ ແລະ ຄັດເລືອກປະທານ ແລະ ຮອງປະທານ ແລະ ຄະນະກຳມະການຜູ້ຊົມໃຊ້ນ້ຳໂຄງການຊົນລະປະທານ........................................, ຄັ້ງວັນທີ......../......../........... ທີ່ບ້ານ............................... ເມືອງ.........................ແຂວງ......................................

ເພື່ອໃຫ້ປະທານ ແລະ ຄະນະປະທານສາມາຄົມສາມາດເຄື່ອນໄຫວວຽກງານ ສົ່ງເສີມການກະສິກຳ, ລ້ຽງສັດ ແລະ ຄຸ້ມຄອງນຳໃຊ້ລະບົບຊົນລະປະທານໃຫ້ໄດ້ຮັບຜົນດີ ແລະ ຖືກຕ້ອງຕາມທິດທາງໂຍບາຍຂອງ ຂັ້ນເທິງ ດັ່ງນັ້ນກຸ່ມຜູ້ໃຊ້ນ້ຳໂຄງການຍ່ອຍ……………………..ບ້ານ............................... ຈື່ງຂໍສະເໜີມາຍັງທ່ານ ເພື່ອຂໍອະນຸມັດສ້າງຕັ້ງເປັນສະມາຄົມຜູ້ຊົມໃຊ້ນ້ຳຊົນລະປະທານ ໂຄງການຍ່ອຍ……………………………….

ຫວັງຢ່າງຍິ່ງວ່າ ທ່ານຈະພິຈາລະນາຕາມທາງຄວນດ້ວຍ .

ບ້ານ.........................., ວັນທີ...............................

**ໜ້າຫົວໜ້າກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ..............................**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------

ແຂວງ........................................

ເມືອງ.........................................

ເລກທີ ................../ຈມ

ເມືອງ...................;ວັນທີ..........................

# ຂໍ້ຕົກລົງ

## ຂອງເຈົ້າເມືອງໆລອງ

## ວ່າດ້ວຍການຂຶ້ນທະບຽນກຸ່ມຜູ້ນຳໃຊ້ນ້ຳໂຄງການຊົນລະປະທານ

## ...............................ບ້ານ...............................

- ອີງຕາມ: ການສະເໜີຂອງກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທະທານ, ສະບັບ ເລກທີ .................., ລົງວັນທີ ....................ວ່າດ້ວຍການສະເໜີຂໍຂຶ້ນທະບຽນເປັນສະມາຄົມຜູ້ຊົມໃຊ້ນ້ຳໂຄງການຊົນລະປະທານ ໃຫ້ຖືກຕ້ອງຕາມກົດໝາຍ.
- ອີງຕາມ: ການຄົ້ນຄວ້າເຫັນດີ ຂອງຫ້ອງວ່າການປົກຄອງເມືອງ........................, ລົງວັນທີ ..................

**ເຈົ້າເມືອງ........................ ຕົກລົງ:**

**ມາດຕາ 1**: ເຫັນດີໃຫ້ກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ.....................ເມືອງ.........................ແຂວງ.................... ຂຶ້ນທະບຽນເປັນກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ ຖືກຕ້ອງຕາມກົດໝາຍ.

**ມາດຕາ 2**: ມອບໃຫ້ອຳນາດການປົກຄອງທ້ອງຖິ່ນຈົ່ງປະສານສົມທົບກັບກຸ່ມຜູ້ຊົມໃຊ້ນ້ຳ ເພື່ອດຳເນີນການຈັດຕັ້ງປະຕິບັດຕາມພາລະບົດບາດ, ລະບຽບຫລັກການທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ.

**ມາດຕາ 3**: ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

**ເຈົ້າເມືອງ.....................................**

**ສຳເນົາສົ່ງ**:

- ກະຊວງກະສິກຳ-ປ່າໄມ້ 01 ສະບັບ
- ເຈົ້າແຂວງ 01 ສະບັບ
- ພະແນກກະສິກຳ-ປ່າໄມ້ແຂວງ 01 ສະບັບ
- ຫ້ອງການປົກຄອງເມືອງ 01 ສະບັບ
- ຫ້ອງການກະສິກຳ-ປ່າໄມ້ເມືອງ 01 ສະບັບ
- ສະມາຄົມຜູ້ຊົມໃຊ້ນ້ຳ 01 ສະບັບ

## ສຳລັບໂຄງຮ່າງການຈັດຕັ້ງຂອງກຸ່ມຜູ້ນຳໃຊ້ນ້ຳ

**ໂຄງການຊົນລະປະທານ...........................................................**




ໝາຍເຫດ: ຄະນະກຳມະການກຸ່ມຜູ້ຊົມໃຊ້ນ້ຳຊົນລະປະທານ ມີໜ້າທີ່ຮັບຜິດຊອບດັ່ງນີ້:

- ຄະນະກຳມະການ 1 ຮັບຜິດຊອບ ວຽກບັນຊີການເງິນ
- ຄະນະກຳມະການ 2 ຮັບຜິດຊອບ ວຽກຄັງເງິນສົດ